ຫ.ນ.ມ. 4694

# ພື້ນທ້າວຄັດທະນາມ

=x=x=x=x=x=x=x=x=x=x=x=

| | | |
|---|---|---|
| ບັດນີ້ | ຂ້າຈັກໄດ້ກ່າວເຣື້ອງ | ນິທານທ່ານຖູ້ແລງໄຂ |
| | ຕາມທີ່ໂບຮານລາວ | ເລົ່າມາເຮົາຮູ້ |
| ຍັງມີ | ນັກຄະເລດລ້ຳ | ລືເດດຣາວສວັນ |
| | ດູດັ່ງສຽງດົງດັ່ງ | ຊ່າລືທົ້ງຄາຍ |
| | ທົງພຣະນາມຕັ້ງ | ນະຄອນຫຼວງສີສະເກດ |
| ກໍຫາກ | ສຸກຢູ່ສ້າງ | ເມືອງບ້ານສຳຣານ |
| ອັນວ່າ | ເສນາຂາ | ຊາວພົນພວກໄພ່ |
| | ບໍ່ມີທຸກຍາກໄຮ້ | ສນຸກລົ້ນມ່ວນມົ່ນ |
| ອັນວ່າ | ທ້າວສິ້ນຄາ | ທາມ້າໄດ້ງ່າຍ |
| | ການຄ້າຂາຍບໍ່ມີລຳບາກແທ້ | ທ້າວສາວຢ່າງໃດ |
| ອັນວ່າ | ໂຣຄາໄຂ້ | ຫວັດໄຂ້ພຍາດໃຫຍ່ |
| | ກໍຫາກຫີນຫຼີກເວັ້ນ | ບໍ່ມາໄດ້ແຜ່ວພານ |
| ຄາວນັ້ນ | ຍັງມີຍິງແມ່ໝ້າຍ | ສາມີຕາຍແຕ່ຕັ້ງເດືອນສີ່ |
| | ບໍ່ເຄີຍມີຊູ້ໜ້ອຍ | ຄາຄາວຢູ່ພູດຽວ |
| | ມີແຕ່ຕົນດຽວສ້າງ | ຫາກິນພໍ້ກູມປາກ |

| | | |
|---|---|---|
| | ກໍບໍ່ທຸກຍາກແທ້ | ພໍລ້ຽງປາກໂຕ |
| | ຝູ່ງຫູມຍິງຊາວບ້ານ | ໃຈບານຮັກຍິ່ງ |
| | ເພາະວ່າລາວສລາດຮູ້ | ການຫູກທໍໄຫມ |
| | ຍິງຢູ່ໃນຄາເມ | ບໍ່ອາດທຽມທັນໄດ້ |
| ເຂົາກໍ | ປັນມາໃຫ້ | ຍິງຍາຍຫມາຍແກ |
| | ປັນເຄື່ງໃຫ້ | ມາຫມ້າຍຢູ່ກາງ |
| | ມາຊາວບ້ານ | ວົນວຽນຢູ່ທາງຂອກ |
| ພໍເມື່ອ | ເຂົ້າຖອກແລ້ວ | ຂຽວອ້ວນຄອງງ່າມ |
| | ອັນວ່ານາງງາມສ້ອຍ | ຍິງພອຍຫມ້າຍແກ |
| | ໄປທ່ຽວແລລ່ຳຢ້ຽມ | ມາເຂົ້າບໍ່ຂາດວັນ |
| | ຮ່ຽງຄ່ຳເຊົ້າ | ເຖົ້າໄປລ່ຳດູນາ |
| | ຕາຊອນແລ | ເບິ່ງຮູອັດນ້ຳ |
| ຫມ້າຍກໍ | ທຳພຽນສ້າງ | ມາດິບໍ່ໄດ້ຂາດ |
| | ພໍເມື່ອເຂົ້າຖອກແລ້ວ | ງານລົ້ນກວ່າເຂົາ |
| ແລ້ວຈຶ່ງ | ຮ້ອນຮອດໄທ້ | ເທວະຣາດຣາຊາ |
| ພຣະຈຶ່ງ | ຜາຍຕາທິບ | ສ່ອງຍານແຍງຢ່ຽມ |
| ກໍຈຶ່ງ | ເຫັນຍິງຫມ້າຍ | ທຳນາບໍ່ມີດູ |
| | ອິນກໍຢູ່ບໍ່ໄດ້ | ສະເດັດດັ້ນດ່ວນລົງ |
| | ຊົງປອມແປງຕົນໃຫ້ | ເປັນສັດທັນຂາວເຜືອກ |
| | ໄປທ່ຽວຢຽບເຂົ້າກ້າ | ມາຫມ້າຍມູ່ນກະຈາຍ |

| | | |
|---|---|---|
| ອິນກໍ | ແປງຮອຍໄວ້ | ໃນຜາຮອຍນີ່ງ |
| | ມີມິດບໍ່ນ້ຳແກ້ວ | ຂັງໄວ້ໃສ່ເຕັມ |
| | ແລ້ວຈຶ່ງກັບຫີນທ້ອງ | ສວັນທອງເທວະໂລກ |
| | ອິນຈຶ່ງທັນຕືວເຈົ້າ | ເທວະບຸດຕັດບອກ |
| ໃຫ້ທ່ານ | ລືງເກີດກ້ຳ | ຫີນຫ້ອງຫິບຄືນ ວ່າເນີ |
| | ເທວະບຸດເຈົ້າ | ຮັບອິນສາຣະພາບ |
| | ວ່າຈັກໃຫ້ລືງເກີດກ້ຳ | ນຳຫມ້າຍຍ່າຍາຍ |
| ພໍເມື່ອ | ແສງສ່ອງຟ້າ | ສູຣິເຍດເຮືອງມາ |
| | ຍາຍກໍບາຍເອົາເສື້ອ | ທັງສຽມຄອນກະຕ່າ |
| | ຖືພ້າໂຕ້ | ຍິງຫມ້າຍເລົ່າໄປ |
| | ເຖີງມາແລ້ວ | ຕົກໃຈຫມ້າຫຼາ |
| | ຫຼຽວເຫັນປ່າເຂົ້າລົ້ມ | ຕາຍນ້ອຍເຄື່ອງຄິງ |
| ຫມ້າຍວ່າ | ກັນກູແລ້ວ | ວອນຫຼັງມາທຳພາບ |
| ຫຼືແມ່ນ | ງົວຄວາຍຊ້າງ | ຫມູ່ຫມາເຂົ້າມາເຜົ່າ |
| | ຝູ່ງຫູມມາຂອກຊ້າງ | ຂວາຊ້າງກໍບໍ່ເປັນ |
| | ເປັນຜູ້ຕ່ານາກູແທ້ | ກັ້ນວ້ອນເຂັ້ນບາຍ |
| ຫມ້າຍກໍ | ມາບຟູ້ງ | ດູແລວເລາະໄປ |
| | ແລ້ວຈຶ່ງເຫັນຮອຍຊ້າງ | ຊຸດທະກັງຂັງຢູ່ |
| | ດູດັ່ງຫິວຫອດນ້ຳ | ຍາຍກົ້ມລູດກິນ |
| ຄາວນັ້ນ | ເທວະບຸດເຈົ້າ | ໂພທິຍານລືງເກີດ. |

ເອົາກຳເນີດຕັ້ງ　　ນຳໜ້າຍແມ່ຍາຍ
ຫຼາຍເດືອນລ້ຳ　　ທົ່ງຄັ້ນຖອມແກ່
ຈຶ່ງປະສູດລູກແກ້ວ　　ແນວທາວທ່າກຜູ້ດີ
ຖືຂັນໄຊສີແກ້ວ　　ຣິດທີແຮງອິນໂຜດ
ເປັນລູກເຈົ້າ　　ອິນໄທ້ປ່ອນລົງ
ຈຶ່ງຂະໜານນາມຕັ້ງ　　ຄັດທະນາມເປັນຊື່
ຂໍໃຫ້　ຈຳຈື່ໄວ້　　ໄປໜ້າຍປ່າຫຼົງ
ພໍເມື່ອ　ດົນນານໄດ້　　ຫຼາຍປີແຖມຖ່າຍ　　ມາແລ້ວ
ອາຍຸເຈັດຄູ້ຂວບເຂົ້າ　　ປີ້ກາວກາຍມາ
ອັນວ່າ　ບາຄານທາວ　　ວາຈາຕ້ານກ່າວ
ຈາຕໍ່ພຣະແມ່ເຈົ້າ　　ຄຳລະຫ້ອຍອ່ອນຫວານ
ວ່າໂອນໍ ແມ່ເຮີຍ ຂ້ອຍກໍເປັນຄົນໄດ້　　ດົນຊານຫຼາຍຂວບ
ບໍ່ເຫັນພໍ່ເກີດເກົ້າ　　ເຫງົາງ້ວງບໍ່ຊ່ວງເຫງົາ
ອັນວ່າ　ບິດາຂ້າ　　ໄປໃສ່ບໍ່ກັບຕາວ
ຫຼືຫາກ　ຕາຍແຕ່ຂ້ອຍນ້ອຍໆ　　ບໍ່ຫັນຮູ້ພໍ່ຕົນ
ເມື່ອນັ້ນ　ແມ່ກາວຕ້ານ　　ຈາລູກບຸດຕາ
ຈາຄຳຫວານ　　ຕໍ່ບາຄານທາວ
ອັນວ່າ　ແນວນາມເຊື້ອ　　ບິດາຕົນພໍ່ເຈົ້ານັ້ນ
ຫາກແມ່ນແນວນາມເຊື້ອ　　ກຸ້ນຊະໂລຂາວເຜືອກ
ແມ່ກິນນ້ຳບໍ່ແກ້ວ　　ມີ້ທອງລອດມານ

ແຕ່ນັ້ນ ບາຄານທ້າວ ວອນແມ່ມາດາ
ຂໍໃຫ້ພາໄປດູ ບ່ອນຮອຍສາມຊ້າງ
ຍາຍກໍ ຍາຍເອົາເສື້ອ ທັງສຽມຄອນກະຕາ
ພາລູກແກ້ວ ພະເນພ້າຍຄ່ອນໄປ
ເຖິງນ່າແລ້ວ ບຶມຶຮອຍແປ່ນເປົ່າ
ສອງແຈ່ມເຈົ້າ ເລີຍຍ້າຍຍ່າງໄປ
ໄປເຖິງຫ້ອງ ຫິມະພານໄພຍະມາດ
ກໍບໍ່ພານພົບພໍ້ ຮອຍຊ້າງທີ່ໃດ
ເຫັນແຕ່ ຮອຍເສືອຮ້າຍ ຄວາຍກະທິງງົວປ່າ
ຮອຍຄະນ່າຫມູເນື້ອ ເສືອຂ້ຽວໂຕ່ງລາຍ
ພໍງາຍແລ້ວ ຍາຍຫິວອິດອ່ອນ
ທັງເລົ່າຍ້ານລູກນ້ອຍ ຫິວລ້າເມື່ອຍແຮງ
ຍາຍກໍ ແລຫຼິ້ວປຽມ ເຫັນມັນເຄືອໃຫຍ່
ຍາຍກໍວາງເສື້ອໄວ້ ສຽມຫ້ຽນກີ່ນລົງ
ເຖົ້າກໍ ຈົງກົງຫັນ ເຫມິດແຮງແຕ່ອ່ອຍ
ເລີກບໍ່ພໍສ້ອກແຫ້ ຍິງຫ້ນາຍເມື່ອຍແຮງ
ເມື່ອນັ້ນ ບາຄານທ້າວ ບ່າຍສ້ຽມຈາກແມ່
ຫ້າວກໍ້ຫັນແກ່ງແກ້ ກຳ້ດາມກະຫນ່ຳສຽມ
ສຽງສ້ຽມທາວ ດັງປານຟ້າລັ່ນ
ສຽງສັ່ນລັ່ນກ້ອງ ປານຟ້າລ່ວງບິນ

ທ້າວກໍ ຊຸດຄວັດຂຶ້ນ ຍາມດຽວເລີກຍິ່ງ
ຂຸມນັ້ນ ຫຼຸມເລີກລ້ຳ ປະມານຮອຍວັດວາ
ທ້າວກໍ ຄືວເອົາດ້າມ ພຣະຂັນໄຊສີຟັນຟາດ
ຕັດຂາດນັ້ນ ເອົາໃຫ້ແມ່ຕົນ
ແມ່ກໍ ດັງໄຟຂຶ້ນ ເຜົາມັນຈູດຈີ່
ບິໃສ່ປາກລູກນ້ອຍ ທັງເຖົ້າກໍເລົ່າກິນ
ພໍເມື່ອ ກິນອີ່ມແລ້ວ ບາຄານກໍລົງກິ່ນ
ແມ່ກໍນັ່ງຢູ່ຖ້າ ບາທ້າວລູກຕົນ
ຄາວນັ້ນ ຍັງມີຍັກໂຂເຖົ້າ ຂີ້ມືອຶດຢາກ
ມັນກໍຫຸກຢາກແທ ສແວງດັ້ນທ່ຽວຫາ
ມັນຈິ່ງ ມາເຫັນເຖົ້າ ຕາຍາຍນັ່ງຢູ່
ມັນກໍຈັບເກດເກົ້າ ຍາຍເຖົ້າຟາດລົງ
ເຖົ້າກໍ ຄາດລາດລົ້ມ ກາຍປິ້ນຕາວຫງາຍ
ເຖົ້າກໍວາຍໆຮ້ອງ ບຸດຕາຕົນລູກ
ຝູງເພດຮ້າຍ ສິກູ້ມຂາແມ່ກິນ ລູກເຮີຍ
ເມື່ອນັ້ນ ບາຄານທ້າວ ໄດຍິນສຽງດູຫຼາກ
ທ້າວກໍຄາດລາດເຕັ້ນ ທະຍານຂຶ້ນລວດເຣວ
ຫຼຽວເຫັນຍັກກູ້ມຂາ ມາດາພຣະແມ່
ທ້າວກໍຈັບຮວດທົ້ມ ມວຍເກົ້າຍັກຜີ
ແລ້ວເລົ່າຄວາເອົາງ້າວ ສີຂັນໄຊຈັກຟັນຟາດ

| | | | |
|---|---|---|---|
| | ຍັກກໍກົວຢ່ອນຢ້ານ | ຍໍ້ມົວໃສ່ຫົວ | |
| ຂ້າຈັກ | ນຳມາໃຫ້ | ຂອງດີວິເສດ | |
| | ຂໍໂຜດຂ້າ | ປາງນີ້ຢ່າຟັນ | ພຣະເອີຍ |
| | ທ້າວໄດ້ຟັງຄຳຕ້ານ | ຍັກຂີນີເລີຍປ່ອຍ | |
| ມັນຈຶ່ງ | ເອົາມາໃຫ້ | ຊຸທກັງອັນປະເສີດ | |
| | ນ້ຳມັນທົດຄູເກົ້າ | ຄົນເຖົ້າກໍເລົ່າສາວ | |
| | ຫົວຂາວແລ້ວ | ຕົກດຳຄືເກົ່າ | |
| | ເຖົ້າແກ່ແລ້ວ | ເລີຍນ້ອຍຫນຸ່ມຄືນ | |
| | ຍັກຊ້ຳບົນບອກໃຫ້ | ຊູ້ມຄຳໃຫ້ທ່າວກື່ນ | ເອົາທ້ອນ |
| | ມັນຫາກມີມາກົ້ນ | ຄຳເຂັ້ມແທ່ງທອງ | |
| | ເປັນເພື່ອກູສົນສ້າງ | ສອງເຂືອແມ່ລູກ | |
| | ໄດ້ປູກຂໜົມໄວ້ | ທານໃຫ້ແກ່ເນມ | |
| | ຈິ່ງໄດ້ມາພົບພໍ້ | ທອງຄຳລ້ຳຄ່າ | |
| ອັນນຶ່ງ | ສອງໄດ້ຕັກເອົານ້ຳ | ໄປທົດໂພສີ | |
| | ທັງເຈດີ | ສີ່ຖານປະສົງສ້າງ | |
| | ຈຶ່ງໄດ້ນ້ຳເຕົ້າແກ້ວ | ຊຸທກັງມາສົ່ງໂສດ | |
| | ຫົດຜູ້ເຖົ້າ | ໃຫ້ກັບຝົນຕາວສາວ | |
| | ສອງກໍຖືເອົາໄດ້ | ຄຳຫຼາຍເຫຼືອມາກ | |
| | ກັບຕາວເຂົ້າ | ຄືນບ້ານດັ່ງຊັງ | |
| | ກໍບໍ່ອົມລະຫົ້ນຮ້ອນ | ສອງເຂືອແມ່ລູກ | |

ບໍ່ໄດ້ປຸກເຂົ້າກ້າ ນາສ້າງດົ່ງຫຼັງ
ຫຼາຍປີລ້າ ບາດານຂຶ້ນໃຫຍ່
ສຶບຫົກຂວບເຂົ້າ ຣະດູຕັ້ງຖ່າຍມາ
ເມື່ອນັ້ນ ພຍາຫຼວງເຈົ້າ ສເວີຍເມືອງສີສະເກດ
ບອກໃຫ້ສີເນດເຈົ້າ ທັນທ້າວດ່ວນໄປ
ທ້າວກໍ ໄປເຖິງແລ້ວ ຍໍມືທູນເກດ
ທູລແລງວາດເວົ້າ ທັນຂາເຣື່ອງໃດ ພຣະເອີຍ
ເມື່ອນັ້ນ ພຍາຫຼວງເຈົ້າ ພາທີທູລແລງຕອບ
ເຂົາວ່າບາຄານທ້າວ ຣິດທີແຮງເຫຼືອມາກ
ເຣົາຢາກ ເຫັນຣິດເຈົ້າ ຖອນຕານໃຫ້ເຣົາເບິ່ງ
ໃຫ້ຣິບຟ້າວ ດຽວນີ້ຢ່ານານ
ທ້າວກໍ ໂດຍຄຳເຈົ້າ ພຍາຫຼວງຕັດບອກ
ຖືກຖອດຕົ້ນ ຕານໄດພາບສອງ
ແລ້ວເຈົ້າ ພັນທຍອງຂຶ້ນ ເມື່ອບິນເທາະເມກ
ຕີນຖີບໄດ ຕານຕົ້ນບ່ວາງ
ຣາຊາເຈົ້າ ຫຼຽວເຫັນດູຫຼາກ
ກໍຫາກປາກບໍ່ໄດ້ ບາທ້າວຊາງແຮງ ແທ້ນໍ
ເປັນທີ່ຢຳແຢງແທ້ ຣິດທີບາແຮງຍິ່ງ
ຈຶ່ງໄດ້ຍອມມອບບ້ານ ເດມໃຫ້ແກ່ບາ
ຣາຊາທ້າວ ຄົດທະນາມນ້ອຍໜ່ຳ

ທ້າວບໍ່ມີເດືອດຮ້ອນ    ການແຫ້ຢ່າງໃດ
ທ້າວຈຶ່ງ    ເອົານ້ຳເຕົ້າ    ຣົດແມ່ມານດາ
ເພສາພົມ    ປົ່ງຄືນດຳລ້ວນ
ອັນວ່າ    ຜົວພົ່ນເມື້ອ    ສເນີສາວສິບສີ່
ທ້າວກໍ    ຍໍແມ່ໃຫ້    ຖວາຍໃຫ້ແກ່ພຍາ
ເປັນອັຄມະເຫສີເທົ້າ    ທຽມພຍາສີ່ສະເກດ
ບໍ່ເດືອດຮ້ອນ    ການຢ້າວຢ່າງໃດ
ພໍ່ເມືອ    ຫຼາຍປີໄດ້    ຫຼາຍເດືອນແຖມຖ່າຍ
ທ້າວກໍ    ໄປກາບໄຫວ້    ມານດາໃຫ້ແມ່ຕົນ
ຂ້າຈັກ    ໄປຕາມຊ້າງ    ກຸມຊະໂລຕາມພໍ່    ກ່ອນແລ້ວ
ຂໍໃຫ້ແມ່ແຈ່ມເຈົ້າ    ທົ່ງສ້າງສິບເມືອງ    ແມ່ເຮີຍ
ແມ່ບໍ່ເຂີນຄຳເຈົ້າ    ຂາຄ້ານຕົນລູກ
ບໍ່ກວ່າແຕ່ເຈົ້າ    ຂາທ້າວຮ່ຳຄນຶງ    ລູກເຮີຍ
ທ້າວເລົ່າ    ລາລົງຫ້ອງ    ມານດາພຣະແມ່
ຂຶ້ນຂາບໄຫວ້    ຣາຊາໄທ້ພຍາ
ຂ້າຈັກ    ລາສແວງດັ້ນ    ຕາມຫາຮອຍພໍ່
ຂໍພຣະມະຫາຣາດເຈົ້າ    ທົ່ງສ້າງສິບເມືອງ    ພຣະເຮີຍ
ຄັນວ່າ    ໄປເຫັນຊ້າງ    ຊິຄືນມາໂດຍຮີບ
ຄັນບໍ່ເຫັນພໍ່ຊ້າງ    ຕົວຂ້າບໍ່ຄືນ    ພຣະເຮີຍ
ພຣະກ່າວຕ້ານ    ຈາລູກບຸດຕາ

24 / VII
ຫ້າມຈຳໜ່າຍ

ເອົາແຕ່ສາຍຄໍກູ ຊິຄຶດເຫັນຄູນແກ້ວ
ພໍ່ບໍ່ຂືນອັດແລ້ວ ບາດານໃຫ້ຄຶດຫ່ວງ
ດັ່ນຫາກ ເປັນຫ່ວງຊ້າງ ໄປທ້ອນພໍ່ບໍ່ຂືນ ລູກເຮີຍ
ຄ້ອມວ່າແລ້ວ ລາຈາກບິດາ
ລາທັງປວງ ຫມູ່ນາງສນົມນ້ອຍ
ຂ້ອຍຈັກ ລາຈາກເຈົ້າ ເດີນຫາພຣະພໍ່
ຂໍໃຫ້ຝູງຫມູ່ເຈົ້າ ສູກສ້າງສໍ່າຮານ
ຄ້ອມສັ່ງແລ້ວ ບາບູ້ມຄາດເຄື່ອງ
ທົ່ງແຜ່ນຜ້າ ຜີ້ນກຽງແປກອິນ
ແລ້ວຈຶ່ງ ຈັບເອົາງ້າວ ພຣະອັ້ນໄຊຄຽນຄາດ
ບາກໍຜັນຜາດເຕັ້ນ ເມືອຟ້າເມກພະໂຍມ
ແລ້ວຈຶ່ງ ໄປເຖີງຫ້ອງ ອົນທະປັດຖານະຄະເຣດ
ທ້າວກໍທົ່ງຈອດປັ້ງ ຍັງທີ່ສາລາ
ບາດານລົງ ຈອດເຊົ້າຫາຍຮ້ອນ
ຍຸດຕິການັ້ນ ບາດານໄວ້ກ່ອນ
ຍັງບໍ່ແລ້ວ ເມືອຫ້າຈົ່ງຄອຍຟັງ ເຈົ້າເຮີຍ
ບັດນີ້ ຈັກກ່າວເຖີງຊາຍຫານກ້າ ຣິດທີແຮງແຂງຂນາດ
ຟັນຟາດກໍໃຜບານ ຖອນຂົ້ນແກ່ມາ
ມັນກໍ ດົງແກ້ຫານ ພັນຜູກຕິດກັນ
ພັນທະນັງຕີດ ລາກພວງພໍ່ຮ້ອຍ

| | | |
|---|---|---|
| | ຫມາຍຈັກເອົາມາລ້ອມ | ມາສວນຮົ້ວໄຮ່ |
| | ໄມ້ໄຜບ້ານ | ໄຜ່ປ່າຍຸ່ງຍາງ |
| ມັນກໍ | ເອົາສຽນຊຸດ | ກິ່ນມາທາງພົ້ນ |
| | ມັນເອົາທົ່ມງແກ່ໄມ້ | ທົ້ນແມ່ດິງມາ |
| ແລດູ | ດົນຊາຍຜົງ | ເຜົ່າຫູລື້ມົວກຸມ |
| | ທິດປີ້ກອງ | ສຽງຟ້າກໍບໍປານ |
| ຟັງສຽງ | ທົມງກອງ | ປີດທະພິໄຫວຫວັ່ນ |
| | ສຽງສັ່ນກ້ອງ | ປານຟ້າລ່ວງບົນ |
| ອັນວ່າ | ບາຄານທ້າວ | ລັດທະມານຫຼິງລ່ຳ |
| | ເຫັນຊາຍແຮງຂນາດກ້າ | ບາທ້າວຢາກທົດລອງ |
| ທ້າວກໍ | ຍອງແຍງເຂັ້ງ | ທາງຫຼັງຈັບຈ່ອງ |
| | ຊາຍຂນາດກ້າ | ດິງໄດ້ກໍບໍ່ໄປ |
| | ມັນກໍເອົາໃຈຕັ້ງ | ພຽນດິງລາກແກ່ |
| | ທົ້ບແກ່ງແກ້ | ຫນານຟັ້ງຂາດກະເດັນ |
| ມັນກໍ | ເຊຊອນລົ້ມ | ລົງດິນເກືອກຂີ້ຝຸ່ນ |
| | ຟັງສຽງຮ້າຍພຸ້ງ | ດັ້ງກອງສັ່ນເມືອງ |
| ແລ້ວຈຶ່ງ | ເປືອງພລົ້ນຂົມ | ເຫືອງກໍໄມ້ໄຜ່ |
| | ໃຈໂກດກ້າ | ແດງເຂັ້ມຂື່ນຂົມ |
| ມັນກໍ | ມອງເຫັນທ້າວ | ລັດທະມານດິງຈ່ອງ |
| | ຄິດຄຽດແຄ້ນ | ທະຍານປ້ຳກອດບາ |

| | | |
|---|---|---|
| | ຫົວງຈັກຈັບຕີຫົວ | ໃສ່ດິນໃຫ້ຕາຍມ້ຽນ |
| ແຕ່ນັ້ນ | ບາຄານທ້າວ | ຄັດທະນາມເລີຍຂົ່ມ |
| | ຈັບໄຫຼ່ເປື້ອງ | ສອງກ້ຳແດກລົງ |
| ມັນກໍ | ຫຼູບລົງພົ້ນ | ປັຖພີພຽງໄຫຼ່ |
| | ຂືນກໍຂືນບໍ່ໄດ້ | ບາທ້າວຂົ່ມລົງ |
| ມັນກໍ | ຍໍມືໄຫວ້ | ເຫີນອົວທູນເກດ |
| | ຂໍໂຜດຂ້າ | ປາງນີ້ຢ່າທຳ ພຣະເຮີຍ |
| ແຕ່ນັ້ນ | ບາຄານທ້າວ | ຄັດທະນາມເລີຍປ່ອຍ |
| | ຍົກໂທດໃຫ້ | ອະພັຍໄວ້ບໍ່ກະທຳ |
| | ຈຳເດີ ບຸນຂອງທ້າວ | ພະລັງຫຼາຍຣິດທິມາກ |
| ທ້າວໄດ້ | ບໍຣິຈາກເຂົ້າ | ເຈັດທໍ່ເປັນທານ |
| | ທັງໄມ້ເຈັຽເຈັດກຳ | ມັບພໍປະມານຮ້ອຍ |
| | ເອົາທານໃຫ້ | ສັງໂຄເຈັດຮູບ |
| | ບູນສົ່ມອງນ້ອງນາວ | ບາທ້າວຈົ່ງແຮງ |
| | ພໍຄາວແລ້ວ | ບາຄານຍົວຣະຍາດ |
| | ຊາຍຂນາດກ້າ | ຕາມທ້າວບໍ່ໄລ |
| ແລ້ວຈຶ່ງ | ໄປເຖິງບ້ານ | ຄາເມອັນນຶ່ງ |
| | ຍັງມີຊາຍແຮງລົ້ນ | ສເມີກັນໂດຍພາກ |
| | ມັນກໍລາກແກ່ໄມ້ | ກຽວນໄດ້ມາກຫຼາຍ |
| | ມັບອ່ານໄດ້ | ຮ້ອຍນຶ່ງເປັນປະມານ |

| | | |
|---|---|---|
| | ນຳທາງເຖິງ | ທີ່ບາເຊົາຢັ້ງ |
| ອັນວ່າ | ບ້າຄານທາວ | ຫຼຽວດູເຫັນຕ່າງ |
| | ທ້າວກໍນຶກສລາງ | ເຫັນເຈົ້າແກ່ກວຽນ |
| | ທ້າວຈື່ງຍ່ອງຮຽງເຂົ້າ | ທາງຫຼັງຈັບຈ່ອງ |
| ກວຽນກໍ | ຢູດຢູ່ຢັ້ງ | ຄາວນັ້ນບໍ່ໄປ |
| | ສູດທີ່ດຶງຮູ້ແລ້ວ | ໝົດແຮງໜັງຂາດ |
| ມັນກໍ | ງວກພູນພ | ເຫັນທ້າວຈ່ອງດຶງ |
| | ມັນກໍໂກທີາເຂັ້ນ | ທະຍານໄປໂດຍດ່ວນ |
| | ຄາດລາດປ້ຳ | ບ້າທາວກອດຂາ |
| ຫວັງຈັກ | ກູ້ມຕີ້ຂາ | ບ້າບູນບໍ່ມີປ່ອນ |
| | ທາວກໍຈັບໄຫຼ່ເປື້ອງ | ຊາຍກາແດກລົງ |
| ມັນກໍ | ໂອຍຊູ້ຮ້ອງ | ຍໍມືສູດສອກ |
| | ຂ້າຂໍຊີວິດໄວ້ | ຄາວນີ້ຢ່າກະທຳ |
| ຂ້ານ້ອຍ | ຂໍເປັນຂ້າ | ທ້າສາໃຊ້ຊວງ |
| | ບໍ່ໃຫ້ພຣະເດືອດຮ້ອນ | ປະການແທ້ເບື້ອງໃດ |
| ແຕ່ນັ້ນ | ບ້າຄານທ້າວ | ຄັດທະນານອົດໂທດ |
| | ຜາຍໂຜດໃຫ້ | ເປັນໃຊ້ຊ່ວງຕີນ |
| | ບູນຂອງທ້າວ | ຊາຍແຮງຣິດທິມາກ |
| ມັນກໍ | ຍໍຍົກໃຫ້ | ເຮືອນຢ້າວເພື່ອທານ |
| | ຍໍມອບໃຫ້ | ຖວາຍແກ່ສົງໂດ |

| | | |
|---|---|---|
| | ເປັນທີ່ອາສັຍເຊົາ | ເພື່ອບຳເພັນສ້າງ |
| ອັນນຶ່ງ | ກັນຂອງເຈົ້າ | ສອງເຂືອແຕ່ຄາວກ່ອນ |
| | ຊາດກ່ອນກູ້ | ພ້ອນສາງສິບສິ້ນ |
| ບອດເປັນ | ສາມເນນນອຍ | ພຽນສຶງທຸກເຊົ້າຄ່ຳ |
| | ຄຶດທະນານເປັນຜູ້ຄ້ຳ | ອາຈານເຈົ້າຈຶ່ງສອນ |
| ອັນນຶ່ງ | ສອງກໍໄປຂຸດມາງ | ເພຂວງອາຣາມ |
| | ຫາເງິນຄຳ | ທີ່ອາຣາມກວ້າງ |
| ກັນຈິ່ງ | ຕາມນ້ຳກັນ | ສອງເຂືອຫຼຸບຫຼີ່ມ |
| | ນົ້ມຈາກບ້ານ | ບາຫາວໂຜດຄີ້ນ |
| ເມື່ອນັ້ນ | ສາມເຂືອເຈົ້າ | ຄຶດທະນານເປັນໃຫຍ່ |
| | ພາກັນຍົວຣະຍາດຍ້າຍ | ໄປຫນ້າເຕື່ອນຄາວ |
| | ເຂົ້າປ່າໄມ້ | ເຊື້ອໄລ່ບົງຊ້າງ |
| | ມີຫັງຖົວຊ້າງກົດ | ແບກມູ້ນເຂົາຄູນ |
| ຫຼຽວເຫັນ | ຂຸມຄຸມໄມ້ | ໃນໄພກວ້າງໃຫຍ່ |
| | ສາມເຂືອເຂົ້າປ່າໄມ້ | ໄພກວ້າງລ່ວງເລີຍ |
| ແລ້ວຈິ່ງ | ໄປເຖິງຫ້ອງ | ຫິມະພານໄພຍະມາດ |
| | ພາກັນຍົວຣະຍາດຍ້າຍ | ເຖິງນັ້ນຂອດເຊົາ |
| ທັ່ນນັ້ນ | ຍັງມີຜີເຜດຮ້າຍ | ຂຸ້ນຊຸ່ຈຳນາຍ |
| | ມັນກໍມົວເມົາຂຸດ | ກີ່ນູ່ບໍ່ມີແລ້ວ |
| | ຕົວໃຫຍ່ຮ້າຍ | ປະມານທໍ່ພາຍສາມ |

ຫາງໃຫ່ຍຍາວ ແຫກປູນເປັນດ້າມ
ຄົນຊິວັດແຫກໄດ້ ປະມານເກົ້າສອກປາຍ
ຂວາຍຄວັດອົ້ມ ເປັນພູຫນ່ວຍນຶ່ງ
ໃຫ່ຍມາກລົ້ມ ເຫຼືອດາມລື່ມປະມານ
ບາຄານຫ້າວ ຄົດທະມານຂານບອກ
ໃຫ້ອ້າຍຊາຍລາກໄມ້ ໄປແຫ້ຫ່ຽວພລັນ
ຫັກເອົາຂາມັນມາ ຂົ້ວກິນກັບເຂົ້າ
ຖືໄມ້ຮອຍ ກໍເດີນດັ້ນດ່ວນໄປ
ກໍເດີນເຂົ້າ ຄວາເຄັຽຈັບແຄ່ງ
ຈິນາຍດິດແກ່ງແກ້ ກະເດັນຟັ້ງຊື່ອໄກ
ກະປະມານໄດ ພັນວາເປັນຂນາດ
ຕຶກຟາກຟັ້ງ ຕາຍມ້ຽນມອດຊີວັງ
ຫ້າວກໍ ຄ້ອງຄອຍຖາ ຄອຍດ້າຍແລງເປົ່າ
ອຶດຢາກເຂົ້າ ຫາງຫ້ອງກໍຈີ່ນມາ
ຈິງເຫັນ ອ້າຍກວຽນຮ້ອຍເຫຼັ້ມ ລອງແລ່ນໄປດູ
ຫຼືມັນຫນີໄປໃສ ແລ່ນໄວດຽວນັ້ນ
ແຕ່ນັ້ນ ບັກກວຽນຮ້ອຍເຫຼັ້ມ ເລວພລັນເລີຍແລ່ນ
ຣິບດ່ວນດັ້ນ ພລັນຟ້າວບໍ່ນານ
ເຖີງແລ້ວ ຍ່ອງໆເຂົ້າ ຫາງພັງຊີຈັບແຄ່ງ
ຈິນາຍດິດປົ້ງ ເຖີງເທົ້າຮອດກັນ ພູ້ນແລ້ວ

ມັນກໍ ໄປນອນຊ້ອນ ຊາຍແຮງຜູ້ຕົກກ່ອນ
ໜ້າຈະອອນແຫ້ ຕາຍມ້ອຍບໍ່ຕິງ
ທ້າວກໍຄອຍຄອງຖ້າ ສອງເຂືອບໍ່ກັບຕ່າວ
ຮູ້ວ່າເປັນເຫດຮ້ອນ ສັ້ງແຫ່ຊາງບໍ່ມາ
ບາກໍໄປຕາມເຈົ້າ ສອງເຂືອເຖິງທີ່
ເຫັນແຕ່ ຜີເຜດຮ້າຍ ຈິນາຍໂມ້ຄວັດຮູ
ທ້າວກໍຄວາຫັກໄດ້ ຂາຈິນາຍແບກແລ່ນ
ແລ້ວຈຶ່ງ ໄປຊອກຄົ້ນ ສອງເຈົ້າທີ່ຕາຍ
ກໍຈຶ່ງໄປພົບພໍ້ ສອງເຂືອນອນຢູ່
ຕາຍນອດມ້ຽນ ຄຶງເຈົ້າເລົ່າເຢັນ
ບາກໍ ບາຍເອົານ້ຳ ຄັນທີສົງໂສດ
ຫົດໂຜດໃຫ້ ສອງເຈົ້າກໍເລົ່າຄືນ
ຄືນມາແລ້ວ ຜິວພັນສເມີ່ຫຼ
ເໜືອນດັ່ງອິນແຕ່ງໃຫ້ ລົງໃຕ້ມະນຸດຄືນ
ຍຸດຕິກາບັ້ນ ຄິດທະນາມເດີມປະເທດ
ຍັງບໍ່ແລ້ວ ຫຼາຍເຣື້ອງໃຫ້ຮ່ງຟັງ
ບັດນີ້ ຈັກກ່າວເຖິງຍັກຖ່ອຍຮ້າຍ ຕົນຊື່ນີ
ມັນຈັກມາທຳເວນ ແກ່ບາບໍ່ມີແລ້ວ
ມັນນັ້ນ ແປງປັນໃຫ້ ເໝືອນລັດສີຊີປ່າ
ນັ່ງສາລາເຄົ້າເມົ້າ ຜີເຖົ້າຍັກໂຂ

ທຳຕົນໃຫ້      ເໝືອນທົງທົມລຳສູດ
ຕິດພຣະເພີງແຜ່ໄຫ້ວ      ພີເຖົ້າແມ່ພາມ
ນະມັສການພ້ອມ      ບູຊາທ່ຳທາ
ອັນວ່າ ບາບ່າວທ້າວ      ເຈົາຢັ້ງພັກແຮງ
ແລ້ວຈື່ງເວົ້າຕໍ່ເຈົ້າ      ສອງເຂືອຖແລງຂ່າວ
ສູຣິບໄປທູນໄຫ້ວ      ພຣະຣັດສີຕົນປະເສີດ
ຂໍເອົາໄຟແຈ່ມເຈົ້າ      ພາຍພູ້ມທີ່ໄກ
ເອົາມາທຳຄົວເຂົ້າ      ຫຼວງແກງກອຍລາບ
ກິນໃຫ້ຫາຍສ່ວາງຮ້ອນ      ກະຫາຍແລ້ວຈື່ງຄ່ອຍໄປ
ສອງກໍ ໄປເຖີງເຈົ້າ      ຣັດສີນີພີເຜດ
ຕາມທີ່ສັງເກດໄດ້      ວ່າເປັນໄຫ້ພໍຣັດສີ
ຈື່ງໄດ້ ອັນຊະລີໄຫ້ວ      ຂໍໄຟນຳທ່ານ
ພີເຜດຮ້າຍ      ຈື່ງຈາຕ້ານຕອບຖແລງ
ເອົາກໍເອົາໄປທ້ອນ      ທັງສອງໃຫ້ເອົາຖ່ານ      ມັນເນີ
ຢ່າໄດ້ ຈັບຕ່ອຍດ້ວນ      ໄຟນັ້ນຊິມອເເສັຍ
ທັງສອງກົ້ນ      ຊຸເອົາໄຟຖ່ານ
ອັນວ່າ ຣັດສີເຖົ້າ      ຍັກຂີນີປອມເພດ
ມັນກໍຈັບລາຄທົ້ນ      ຊ້ວນໄດ້ລອບງຳ
ບາຍເອົາໄດ້      ສຸ່ມເຫຼັກໂດຍຣິບ
ກ່ວມແຈມເຈົ້າ      ສອງທ້າວເຣັ່ງຣອວ

| | | |
|---|---|---|
| | ຫັກຂາໄວ້ | ສເນີຫັກຂາຂຽດ |
| | ມັບແມບໄວ້ | ໄປຊ້ອນເຊື່ອງດີ |
| ທ້າວກໍ | ຄອຍຄອງຖາ | ສອງເຂີອບໍ່ກັບຕ່າວ |
| | ຫຼືວ່າເປັນເຫດຮ້ອນ | ປະການແທ້ສິ່ງໃດ |
| ທ້າວກໍ | ໄປຫຼິງຢ້ຽມ | ເຫັນສາລາແປນເປົ່າ |
| | ເຫັນແຕ່ຜີເຜດເຖົ້າ | ເນົາຢັ້ງບໍ່ຫນີ |
| | ບາກໍຍໍມືຂົ້ນ | ຂໍໄຟດອນທ່ານ |
| ມັນກໍ | ຫົວຍູ້ມເປີ້ຍ | ເອົາທ້ອນບໍ່ວ່າສັງ |
| | ມັນກໍຄວາເອົາໄດ້ | ສຸ່ມເຜັ້ກງວມຄອບ |
| ທ້າວກໍ່ | ຖິບແກ່ງແກ້ | ເຫຼັກການູ້ມກະຈາຍ |
| | ທ້າວກໍຄວາຈັບໄດ້ | ຮັດສີນຜີເຜດ |
| | ຊັກແກ່ຫົ້ມ | ຜີເຖົ້າຕ່າວຫຼາຍ |
| | ບາຍເອົາງ້າວ | ສີຂັນໄຊຈັກຟັນຟາດ |
| ມິງມົ້ | ຫິນຊະຊາດແທ້ | ສອນໄດ້ກໍບໍ່ເອົາ |
| | ມິງບໍ່ຮູ້ | ວ່າກູມີຮິດທີເດດ |
| | ກູໄດ້ສອນສິ່ງໃຫ້ | ມິງມົ້ບໍ່ຈຳ |
| ມິແຕ່ | ມິງກູ້ມຂາ | ມານດາຕົນແມ່ ກູມັ້ນ |
| | ກູຍັງອິດໂຫດໄວ້ | ບໍ່ຟັ້ນຂາແກ່ມິງ |
| | ມັນກໍຍໍມີໄຫ້ວ | ເຫມືອຫົວທູມເກດ |
| | ທານໂທ້ດທອນ | ຂໍເພິ່ງຊີວິດ |

| | | |
|---|---|---|
| ຂໍໃຫ້ | ພຣະໂພດຂ້າ | ເປັນເທື່ອທີ່ສອງ |
| | ຂ້າຈັກນໍາມາໃຫ້ | ຂອງດີອັນປະເສີດ |
| ທ້າວໄດ້ | ຟັງພາກຖ້ອຍ | ຜີຕານເລົ່າວາງ |
| | ມັນບໍ່ພາງຄໍາຕ້ານ | ເອົາພິນຖວາຍບາດ |
| ກັບທັງ | ໄມ້ຄ້ອນເທົ້າ | ຍໍໃຫ້ແກ່ບາ |
| ໄມ້ມັ້ນ | ດັ່ງວ່າຍໍກົກຊຸ້ | ສັກຕາຍນໍຣະມິ່ງ |
| | ປາຍປິ່ນຊຸ້ | [illegible]າມື່ນຕ່າວດີ້ນ |
| ພິນມັ້ນ | ດີດສາຍເຄົ້າ | ສຽງດັ້ງກ້ອງສນັ່ນ |
| | ຂ້າເສີກຍໍາບ່ອນຍ້ານ | ບໍ່ຫ້ານກ່າຕສຽງ |
| ຝູງໝູ່ | ເທພທາວ | ໄດ້ຍິນສຽງສຽວປາບ |
| | ສັພສັດຊາບຍ້ານ | ກົວຍ້ານທຸກປະການ |
| | ສາຍສອງມັ້ນດີດເອົາແກ້ວ | ສູ້ວັນມາກເງີນຄໍາ |
| | ທັງອາພອນ | ແຜນແພ້ພິ້ນຜາ |
| | ເງີນຄໍາແກ້ວ | ທັມມະໂຮງລີວລາກ |
| | ຕາມມະໂນນຶກນ້ອມ | ປະສົງຈຸ້ນສິ່ງໃດ |
| | ສາຍສາມມັ້ນ ດີດຣຽກຮອງ | ຝູງໝູ່ເສນາ |
| | ໄຫຼມອງມາ | ແວດຣະວັງຂວາຊ້າຍ |
| | ເປັນເພາະບູນບາທ້າວ | ລົດທະນານແຕ່ຊາດກ່ອນ |
| | ທ້າວໄດ້ຍໍທານໃຫ້ | ເຫຼັກດີຕີຍອດທາດ |
| | ຈຶ່ງໄດ້ໄມ້ຄ້ອນເທົ້າ | ດອນເຖົ້າຍັກພິ... |

| | | |
|---|---|---|
| ອັນນຶ່ງ | ຍັງໄດ້ຕິດຕໍ່ຕັ້ງ | ອົງຄູລີນິ້ວມືອົງພຣະພຸທຮູບ |
| | ຈຶ່ງໄດ້ພິມຂນາດກ້າ | ບູນທາວແຕ່ຫຼັງ |
| | ພໍແຕທ້າວໄດ້ແລ້ວ | ລາຈາກອິນີ |
| | ພາສອງຊາຍ | ດູ່ງເດີນໄປຫນ້າ |
| | ສາມເຂືອເຂົ້າ | ດົງຟອງເລີຍລ່ວງ |
| | ໄດ້ສິບຫ້າຂວບເຂົ້າ | ແລງເຊົ້າຈຶ່ງເຊົາ |
| | ມາຈັກລາເຖິງເທົ້າ | ເມືອງບູຣີນັກຄະເຣດ |
| ມັນກໍ | ເປັນເຫດຮ້ອນ | ເມືອງບານວຸ່ນວາຍ |
| | ງົວຄວາຍຕາຍຫມົດສ້ຽງ | ບໍ່ມີເຫຼືອແປນເປື່າ |
| | ຫມູຫມາເປັດອູດເອົ້າ | ຕາຍລົ້ນບໍ່ເຫຼືອ |
| ເພາະວ່າ | ງູຊວງຮ້າຍ | ລົງກິນກ້ຽງເປົ່າ |
| | ຝູງສົ່ມຫມູ່ມເຫົງ້າ | ສິງຄະເຈົ້າກໍ່ເລື່າຕາຍ |
| ເຫຼືອແຕ່ | ນາງງາມສອຍ | ຄຳກອງທິບພຣະຍອດ |
| | ເປັນລູກແກ້ວ | ພຍາເຈົ້າເຂື່ອນແຂວງ |
| | ພຣະກໍເອົານາງໄວ້ | ໃນກອງລົຢູ່ |
| | ຝູງຫມູ່ເຂົ້າແລະນ້ຳ | ໂຮມໄວ້ໃຫ້ແກ່ນາງ |
| ປາງນັ້ນ | ໂພທິຍານເຈົ້າ | ສາມເຂືອເດີນຮອດ |
| | ເຫັນແຕ່ເມືອງເປົ່າຮ້າງ | ສູ່ນເສົ້າງຽບເຫົງາ |
| ທ້າວກໍ | ແລເຫັນແລ້ວ | ໃນພຣະໄທຄິດຮ່ຳ |
| ຮ້ອຍທີ່ | ເປັນເຫດຮ້ອນ | ເມືອງບ້ານວຸ່ນວສຍ |

ທ້າວກໍ ໄປເຖິງຫ້ອງ ໂຮງຫຼວງພັກເມື່ອຍ

ຫຼ້ຽວພູມພົ້ ແປນກຽງຊູແນວ

ອັນວ່າ ສອງສະຫາຍແກ້ວ ຊາຍແຮງເລາະລຽບ

ຕາມຂ່ວງຄູ້ມ ເມືອງເຈົ້າເປົ່າແປນ

ມີແຕ່ ຝູງໝາກໄມ້ ນົ່ມວງມາວການ

ຕາມສະຖານແຖວເມືອງ ບໍ່ມີຄົນຄ້າງ

ຈຶ່ງໄດ້ພາກັນເຂົ້າ ອາຣາມຫຼວງວັດໃຫ່ຍ

ທີ່ນັ້ນ ເປັນວັດຮ້າງ ສິງສ້າງບໍ່ມີ

ມີແຕ່ ເພຣິລ້ຳ ກອງຫຼວງແຂນຢູ່

ຄູຄັ້ງກອງໃຫ່ຍລ້ຳ ແຂນໄວ້ທີ່ສູງ

ແຕ່ນັ້ນ ບາຄານທາວ ຊາຍແຮງແຂງຂນາດ

ຄາດລາດຂົ້ນ ມີທົນຕ່ອຍຕີ

ອັນວ່າ ນາງງາມສ້ອຍ ຄຳກອງທິພຍອດ

ວ່າແມ່ນຜີປ່າເປົ້າ ຊວງເຊົອຊາດງູ

ນາງຈຶ່ງ ກ່າວວ່າມິງຊູ້ກິນກໍກິນທ້ອນ ປ່າມາລອນລວງຫຼອກ ງູເຮີຍ

ກູຫາກ ມ້ຽມກະດູກໄວ້ ຄອງຖ້າແຕ່ມື້ງ ຫັ້ນແລ້ວ

ທ້າວໄດ້ຍິນຄຳຕ້ານ ສຽງຄົນດູຫຼາກ

ເລີຍເລົ່າ ກັບຂາບໄຫວ້ ຄືນເວົ້າຕໍ່ນາຍ

ຂ້ານ້ອຍໄປຕີ້ຕອງ ກອງຫຼວງດັງສນັ່ນ

ປາກຢູ່ຊັ້ນ ຄືແທ້ດັ່ງຄົນ

| | | |
|---|---|---|
| | ເຊີນພຣະໄປຫຼິ້ງຢ້ຽມ | ຟັງງູໃຫ້ແຈ້ງແຈບ |
| ເມື່ອນັ້ນ | ຄົດທະນາມທ້າວ | ຟັງເຂົາຖແລງເຫດ |
| ທ້າວກໍ | ຍົວຣະຍາດຍາຍ | ເລີຍຂຶ້ນສູ່ທໍ |
| | ທ້າວຈຶ່ງຍໍມືຂຶ້ນ | ຕີກອງຕຶ້ມຕຶ່ງ |
| ນາງກໍ | ເລີຍເລົ່າຕ້ານ | ຖແລງເອີ້ນອອກມາ |
| | ນິງສັງມາຕ່ອຍຕ້ອງ | ຕີກອງຫຼ່າຍເລົ່າງູເຣີຍ |
| ຄືນນີ້ | ອໍກິນກໍກິນເສັຍທອນ | ທະລອນກູ້ລຳບາກ |
| | ດັບຊາດນີ້ | ເມື່ອໜ້າມາຊູ້ສ່ວາງໃຈ |
| ແຕ່ນັ້ນ | ຄັດທະນາມໃດ້ | ຖແລງຈາຕານຕອບ |
| ພີ້ນ | ບໍ່ແມ່ນພີ່ປົກບູເປົ້າ | ແນວເຊື້ອຊາດງູ ນ້ອງເຣີຍ |
| | ພີ້ນເນົາໃນທ້ອງ | ນະຄອນຫຼອງສີສະເກດ |
| | ຮູ້ເຫດນ້ອງ | ພະເນພາຍພານມາ |
| | ບາກໍຍໍມືຕ້ອງ | ສາຍພິມເລີຍຄິດ |
| | ສຽງມ່ວນແມ້ງ | ນາງນ້ອຍຊອບພຣະໄທ |
| | ໃນໃຈນາງ | ເມື່ອຍຕົນຫິວໄຫ້ |
| | ຄນິງເຖີງໄຫ້ | ມານດາພໍ່ແມ່ |
| | ເໜືອນຄນະໂຄດເຊື້ອ | ເມືອງບ້ານບໍ່ອາຍ |
| | ທ້າວກໍຍໍເອົ້າງາວ | ສີອົ້ນໄຊສິນປາດ |
| ກໍຈຶ່ງ | ເຫັນມາດນ້ອຍ | ເນົາລຢູ່ກອງ |
| | ບາກໍຊວງມື້ອູບ | ກູມເອົາມາກອດ |

ທິພຍອດແກ້ວ ກົວຢ້ານສິ້ນສາຍ
ຈັກຊິເປັນຕາຍແທ້ ທັງດິ້ງຢ້ານສິ້ນ
ໃຈສະບັ້ນ ທັງໄຫ້ຮຽງຫາ
ທ້າວກໍ ເອີ້ນນາງຂຶ້ນ ເທິງຫໍ້ຜາສາດ
ຈຶ່ງຖແລງວາດເວົ້າ ຈາແຈງເຫດຜົນ
ເປັນສັງແທ້ ເມືອງຫຼວງຈຶ່ງມຸດມອດ
ຂໍໃຫ້ ເລົ່າເຫດໃຫ້ ຖແລງອາຍຢາອຳ
ເມື່ອນັ້ນ ນາງກໍເລົ່າພາກຖ້ອຍ ຕາມເຫດຄຳມີ
ອັນຊູລິຫູນ ນິ່ງຈາປະນົມນິ້ວ
ເດີນຫິນນັ້ນ ນົວແສງສູຣິເຍດ ພີ່ເອີຍ
ພຣະອາທິດທ່ານເສົ້າ ພຣະຈັນເຈົ້າບໍ່ສ່ອງແສງ
ອັນວ່າ ຣາຕິຂ້ອນ ວັນຄືນບໍ່ແຖມຖ່າຍ
ຮ່ຽງຄ່ຳເຊົ້າ ມົວເສົ້າຢູ່ເລີງ
ຄາວນັ້ນ ງູຊວງຟ້າ ລົງມາຂະນັນເນກ
ລູ່ຫົ້ງລົມ ເມືອງກວາງຍ້າກຫຼາຍ
ມັນກໍ ມາກິນສຽງ ງົວຄວາຍເປັດໄກ່
ທັງຫມູ່ພົ້ນໄພນ້ອຍ ງູຂ້າບໍ່ເຫືອ
ເຫຼືອແຕ່ດິນດຽວຂ້າ ພຣະບິດາເອີ້ນເຊື່ອງ
ຈຶ່ງບໍ່ເປັນເບື້ອງທ້ອງ ຊວງເຊື້ອຊາດຍູ
ຄາວນີ້ ຂໍໃຫ້ນີ້ໂຫດນ້ອງ ພົ້ນທີ່ຄວາມຕາຍ ແດ່ທ້ອນ

ຫຼືວ່າບູນພາຍຫຼັງ ບໍ່ລືມຄຸນແກ້ວ

ເມື່ອນັ້ນ ທາວໄດ້ຟັງຄຳຕາມ ສົງສານນາງບອກ

ເປັນທີ່ສັງເວດໂອ້ ມະໂນທາວອາວພຣະນາງ

ພີ່ຂໍວາງນາງໄວ້ ໃຫ້ເວນໄພມາຈວບ ໄດ້ແລ້ວ

ຊີວິດອໍ່ມອບນ້ອງ ຄາວນີ້ພົບໜີ ນ້ອງເຣີຍ

ພີ່ຈັກປອງທຳໃຫ ຈອມພຣະໄນທາຍໂສກ

ທຽນດັ່ງໄດ້ຢູ່ຊຸ້ມ ໄຊກວາງຣື່ນເຢັນ

ອັນວ່າ ງູຊວງຟ້າ ເຄີຍມາເລີ້ງບໍ່ ?

ຫຼືວ່າມາຊຸ້ມ ເຫີງລ້ຳຈົ່ງມາ

ນາງກໍພາທີ່ຕານ ຖແລງກ້ອນແກ່ກາວ

ມັນແຕ່ນາງຢູ່ລ້ ກອງກວາງເຄິ່ງເດືອນ ນີ້ແລວ

ກໍບໍ່ເຫັນງູນັ້ນ ລົງມາຈັກເທື່ອ

ນ້ອງກໍອັກຢູ່ລ້ ກອງກວາງບໍ່ເຫັນ ພີ່ເຣີຍ

ຄັນຢາກ ເຫັນງູແທ້ໃຫ້ພີ່ດັ່ງໄຟອົ້ນ ງູເຫັນຊິດັ່ນດວນ ມາແລວ

ມັນກໍບໍ່ຢາກແທ້ ງູຊິເລື້ອຍລວງມາ ພີ່ເຣີຍ

ເມື່ອນັ້ນ ໂພທິຍານເຈົ້າ ຈຳຄະດີດູເຫດ

ຊິສັ່ງໃຫ້ ສອງເຈົ້າກໍໄຟ

ສອງເຊື້ອເຈົ້າ ຊາຍແຮງເຣວຣີບ

ຫາຫມູ່ໄມ້ ກອງຂົນກໍເພີງ

ພໍເມື່ອ ຈັດແຈ່ງແລ້ວ ເອົາໄຟມາຈູດ

ຄວັດລູດເອົ້າ　　ໄຟພົ້ນພົ່ນແສງ

ເມື່ອນັ້ນ ແຖນຫຼວງເຈົ້າ　　ຜູ້ທຳເມືອງໃຫ້ພິນາດ

ເຫັນແສງໄຟພຸ່ງພົ້ນ　　ສັ້ນນັ້ນກໍແຕງງູ

ຫຼາຍມາກົ້ມ　　ຕົ້ຕົວອະສົງໄຂ

ງູຊວງແສນ　　ອະເນກນອງໄຫຼເລື້ອຍ

ຫຼຽວດູຟ້າ　　ເວຫາມືດຫມອກ

ປານດັ່ງບີບເຂົ້າປຸ້ນ　　ເຂົ້ານົມເສັ້ນໃສ່ເພືອນ

ອັນວ່າ ສອງເຂືອເຈົ້າ　　ຊາຍແຮງເຫັນຫຼາກ

ຕົກຂະນະຍ້ານ　　ໂຕນເຕັ້ນແລ່ນໜີ

ໄປເຖິງເທົ້າ　　ໂພທິຍານສິດທິເດດ

ທ້າວກໍ ຍໍໄມ້ເທົ້າ　　ທວາຍຊູ້ໃສ່ງູ

ງູກໍມໍຣະນາຕາຍ　　ພ່ານວນຫມົດສຽງ

ພືດຽວສຸ່ຽງ　　ກໍບໍ່ມີເຫຼືອຫຼໍ່ຢູ່

ຝູງຫມູ່ງູອດົງຮວ　　ຕາຍດວຍເດ່ດາບາ

ຝູງຫມູ່ ເທພາທາວ　　ປັ້ຖົພພນແຜນ

ທູ່ກແງ່ງເງອມ　　ເຂົາຂົ້ນສົ່ງສຽງ

ຕລອດເທົ້າ　　ພົມມະໂລກພາຍບົນ

ຍົນພິຍານຫມັ້ນ　　ອາເວຈີ້ຖານຕ່ຳ

ຊົມຊື່ນຊ້ອງ　　ບາທາວພາບມານ

ບາຄານທາວ　　ລົດທະມານຫຼິງລ່ຳ

ເຫັນງູຕາຍນອດມ້ຽນ　ບາຫ້າວຊື່ນໃຈ
ທ້າວກໍຍໍພິນທິບ　ສິ່ງສຽງສູນແຈ້ງ
ພິນຫາກຣຽກຣ້ອງ　ເອົາດູກຝູງຄົນ
ອັດຖິສັດ　ອະເນດນອງເຫຼືອລົ້ນ
ເຫມືອນດັ່ງຍໍຊາຍຄວ້ຳ　ລົງດິນເທຖອກ
ໄຫຼອອກຈາກທ້ອງ　ງູນັ້ນມາກມູນ
ຄູນກັນຂົ້ນ　ສເມີພູພຽງຫມອກ
ພໍເມື່ອ　ຫມົດເກນແລ້ວ　ອັດຖິໄຫຼຫຼາມອອກ
ສູນຈາກທ້ອງ　ງູຊວງຣາຍເປົ່າແປນ
ທ້າວກໍ່ຍໍແຍງໄດ້　ສາຍພິນເຕາະດິດ
ສຽງຜາບມາງ　ປະຫານຂ້າຂິ່ມມານ
ເລີຍເກີດເປັນແມ່ນ້ຳ　ນະທີຫຼວງໄຫຼຫຼັ່ງ
ພັດຄາບຣ້າຍ　ງູຊວງນັ້ນລ່ວງຫນີ
ຝູງຫມູ່　ອັດຖິຂ້ອນ　ຂອງງູດູມາກ
ນ້ຳຕາກໍໄຫຼຫຼັ່ງຫຼ້ອນ　ເທິນຂື້ນທໍ່ພູ
ດູດດັ່ງບັບພະໂຕຕັ້ງ　ເປັນພູກ້າວເກິ່ງ
ກໍຫາກຍັງທຽງແທ້　ບໍ່ເພມ້າງສາບສູນ
ໂລກຈື່ງໃສ່ຊື່ໄວ້　ຂນານວ່າພູທໍ
ທົ່ງພູໂຮງ　ກະດູກງູຊວງຣາຍ
ຕາບທີ່ຫມາຍໄວ້　ປະຖົມລາງຫຼາຍເຊັ່ນ

ເມື່ອນັ້ນ ບາຄານທ້າວ ເຫັນງູໃຫຍ່ລ່ອງ ໄປແລ້ວ
ນົ້ມດ່ານດ້າວ ເມືອງກວ້າງທີ່ໄກ
ທ້າວຈຶ່ງ ຍໍໄມ້ເທົ້າ ທັນດັ່ງກວັດແກວ່ງ
ຍົກຍື່ນຂຶ້ນ ປາຍຊີ້ກະດູກຄົນ
ຊີ້ໃສ່ອັດຖິເຊື້ອ ເມືອງຫຼວງນະຄອນຣາດ
ຄົນເລົ່າ ກັບເກີດຂຶ້ນ ມາພ້ອມພ່ຳມວນ
ຄວນທີ່ ອັສຈັນລ້ຳ ນະຄອນຫຼວງສຽງສົ່ນ
ຝູງໝູ່ ເປັດໄກ່ຮ້ອງ ໝາເຖົ້າເຫົ່າຫອນ
ເປັນທີ່ ຍິນຊະອອນໂອ້ ປານຝັນແລ້ວຕື່ນ
ຝູງໝູ່ລູກອ່ອນນ້ອຍ ລັງໄຫ້ແອ່ວນົມ
ແນວນາມເຊື້ອ ໃຜມັນຈຳແມ່ນ
ບໍ່ໄດ້ຫຼິງແມ່ປ້າ ລູ້ງນ່າວາອາວ
ເມື່ອນັ້ນ ຣາຊາເຈົ້າ ພຍາເມືອງບັງເກີດ
ກັບທັງເສເນດນ້ອຍ ພຽງພ້ອມພ່ຳພຣະອົງ
ພຣະກໍຫຼິງແລຍ້ມ ສາມເຊື້ອພູວະນາດ
ນັ່ງສະຖິດແທ່ນແກ້ວ ຮຽງຊ້ອນລູກຕົນ
ພຣະຈຶ່ງພາທີ່ຕ້ານ ຖແລງລົ້ມທາເຫດ
ສາມທ້າວເນົ້າແຫ່ງຫ້ອງ ນະຄອນກວ້າງທີ່ໃດ ພໍເດ
ເມື່ອນັ້ນ ທ້າວກໍຍົກກອນນ້ອມ ອັນຊະລິ້ກນອາບ
ໄຫວ້ບາດພົ້ນ ອົງລ້ຳພໍພຍາ

ນາງກໍພາທີຕ້ານ ທູນໆແລງພຣະພໍ່
ເລົ່າພາກພົ້ນ ຖວາຍໄທ້ພໍ່ພຣະອົງ
ພຣະກໍຟັງຄຳຕ້ານ ນາງທູນຖແລງກອບ
ພໍປານໄດ້ທື່ມົນຕ໌ ຄຳເຂັ້ມໃສ່ມີ
ອັນນື່ງ ເໝືອນດັ່ງສັກໂກໄທ້ ເທພາພາຍໂຜດ
ມາໂຜດໃຫ້ ຫາຍຮ້ອນຢູ່ເຢັນ
ອັນວ່າ ເມືອງຫຼວງຮ້ອນ ປະຊາກ້ອນມໍຣະນາດ
ພຣະບາດເຈົ້າ ເອົາໃຫ້ຕ່າວຄືນ
ຄວນທີ່ ເຮົາຍໍໃຫ້ ເມືອງຫຼວງຖວາຍບາດ
ກັບຄຳກອງນາດນ້ອຍ ເປັນແກ້ວນິ່ງປອງ ແທ້ແລ້ວ
ພໍເມື່ອ ພຣະຮ່ຳແລ້ວ ຄ້ອນໄຣສະບູຫຼວງ
ເສນາໄຫຼ ຫຼັ່ງມາປານນ້ຳ
ພຣະກໍ ບັນຊາໃຫ ອົງການຕັດບອກ
ເຮົາຈັກອະພິເສກໃຫ້ ບາທ້າວນິ່ງປອງ
ເຂົາກໍຍໍມື້ນອມ ສາທູການພ້ອມພ່ຳ
ບໍ່ກວ່າແຕ່ພຣະບາດເຈົ້າ ຝູງຂ້າຈິ່ຄອຍຕາມ
ເມື່ອນັ້ນ ຣາຊາເຈົ້າ ພຍາຫຼວງຍໍນອບ
ຖວາຍບາດໄທ້ ເປັນເຈົ້າເຂື່ອນແຂວງ
ກັບທັງຄຳກອງນ້ອຍ ທຣົນບາເປັນມິ່ງ
ສາວຊວງໃຊ ແທນເຝົ້າແວດຣະວັງ

| | | |
|---|---|---|
| | ນາງສົມລົ້ນ | ຖວາຍຍາພໍຫມື່ນ |
| ທ້າວກໍ | ຊົມຊຸມສາງ | ເມືອງກວາງສອງໃສ |
| | ນັບແຕ່ໃນຫົ້ນຫອງ | ນະຄອນທອງສີສະເກດ |
| | ທຸກເຂດແຄວນ | ນຳນ້ອມສ່ວຍສິນ |
| | ນັດຖືບັ້ນ | ເມືອງຫຼວງກັບເກີດ |
| | ສັງເຂບຂໍ້ | ໄຂໄວ້ແຕ່ປະມານ |
| ນັບແຕ່ | ບາຄານທ້າວ | ຄັດທະນາມສເວີຍຣາດ |
| | ສະຖຸດແທບຊ້ອນ | ກອງແກ້ວນື່ງເດືອນ |
| | ຍັງບໍ່ຫາຍຄວາມຂ້ອງ | ຄນິງເຖິງພຣະພໍ່ |
| | ວ່າຈິເຫັນຫນ້າຊ້າງ | ຄ້າງໄອ່ອາວຄນິງ |
| ແລ້ວຈຶ່ງ | ຍໍເມືອງໃຕ້ | ຄືນເຄນພຣະພໍ່ |
| | ຍໍໃຫ້ອາຍຊາຍລາກໄມ້ | ເປັນເຈົ້ານັ່ງປອງ |
| | ເຫວີແກ້ວ | ກອງສີຊິຍໍມອບ |
| | ກັບທັງສາວຊ່ວງໃຊ້ | ຊິຍໍໃຫ້ມອບຄືນ |
| ບາຈຶ່ງ | ຍໍກອນນ້ອມ | ທູນລາພຍາພໍ່ |
| | ຝູງສົມນາດນ້ອຍ | ບາທ້າວສັ່ງລາ |
| | ສອງເຊື້ອທ້າວ | ພາກັນເຈັຽຣະຈາກ |
| | ພາກແຫງຫອງ | ກຸງກວາງລ່ວງໄປ |
| ອັນວ່າ | ຈອມໃຈເຈົ້າ | ສອງເຊື້ອຫຽວເຫດ |
| | ເຂົ້າເຂດກວາງ | ເຂົາຂັ້ນຊ່ອງຊັນ |

ນັບແຕ່ ບາດເດີນດັ້ນ ສາມສິບວັນເດືອນນຶ່ງ
ກໍຈຶ່ງເຖິງແຫ່ງຫ້ອງ ເມືອງຊາວຣາງເປົ່າ
ພຣະບາດທ້າວ ຫຼິງຢ້ຽມລຳແຍງ
ອັນນີ້ ເໝືອນດັ່ງຫ້ອງ ເມືອງຫຼວງສເມີພາກ
ພູວະນາຄທ້າວ ຄນິງລ້ຳຮຸ່ງຫຼັງ
ແລະ ໂຮງຫຼວງກວ້າງ ມະນີນິນຊ້ອງຊຸ່
ປະດັດຫນ່ວຍແກ້ວ ກະດິງ ຫ້ອຍທໍ່ງແຂວນ
ເທັ່ນແຕ່ ເມືອງແປນກ້ຽງ ບໍ່ມີສຽງສັດສິ່ງ
ຕັ້ງຫາກັນດ໋ອງຕ໋ງ ຄືນຄ້າງແມ່ນບໍ່ມີ
ທ້າວກໍ ຍິນດີດ້ວຍ ເດີນຈົນເຊີງຍ່າງ
ເຖິງຂວ່າງຄູ້ມ ພຍາເຈົ້ານັ່ງທົງ
ໄປຈົມຫຼົ້ນ ໂຮງຫຼວງພັກເມື່ອຍ
ພັກຜ່ອນຫຼົ້ນ ແຄມຄູມຣາຊວັງ
ອັນວ່າ ຊາຍແຮງທ້າວ ທາງເດີນທ່ຽວ
ໄປແອ່ວຫຼົ້ນ ຕາມຄູມຂວາງຫຼວງ
ທ້າວກໍ ບາຍເອົາຄ້ອນ ຕີຕ່ອຍເສົາໂຮງ
ໂຮງນັ້ນນາງຄຳສ້ອຍ ຄຳສິງສະຖິດຢູ່
ນາງກໍ ໄຂປາກຕ້ານ ຖແລງຫຼົ້ນຕໍ່ບາ
ມີງມົ້ນສິງຊົມມາລວງຫຼົ້ນ ຕີເສົາໃຫ້ຫຼວກ
ບອກວ່າກູຢູ່ນີ້ ມິງຮູ້ບໍ່ກິນ ທ່ຽວເທີ້ນ

| | | |
|---|---|---|
| | ທ້າວໄດ້ຍິນຄຳເວົ້າ | ບໍ່ມີຂານໄຂຕອບ |
| | ດີ້ນຂາຍໄຫວ | ທູນທ້າວທີ່ຢຳ |
| | ຂ້ານ້ອຍໄປຕີ່ຫຼົ້ນ | ເສົາໂຮງຫຼວງດູມ່ວນ |
| | ໄດ້ຍິນສຽງປາກຕ້ານ | ຖແລງຂໍ້ແມ່ນຄືນ |
| ເຊີນພຣະ | ໄປ່ຕີ້ຕອງ | ເສົ່າໂຮງໃຫ້ຮູ້ເຫດ |
| | ຫຼອນວ່ານາງມາດນ້ອຍ | ນອນນີ້ຢູ່ໃນ |
| ເມື່ອນັ້ນ | ໂພທິສັດເຈົ້າ | ລືງທໍ່ສະເດັດດ່ວນ |
| | ໄມ່ຄ້ອນເທົ້າ | ຕີ້ຕອງຕ່ອຍເສົາ |
| ອັ່ນວ່າ | ໂສມສເລືາເຂັ້ມ | ຄຳສິ້ງນ້ອຍມາດ |
| | ຖແລງວາດເວົ້າ | ຄຳຮ້າຍຄ່າມາ |
| ມົງນັ້ນ | ສັ້ງຊິມາລວງຫຼັ້ນ | ຕີເສົາຫຼາຍເທື່ອ ຮ້ຽງເຣີຍ |
| | ເຊີນນຶ່ງໄຊກິ້ນທອນ | ທີ່ງຄຳຕີວຖ່ອຍ |
| ກູ້ນ | ກັ້ນຮອຍດແລວ | ສີທັ່ນລດວງລີ |
| | ຂ້ນວ່າຟີ້ງພັນເຊື້ອ | ຂອງກູ້ບູດບອດ |
| | ດັບຊາດສິ້ນ | ສູນສຽງຄອບນຶ່ງ ນັ້ນແລ້ວ |
| ເມື່ອນັ້ນ | ບາດານທາວ | ຄັດທະນານຕານຕອບ |
| ພົ້ນ | ບ່ແມ່ນເຊື້ອຊາດຮ້ຽງ | ຮາງຮ້າຍເຜົ່າຜີ ດອກນາ |
| ຫາກແມ່ນ | ແນວນານຄືນ | ສິ່ງດຽວກັບນ້ອງ |
| ຄ້ອນວ່າ | ພຣະກ່າວແລ້ວ | ບໍ່ພົ້ນເລີຍດິດ |
| | ສຽງມ່ວນແຫ້ງ | ມະໂນນ້ອຍຊອບພຣະໄທ |

ຄຳສິ່ງນ້ອຍ　ສີນລະຫາໄຫຼຫຼົ້ງ
ຄຶດຄຶ່ງແຄນ　ຄນິ່ງໂຂອາວຫຼົ້ງ
ທ້າວກໍ　ຮວາຍມົ້ນແກ້ວ　ສະກົ້ດດີອົມເປົ່າ
ກູແຈເຫຼັກໃສ່ແໜ້ນ　ມົ້ນມາງເປົ່າຖອນ
ແລ້ວຈຶ່ງ　ເຫັນນາງແກ້ວ　ສີສົ້ນສເນີ່ຫຼ
ສອງພຣະຫັດກອດອູ້ມ　ຖນອມນ້ອງໃສ່ເພົາ
ບາກໍ　ຊົ້ມນາງນ້ອງ　ຄຳສີ້ງສາງຈູບ
ຮັກຮູບນ້ອງ　ທອງລານລື່ນຕາ
ແລ້ວຈຶ່ງ　ວາຈາຕານ　ຖາມນາງຫາເຫດ
ອັນວ່າ　ເມືອງໃຫ່ຍ້ກວາງ　ສູນເສົ້າເພາະຫຍັງ?
ໃນພຣະວັງວຽງກວາງ　ພູ່ຍາຫຼວງຍັງບໍ່?
ພໍ່ແມ່ຍາດພີ່ນ້ອງ　ຂອງເຈົ້າຢູ່ໃສ
ເມື່ອນັ້ນ　ໂສມສເລົ້າຫຼາ　ຄຳສີ່ງບົ້ນບອກ
ອັນຈະລື້ນອນ　ຖແລ້ງຂໍ່ກາວຈາ
ອັນວ່າ　ຣາຊາເຈົ້າ　ພົງພັນຄະນາຍາດ
ເພື່ນຫາກລົດຊໍ່ວ້ມຣຽນ　ຟ້ງຮູ່ງຫຽວກິນ　ພີ່ເຮີຍ
ຕັ້ງຫາກ　ອັກໂຂລົ້ນ　ຫຼາຍຕົວເຕັມແຜ່ນ
ໂຕເຕີບ້ການ　ສານ້ຊາງສົ່ງຊາ
ສັດສາເຊື້ອ　ຊູມຫົ້ງຫາຊູດ
ຊູດເສື້ນໄດ້　ເທື່ອຮ້ອຍດວນຫນີ

ຕັ້ງຫາກຫຼາຍຄືນລ້ຳ ຫຽວກິນສັດສິ່ງ
ເດັຍຣະສານສ່ຳຊ້າງ ຄວາຍມ້າຫມູ່ງົວ
ຫມົດສັດແລ້ວ ກິນຄົນເປັນເຫຍື່ອ
ບໍ່ມີເຫຼືອຢູ່ຄ້າງ ຝູງຮູ້ງຫ່ຽວກິນ
ຄາວນັ້ນ ພຣະພໍ່ເຈົ້າ ຮູ້ເຫດອັນຕະຣາຍ
ຈຶ່ງໄດ້ເອົານ້ອງມາ ເຊື່ອງເສັຽເສົາໄມ້
ຈຶ່ງຄ່ອຍ ເຫຼືອນາງໄທ້ ຄົນດຽວພົ້ນຢູ່
ຝູງຫມູ່ຍາດພີ່ນ້ອງ ຕາຍສ້ຽງບໍ່ຫຼໍ ພີ່ເອີຍ
ບັດນີ້ ບຸນຂອງນ້ອງ ເຫຼືອຫົວລົ້ນເກດ
ຈຶ່ງໄດ້ມາພົບເຈົ້າ ຊິຂໍເຂົ້າເພິ່ງບຸນ ພີ່ແລ້ວ
ນ້ອງຂໍ ໄປຕາມເຈົ້າ ທູນລະຂອງພຣະພີ່
ຊີວິດນີ້ຂໍມອບໃຫ້ ພຣະອົງເຈົ້າດັ່ງໃຈ ພີ່ແລ້ວ
ເມື່ອນັ້ນ ພູທອນທ້າວ ຟັງນາງຖແລງພາກ
ປາກບໍ່ໄດ້ ຄາແຄ້ນຄັ່ງທວງ
ພຣະຈຶ່ງ ໂລມນາງນ້ອງ ລອງຖາມເຖິງເຫດ
ວັນນີ້ຫົງຮູ້ງແຮງ ແມງຣ້າຍຊິຮ່ອນມາ ບໍ່ເດ
ແຕ່ນັ້ນ ນາງຕອບຖ້ອຍ ຖແລງພາກພ້ອຍຂານ
ເຊີນພຣະຕິດໄຟຂຶ້ນ ຫົວຟືນມື້ຫັ້ນຮຸ່ງ
ຝູງຫມູ່ຮ້ຽງ ເຫັນແລ້ວຊິດ່ວນມາ ພຣະເອີຍ
ເມື່ອນັ້ນ ບາຄານທາວ ທວາຍຄະດີ້ຊບອກ

ໃຫ້ອ້າຍກວຽນຮ້ອຍເຫຼັ້ມ    ພລັນຟ້າວກໍ່ເພີງ
ເມື່ອນັ້ນ    ແຖນຫຼວງເຖົ້າ    ເຫັນໄຟແຈ້ງສວ່າງ
ແຖນກໍຮູ້ເຫດເບື້ອງ    ວ່າຄືນນັ້ນສ່ວນຍັງ
ແຖນຈຶ່ງໃຊ້ຮ້ຽງແຮ້ງ    ທົງເສື່ນລົງພລັນ
ຫຼາຍອັກໂຂອະນັນຕັງ    ຫຼັ່ງລົງຫຼາຍລ້ານ
ນັນກໍ    ບິນມາລ້ອມ    ວຽງຫຼວງຣະວັງຣາດ
ພູ້ວະນາດທາວ    ເຫັນແລ້ວຫຼາກກໍໃຈ
ທ້າວກໍ    ຍໍໄມ້ເທົ້າ    ທັນດັງກວັດແກ່ວງ
ຍັກໃຫ່ຍຮ້າຍ    ທົ່ງຮູ້ງເລົ່າຕາຍ
ຕັ້ງວ່າ    ຫຼາຍເຫຼືອລົ້ນ    ທົງຕາຍເດັຽຣະດາດ
ຫຼາຍມາກລົ້ນ    ພູຕັ້ງເກື່ງສເມີ
ແລ້ວເກີດ    ເປັນແມ່ນ້ຳ    ກະແສໃຫຍ່ໄຫຼພັດ
ພາສີບທົງ    ລ່ອງລົງມະຫິນ້ຳ
ແລ້ວຈຶ່ງ    ໄປດູນຂັ້ນ    ເປັນພູດູຕະຫງ່າຍ
ດຽວນັ້ນຍັງບໍ່ມ້າງ    ທະລາຍລົ້ມເກື່ອນກະຫາຍ · ເຈົ້າເອີຍ
ໂລກຈຶ່ງ    ໃສ່ຊື່ໄວ້    ປະຖົມມາຕັ້ງແຕ່ງ
ຊື່ວ່າດອຍຮ້ຽງແຮ້ງ    ປາງນັ້ນສືບມາ
ບ່ອນທີ່    ທົງຕາຍນັ້ນ    ເລີຍເກີດເປັນແມ່ນ້ຳສະໃຫ່ຍຄົງຄາ
ຊື່ວ່າທົງສາວະດີ    ຕໍ່ມາປາງນີ້
ອັ່ນວ່າ    ຫນອງສະກ້ວາງ    ທົງຄຳກັບເກີດ

ຣຽກພັດເຂົ້າ ເມືອງກ້ວາງໃສ່ນາມ
ອ້ງວະຫອງ ທົງສາວະດີເດີມຊື່
ຖືນາມທົງຮຸ້ງແຮ້ງ ປາງນັ້ນຕໍ່ມາ ເຈົ້າເຮີຍ
ຝູງປະຊາຊົນເຊື້ອ ເມືອງທົງກັບເກີດ
ຄົດຊະສານຊ້າງມ້າ ບາຫາວໂພດຄືນ
ຊາວເມືອງກ້ວາງ ກັບຄືນຄືເກົ່າ
ໃຜຜູ້ ເປັນເຫຼື້ອຫ້ອງ ທົງແຮ້ງກໍເກີດຄືນ
ອັນວາ ຣາຊາເຈົ້າ ຍໍມືຖວາຍມອບ
ໄວ້ແກ່ພູ້ວະນາດທ້າວ ທົງສ້າງນັ່ງປອງ ຫັ້ນທ້ອນ
ນັບແຕ່ ບາສເວີຍຫ້ອງ ເມືອງທົງສນຸກຍິ່ງ
ບໍ່ເດືອດຮ້ອນ ກະເສມສ້າງສຳຣານ
ນັດຖືບັນ ເມືອງທົງກັບເກີດ
ສົງເຂບຊູ້ ຂໍໄວ້ແວ່ນແຍງ ເຈົ້າເຮີຍ
ນັບແຕ່ ບາຄານທ້າວ ໂພທິຍານສເວີຍຣາດ
ຍັ່ງບໍ່ຫາຍໂສກຮ້ອນ ຄືນັ້ງໄທ້ພໍ່ຕົ້ນ
ພຣະຈິ່ງ ຍໍເມືອງໃຫ້ ຊາວກວຽນສເວີຍຣາດ
ຍໍມອບບ້ານ ເຄນໃຫ້ແກ່ບາ
ແລ້ວຈຶ່ງ ຍໍມື້ນອນ ວັນທາຫຼູນບາດ
ພະທັດນອບນ້ວ ຖແລງຕານກາບລາ
ບັດນີ້ ຂ້າຈັກລາສອງເຈົ້າ ມານດາພໍ່ແມ່

ຂໍໃຫ້ພຣະທີ່ປັ້ງ ເນົາຫ້ອງທີ່ກະເສີມ ຫັ້ນຫ້ອນ
ລູກຈັກພັດພາກບ້ານ ດັ້ນດູ່ງໄພສິນ
ເຂົາແຕ່ເມືອງຫົງສາ ຊົມອບດິນຖວາຍໃຫ້
ລູກນີ້ ວ່າຈັກຕົນດຽວຜ້າຍ ຊາຍກວຽນໃຫ້ເພີ່ມຢູ່
ໃຫ້ສເວີຍຣາດສ້າງ ເມືອງກວ້າງພ່າພຣະອົງ
ເມື່ອນັ້ນ ພຣະບາດເຈົ້າ ໂດຍຂາດໂພທິຍານ
ຖແລງວາຈາ ຕໍ່ບາບູນກ້ວາງ
ພໍ່ບໍ່ຂືນຂັດຂ້ອງ ບູນທັມຖແລງເຫດ
ຄົນລູກພົບພໍ່ຊ້າງ ເຊີນເຈົ້າຕ່າວຄືນ ພໍ່ເນີ
ເມື່ອນັ້ນ ພູທອນທາວ ດາດີຄາດເຄື່ອງ
ພຣະຄາດເນື້ອ ດາຫ້າງແຕ່ງຕົວ
ສາຍພິນຄ້ອງ ວໍຣະກາຍພັນຜູກ
ເສັດຣຽບຮ້ອຍ ລອຍຜ້າຍເພີ່ມພຣະໂຍມ
ແລດູ ເວຫາຫ້ອງ ຂຽວມິນຕັ້ງຊໍ່
ຟ້າກໍ່ຫຸ້ມ ກວມກູ້ມເຫງົ້າຝົນ
ທ້າວກໍ ເຂົາຕົນດັ້ນ ເວຫາເທີນເມກ
ດັ້ນກີບຟ້າ ປ່ອມຟ້າເພີ່ມພຍອງ
ມອງໄປທາງເໜືອໃຕ້ ຄວັນຂຽວຜອມຜໍ່
ເຫັນແຕ່ຟ້າຈອດຈ້ຳ ກວມກູ້ມທໍ່ດິນ
ຫຼາຍວັນດັ້ນ ເວຫາຄາວເຄິ່ງ

ກໍຈຶ່ງເຖິງແຫ່ງຫ້ອງ　　ກຸ້ງກວ້າງທີ່ກະເສີມ
ເມື່ອນັ້ນ　ຊື່ວ່າຈໍາປາທ້ອງ　　ນະຄອນທ້ອງທາວຕ່າງ
ບໍ່ມີການຍາກຫຽວ　　ສຸກລ້ຳເລີດສວັນ
ບາກໍ　ເຫາະລະຫົດຄົ້ນ　　ລົງດີນເດີນຍ່າງ
ໄປຂໍພັກຈອດຢັ້ງ　　ຄອນເຖົ້າຍ່າຍາຍ
ບາກໍຍໍມື້ນອນ　　ອັນຈະລີເຕີມອເກດ
ຖຸແລງວາດເວົ້າ　　ຄອນເຖົ້າຍ່າຍາຍ
ລູກນີ້　ວ່າຈັກຂໍພັກຢັ້ງ　　ນອນເຮືອນຄອນຍ່າ
ຂໍຍ່າຜາຍໂຜດໃຫ້　　ຫຼານນ້ອຍຢູ່ຄອນແດ່ທອນ
ເມື່ອນັ້ນ　ຈໍາສວນເຖົ້າ　　ຟັງສຽງຮັບພາກ
ເຖົ້າກໍ　ຊິກຊາກເວົ້າ　　ຫຼານນ້ອຍຢູ່ທີ່ໃດ　　ນີ້ເດ
ຍານີ້ຄົນດຽວແຫ້　　ເຮືອນຊານກໍບໍ່ໃຫ່ຍ　ຫຼານເອີຍ
ເສົາກໍ　ໄມ້ໃຜ່ບ້ານ　　ຝາແອ້ມແມ່ນຕອງ
ທາງບົນຫຽາ　　ຝາກາບລາງບຸງຫມອກ
ໄມ້ຕູມເຕືອກເຮັດແປ້ນ　　ປູ່ໄດ້ບໍ່ອ່ອນຄຶງ　　ລູກເຮີຍ
ອັນວ່າ　ແລງງາຍຫນີ້　　ບໍ່ພໍກິນລ້ຽງປາກ
ແມ່ນທຸກຍາກແຄ້ນ　　ຊິເຊົາຊົ້ນຢູ່ຈັ່ງໃດ　　ລູກເຮີຍ
ໃຫ້ຫຼານໄປເຊົາຊົ້ນ　　ຄອນເຮືອນເພີ່ນຫຼັງໃຫ່ຍ
ເຮືອນຊານເພີ່ນກໍກວ້າງ　　ເຊີ້ນທາວຖ້ຽວໄປ　　ນັ້ນທ້ອນ
ເມື່ອນັ້ນ　ໂພທິຍານທ້າວ　　ຂໍພອນຄອນຍ່າ

ອອກດງຕ້ານ ດອມເຖົ້າຍ່າສວນ
ຫຼານບໍ່ ຫຼອນໄປໄດ້ ອາສັຍເຮືອນຄົນອື່ນ
ຫຼານຊິຂໍຈອດຢັ້ງ ດອມເຖົ້າຍ່າຍາຍ ນົ້ແລ້ວ
ຫຼານກໍ ມາເຫັນຫນ້າ ຄົນຍາຍສເນີແນ່
ຊິໃຫ້ຫຼານໄປຈອດຢັ້ງ ເຮືອນຢ້າວເພີ່ນຜູ້ໃດ ຍ່າເຮີຍ
ເມື່ອນັ້ນ ຕາຍາຍເຖົ້າ ຟັງບ່າຈາມອນ
ສອງພຣະເນດຫນ້າ ຮຳແກ້ມເຮັ່ງລິມ
ເຖົ້າກໍ ຍິນຍອມໃຫ້ ບາບູນເຊົາຈອດ
ຄຳປາກຫຼານອື່ນອ້ອຍ ຍາຍເຖົ້າໂລດບໍ່ຂືນ
ນັບແຕ່ ບາເຊົາຢັ້ງ ເຮືອນຕອງດອມຍ່າ
ບໍ່ໄດ້ອິດຍາກແຄ້ນ ສນູກຫຼົ້ນມ່ວນຍິນ
ປາງນັ້ນ ຍັງມີສີໄວແກ້ວ ໂສມສເລົາຮູບຫຼໍ່
ເປັນລູກເຈົ້າ ເສດຖີເຖົ້າຈື່ມເມືອງ
ບາກໍ ໄປທ່ຽວຫຼົ້ນ ສີໄວບໍ່ເວັ້ນຫວ່າງ
ສນູກທ່ຽວວັດວ້າງ ຊົມຫຼົ້ນຊູ່ວັນ
ມັນກໍ ທ່ຽວມາເວົ້າ ດອມບາພູວະນາດ
ທຸກເມື່ອມົ້ ບາຫ້າວເສບສົມ ແຫ້ແລ້ວ
ກໍຫາກ ຄົນນານໄດ້ ສີໄວຫ້ອງໃຫ່ຍ
ກົສມາດໄດ້ ເດືອນຖ້ວນກໍອອກມາ
ເປັນຊາຍກ້າ ໂສມງາມຄືພໍ.

ນາງກໍປະສູດລູກນ້ອຍ ງາມລະຫ້ອຍເກື້ງອີມ
ຈົ່ງຂນານນາມໃຫ ບາບູນລັດທະເມກ
ພັດພໍ່ເຈົ້າ ອົງລ້ຳຫນໍ່ພຸດໂທ
ນັບແຕ່ ບາເຊົາຢັ້ງ ດອນເຮືອນຍາຍຍ່າ
ຫຼາຍຂວບປີ ເດືອນລ້ຳລ່ວງກາຍ
ຍຸດຕິກາບັ້ນ ໂພທິຍານຕອນນັ້ງ
ອໍໂຈະໄວ້ຫນີ້ ທີ່ຫນ້າຈົ່ງເຕັ້ມຕາມ ທ່ານເອີຍ .

ບັດນີ້ ຈັກກ່າວເຖິງຫ້ອງ ພຍາຫຼວງສເວີຍຣາດ
ຄິດຢາກໄປເຊີດເນື້ອ ໄພ້ກວາງໃຫ້ສ່ວາງອອນ
ແລ້ວຈິ່ງພາພົນເຂົ້າ ໃນໄພ້ຣອງໂຮ່
ລ້ອມຫຸ່ມເນື້ອ ກວາງເກັ້ງກະຕ່າຍແຕ
ຄາວນັ້ນ ຍັງມີຂີ້ນຣາຍ ຖຸແລງລວງກັບເພດ
ນິມິດເໝືອນໝູ່ເນື້ອ ກວາງເກັ້ງລະມັ່ງຄຳ
ຍາມນັ້ນ ອົງກະສັດໄທ້ ຫຼຽວຮູ້ທັນດູ່ຫຼາກ
ຄິດຢາກໄດ້ ແຖມມາໄລ່ຕາມ
ກວາງກໍ ທຳເປັນຫ້ານ ຂາຫຼົງລ້າກແກ່
ພຣະກໍ ແສ້ໃສ່ມາ ທະຍານພ້າຍແລ່ນນຳ
ຕັ້ງແຕ່ກວາງທຳລໍ້ ອົງພ້ຍາລວງຫຼອກ
ເລີຍເລົ່າ ຫຼົງປ່າໄມ້ ໄພ້ກວາງພາກົ້ມ
ຝູ່ງໝູ່ເສນາມູນຕີ້ຣອງ ຣຽກທ່ວໄພພະນອມ
ກໍບໍ່ຂານກູກເອີ້ນ ພຍາເຈົ້າງຮູບເປັນ
ເມືອແຕ່ຕີ້ຍັງມາ ພາຈິເຕັ້ນແລ່ນ

×

× ×

ບາດກວາງກັບຕ່າວໜ້າ　　ຄືນແທ້ແມ່ນຍັກໂຂ
ມັນກໍໂມໂຫກາ　　ຕາແດງປານເລືອດ
ມັນກໍຈັບເກດເກົ້າ　　ຈິກິນມ້າພ່ຳພຣະອົງ
ເມື່ອນັ້ນ　ຣາຊາທ້າວ　　ພຍາຫຼວງໄຂປາກ
ຂໍໃຫ້ຍັກໂຜກຂ້າ　　ປາງນີ້ຢ່າຟ້າວກິນ　ຍັກເຮິຍ
ຄັນຊິ　ກິນເຮົາແທ້　　ຄືນດຽວບໍ່ມື່ອນ
ນັກຢາກກິນມາກັ້ນ　　ຊິຫາໃຫ້ບໍ່ຂື້ນ
ເຮົານີ້　ເປັນກະສັດສ້າງ　　ທົງເມືອງຕູ້ມໄພ່
ຝູງຫມູ່ມັກໂຫດຮ້າຍ　　ຊິຫາໃຫ້ຍັກກິນ　ຍັກເຮີຍ
ເຮົາຊິ　ປູກຫໍໃຫ　　ສຽງເໜືອຕາວັນອອກ
ເຊີນທ່ານໄປຈອດຢັ້ງ　　ຄອຍຖ້ານັ່ງກິນ　ທ່ານເຮີຍ
ຍັກໄດ້ຟັງຄຳຕ້ານ　　ພຍາຫຼວງເລີຍປ່ອຍ
ລະເກດເກົ້າ　　ພຍາເຈົ້າປ່ອຍວາງ
ເມື່ອນັ້ນ　ຣາຊາເຈົ້າ　　ຈຳປານັກຄະເຮດ
ຊັກເຊືອກມ້າ　　ຄືນເຂົ້າສູ່ນະຄອນ
ພໍເມື່ອ　ໄປເຖິງຫ້ອງ　　ເມືອງຫຼວງບ້ານເກົ່າ
ຝູງຫມູ່ເສເນດນ້ອຍ　　ທູ້ມທາວທີ່ຍຳ
ເປັນໃດແທ້　　ທາງພຣະອົງບໍ່ກັບຕ່າວ
ຫຼື່ວ່າເປັນເຫດຮ້ອນ　　ປະການແທ້ສິ່ງໃດ
ເມື່ອນັ້ນ　ອົງກະສັດໄທ້　　ຈາຊູນເຂົາຮິບ
ເຮົາຫາກຜູ້ດຽວຜ້າຍ　　ໄພສົບຫິມະເວດ

ດີທີ່ ຍັກຖ່ອຍຣ້າຍ ຊິກຸ້ມຂາຍາດກິນ
ເຣົາຈຶ່ງ ຂໍມອບໃຫ້ ເອົາຄົນມາປ່ຽນ
ຝູງຫມູ່ນັກໂທດຣ້າຍ ຊິຍອມໃຫ້ຍັກກິນ
ສູຈຶ່ງໄປແປງສ້າງ ຫໍຜີຫຼົງມຶ່ງ
ໄວ້ແຫ່ງເບື້ອງ ເຫນືອຄ້າຍຈຶ່ມເມືອງ
ເຂົາກໍ ໂດຍຄຳເຈົ້າ ຣາຊາມີອາດ
ຕົກແຕ່ງຕັ້ງ ຫໍຂົ້ມບໍ່ນານ
ບໍຣະບວນແລ້ວ ຄືນທູນເທວະຣາດ
ຝູງຂ້າຕົກແຕ່ງຕັ້ງ ຫໍແລວສະດວກດີ ພຣະເອີຍ
ແຕ່ນັ້ນ ພຣະກໍບັນຊາໃຫ ໄປເອົານັກໂທດ
ຂັງຜູກໄວ້ ຫໍຣ້ານແຫ່ງຜີ ນັ້ນແລ້ວ
ພໍເມື່ອ ເວລາແລ້ວ ເສັຽແສງມົວມິດ
ເດິກສີ່ທຸ້ມ ຂຶ້ນຜ່າຍດວນມາ
ມັນກໍເຂົ້າສູ່ຫ້ອງ ສາລາຜີຍັກຈອດ
ມັນກໍຈີກລາກຫົນ ກິນໄສ້ແຫ່ງຄົນ
ນັບແຕ່ ດົນນານໄດ້ ຫຼາຍເດືອນຂ້າມລ່ວງ
ຄົນຫຼວງບົກເປົ່າຣ້າງ ຕາລາງເສົ້າຫມື່ນຫມອງ
ອັນວ່າ ຄົນໃນຫ້ອງ ຕາລາງຫຼວງແປນເປົ່າ
ກຳຫນົດ ໕ ທຸ້ມ ຈົນກ້ຽງເປົ່າຕາລາງ
ແລ້ວຈຶ່ງ ເຄືອງພຣະໄທເຈົ້າ ພຍາຫຼວງກັ້ນໂສກ
ຄົນໂທດຫມົດຈາກຫ້ອງ ຕາລາງແລ້ວບໍ່ເຫຼືອ

ພຣະຈົ່ງຄຶດຣ່ຳຮູ້ ຄນຶງປ່ອງປາຣະມີ
ເຮົາຈັກເອົາໃຜໄປ ປ່ຽນຕົວແທນໄວ້
ໃຜຈັກ ແປງເປັນໃຫ້ ກະທຳຕົວເປັນໂຈດ
ໂທດບໍ່ມີດັ່ງ ໃຜຊິຕັ້ງຕໍ່ຕາຍ
ຫຼືຈັກ ບັງຄັບໃຫ້ ຄືນດີເປັນມັກໂທດ
ກົວແຕ່ບາບແລ່ນຕ້ອງ ກັມຊິຂ້ອງຈ່ອງນຳ
ຄວນທີ່ ເຮົາຕາຍທ້ອນ ຍັງດີກ່ອນຄືນອື່ນ
ຕາງໄດ້ເທຫອດເນື້ອ ທານໃຫ້ແກ່ມັນ
ພໍເມື່ອ ພຣະຮ່ຳແລ້ວ ຕ້ານຕໍ່ເທວີ
ພາທີຂານ ກ່າວຈາດອມນ້ອງ
ພີ່ນີ້ ວ່າຈັກໄລລາຫ້ອງ ໜີໄປຕາຍຕາມຊາດ
ວ່າຈັກເທຫອດເນື້ອ ທານໃຫ້ຍັກກິນ ນ້ອງເອີຍ
ໃຫ້ນ້ອງ ເນົາໃນຫ້ອງ ນະຄອນຫອງຕູມໄພ່
ພີ່ນີ້ເຄາະຄາດເຂົ້າ ສູນເນື້ອສ່ວນຊິຕາຍ
ເມື່ອນັ້ນ ເທວີແກ້ວ ນາງເມືອງເດືອງຂູ່ນ
ກັບທັງລູກມິ່ງຕົ້ນ ຫວງສະອື້ນເມື່ອຍມະໂນ
ອັນວ່າ ມາຣີໄທ ລີດານ້ອຍມາດ
ຍົກພຣະຫັດເທເທບເກົ້າ ຫູ້ນໄຫວພໍ່ຕົນ
ລູກນີ້ ວ່າຈັກອາສາສູ້ ອັນຕາຍຕາງພໍ່
ຂໍແກ່ ພຣະພໍ່ເຈົ້າ ຄອງສ້າງສືບເມືອງ ນີ້ຜອນ
ນາງກໍ ວອນໆໄຫ້ວ ພຣະບິດາຫຼາຍເລົ່າ

| | | |
|---|---|---|
| | ເວົ້າຈ້ອຍໆ | ຈິອັ້ນສູ່ຕາຍ |
| ພຣະຈຶ່ງ | ຊຸບາຍຮູ້ | ຄິດຮ່ຳຄອງຫົວ |
| | ອັນວ່າເວນເຮົາຍັງ | ດັ່ງລືຊືຫົນຜົມ |
| | ລູກກູຕາຍມັ້ນ | ວັນໜ້າແມ່ນກູ ແລນໍ |
| ພໍເມື່ອ | ພຣະຮ່ຳແລ້ວ | ຄ້ອນໃສ່ສະບູຫຼວງ |
| | ເສນາປົບ | ແລ່ນມາທັງຟ່າວ |
| | ເຂົາກໍຍໍມືໄຫວ້ | ທູນຖາມເຖິງເຫດ |
| | ຄ້ອນໃສ່ຄ້ອງ | ທັ້ນຂາເຫດໃດ ພຣະເຣີຍ |
| ແຕ່ນັ້ນ | ພຣະບາດຕ້ານ | ຈາຕໍ່ເສນາ |
| | ໃຜຈັກອາສາອັນ | ເພື່ອຕາຍຕາງເຈົ້າ |
| | ດຽອມເມືອງຫຼວງຂ້ອນ | ຈິເປັນວັງນ້ຳຊູ່ມ |
| | ລູກມື່ງຕ້ນ | ຈິຂັ້ນສູ່ຕາຍ |
| | ນາງຈິແທນຕົວໃຫ້ | ຍັກຂືຂືແທນພໍ່ |
| | ລູກກູຕາຍມັ້ນ | ວັນໜ້າຈິແມ່ນກູ |
| ໃຫ້ສູ | ຈັດຊ້າງມາ | ງົວຄວາຍຜູ້ແມ່ |
| | ໃຫ້ໄດ້ສີ່ງລະຮ້ອຍ | ປະສົງສ້າງແຈກທານ |
| | ທັງເສື້ອຜ້າ | ເງິນຄຳອະນັນເນກ |
| | ເບີກຈາກຫ້ອງ | ພຣະຄົງກ້ວາງຈິທອດທານ |
| ເຂົາກໍ | ໂດຍຄຳເຈົ້າ | ພຍາຫຼວງຈິຕັດບອກ |
| | ຈັດຊອກຫາແມ່ຊ້າງ | ທັງມ້ານາກຫຼາຍ |
| ມີທັງ | ງົວຄວາຍພ້ອມ | ໝູໝາເປັດໄກ່ |

| | | |
|---|---|---|
| | ສິ່ງລະຮ້ອຍ | ຕາມເຈົ້າປາຖນາ |
| ເມື່ອນັ້ນ | ຣາຊາເຈົ້າ | ອົງພຍາຊຸຊ່ອງ |
| | ບອກເຫດເບື້ອງ | ຖແລງຂໍ້ຕໍ່ຂຸນ |
| ວັນນີ້ | ເຮົາຈັກເອົານາງເຂົ້າ | ຫໍພິທານທອດ |
| | ໃຜຜູ້ຫຼຸກຂມ້ອດໄຮ | ຊິທານໃຫ້ດັ່ງປະສົງ |
| ເອົາໃຫ້ | ສົມກະສັດໄທ | ສິດາຊົມຸດມອດ |
| | ຍາມເມື່ອດັບຊິບແລ້ວ | ບຸນຊິຢູ້ສົ່ງສນອງ |
| ພໍເມື່ອ | ພຣະກ່າວແລ້ວ | ເຖິງທີຍາມຊິໄປ |
| | ຝູງຫມູ່ເສນາໄຫຼ້ | ຫຼັ່ງໂຮມໂຮງກວ້າງ |
| | ຄົນທັງປວງໃນຫອງ | ຈຳປາມາຕລອດ |
| | ລູກຫຼັ່ງເຂົ້າ | ພະລານກ້ວາງຂວ່າງສນາມ |
| ບາງຄົນ | ຂາຫັກທ້ານ | ໄອຂະຫຼີເປີ້ຍຄອມ |
| | ເຂົາກໍ່ຄານກ້ອມກ້ອຍ | ປະສົງດັ້ນດ່ວນມາ |
| ເພື່ອຢາກ | ມາເຫັນຫນ້າ | ສີດາຊິຕາຍຈາກ |
| | ທັງຢາກໄດ້ແຜ່ນຜ້າ | ພຍາເຈົ້າຊິເກອດທານ |
| ບາງຄົນ | ຂາຫັກທ້ານ | ຕາຟ້າງທັງຫູຫນວກ |
| | ປາກກິກສິບແຫ້ວງຫວົ້ນ | ຂາກົ້ນກໍແລ່ນມາ |
| | ພາກັນເຣຣີ້ນຮອງ | ນຳນາງຊິຕາຍຈາກ |
| | ວັນບົ່ມ | ຊຸທານເນື້ອແກ້ທິ |
| ພໍເມື່ອ | ຍາມດີແລ້ວ | ສີດາຍົວຣະຍາດ |
| | ເຂົ້າສູ່ຫອງ | ດາເນື້ອແຕ່ງຕົວ |

ຄ້ອນແຕ່ງແລ້ວ ເອີ້ນສັ່ງຫໍປາງ
ຄ່ອຍຢູ່ດີເຍີ ມິ່ງທຽນແກ້ວ ຫໍປາງແກ້ວກູ ກູເຮີຍ
ນາງຊິລາຈາກຫ້ອງ ຫໍແກ້ວຣາຊວັງ
ໃຜຈັກມານອນຫ້ອງ ຫໍທອງເຊົ້າຄ່ຳ
ນ້ອງເຄີຍເນົານັ່ງເນື້ອ ວັນນີ້ຊິດ່ວນໜີ
ກັບທັງ ສາວສີ່ຮ້ອຍ ສນົມນາງໃຊ້ຊ່ວງ ກູເຮີຍ
ຄາວນີ້ ນ້ອງຊິລາຈາກເຈົ້າ ເນົາຫ້ອງຄ່ອຍຢູ່ດີ
ນາງກໍວອນໆໄຫວ້ ຍໍມືທັງສັ່ງ
ເປັນທີ່ສັງເວດໂອ້ ສີດາໄຫ້ສັ່ງຫໍ
ພໍຄາວແລ້ວ ເຖີງຍາມຊິ້ຍາຍອອກ
ຝູງໝູ່ ໄທຫອກງ້າວ ທະຫານຫາວນາກຫຼາຍ
ເຂົາກໍຢາຍກັນລ້ອມ ເປັນແຖວລຽງສີ່
ສີດານາງນາດນ້ອຍ ເລີຍຂຶ້ນສູ່ຍານ
ຣີ່ມກີ່ງກ໊ງ ຕັນປ່ອງສູ່ຣິໂຍ
ເຂົາກໍ ໂຮມັນສຽງ ເສບກອງທັງຄ້ອງ
ແຫ່ນແຫ່ເຈົ້າ ນາງນ້ອຍເຂົ້າສູ່ຫໍ
ພໍເມື່ອ ໄປເຖີງແລ້ວ ຫໍພິກວນຈອດ
ບ່ອນຊິທານທອດເນື້ອ ນາງໃຫ້ແກ່ພີ
ເຂົາກໍ ເອົານາງເຂົ້າ ໃນຫໍອັດແຈບ
ກຸນແຈເຫຼັກໃສ່ໝັ້ນ ດີແລ້ວຕາວເມືອ
ຊາວນະຄອນຄາຍ ຈຳປາກັ້ນໂສກ

| | | | |
|---|---|---|---|
| | ວິໂຍກຍ້າຍ | ແສນຕີ້ນຕື່ນກະສັນ | |
| | ມັດຖີບັ້ນ | ຈີບກັນຖວາຍບາດ | |
| | ໂອກາດສະດວກໄດ້ | ໃຫ້ຟັງເຣື່ອງຕໍ່ໄປ | ເຈົ້າເຣີຍ |
| ບັດນີ້ | ຈັກກ່າວກ້ຳ | ໂພທິຣາດບາດານ | ກ່ອນແລ້ວ |
| | ເຈົ້າກໍເມືາຈອດຢັ້ງ | ນຳເຖົ້າຍ່າສວນ | |
| | ໄດ້ຍິນຊືນຈ້າຕານ | ມະຫາຊືນສຽງສັ່ນ | |
| ທ້າວຈຶ່ງ | ຖາມແຈ່ມເຈົ້າ | ຍາຍເຖົ້າກ່າວຈາ | |
| | ຍາຍກໍພາທີ້ຕານ | ຖແລງກອນຕາມເຫດ | |
| ທ້າວກໍ | ສັງເກດໄດ້ | ຕາມເຣື້ອງຍ່າຖແລງ | |
| ພໍເມື່ອ | ເວລາແລງແລ້ວ | ຣາຕີໄກ້ຊິຫ່ຽງ | |
| ທ້າວກໍ | ຄາດເຄື່ອງແລ້ວ | ທະຍານຜ້າຍດ່ວນໄປ | |
| ພໍເມື່ອ | ໄປເຖິງຫ້ອງ | ກວນຜີເຊືາຈອດ | |
| | ທ້າວສະຖິດແທບໃກ້ | ປະຕູຫ້ອງບ່ອນຊີໄປ | |
| ທ້າວກໍ | ຕີຍັງຫມໍ້ | ໄຫໄພກະຈັດແຕກ | |
| | ຝູງຫມູ່ຊູ່ແອງນ້ຳ | ເລີຍຂວ້າມູ່ນທະລາຍ | |
| | ຂອງທີຕົກແຕ່ງໄວ້ | ຄອຍຣັບມະຫາຍັກ | |
| ບາກໍ | ໄປທຳລາຍ | ມູ່ນກະຈາຍເພ້ມາງ | |
| ອ່ນວາ | ສືນສເລົາສ້ອຍ | ສີດາໄດ້ຍິນຫຼາກ | |
| | ວ່າຜູມ່ນຜີຍັກຣ້າຍ | ກະຫາຍເນື້ອດ່ວນມາ | |
| ນາງຈຶ່ງ | ພາທີ້ຕານ | ໂທສາຂູ່ນຄຽດ | |
| ມໍງນີ້ | ສັງມາຂືມຄຽດຮ້າຍ | ຄຳເຂັ້ມໃສ່ຜູ້ໃດ | ຍັກເອີຍ |

| | | | |
|---|---|---|---|
| | ສັງມາທຳລາຍໝູ້ | ຕີໄຫຼແອ່ງ | |
| | ຄົນມິ່ງຕີແຕກແລ້ວ | ວັນຫມາຈີ່ໃສ່ຫົວ | |
| ຄາວນັ້ນ | ທ້າວໄດ້ຍິນຄຳຕ້ານ | ສີດ້ານອຍມາດ | |
| | ທ້າວຕອບຂໍ້ | ຖແລງລໍ້ກ່າວຈາ | |
| ພຶ່ນັ້ | ບໍ່ແມ່ນແນວມານເຊື້ອ | ພີສາງສາໂຫດ | ດອກນາ |
| ຫວັງຈັກ | ມາໂຜດນ້ອງ | ພໍມັ້ນຍັກໂຂ | ດອກນາ |
| ເມື່ອນັ້ນ | ນາງໄດ້ຟັງຄຳຕ້ານ | ສູນສຽງບໍ່ແຈ້ງແຈບ | |
| | ວ່າແມ່ນຍັກໂຫດຣາຍ | ອຸບາຍລໍ້ຊິຫຼອກກິນ | |
| | ນາງຕອບຕ້ານ | ຖແລງວາດມະໂນໄຂ | |
| | ສັງຊິມາພາງຕົວະ | ຫຼອກກູສັນນີ້ | |
| | ກູນີ້ຍອມຕາຍໃຫ້ | ມິ່ງກິນກະຫາຍຢາກ | |
| | ຕາງໃຫ້ດັບຊາດມ້ຽນ | ເນື້ອຫນ້າໃຫ້ສວ່າງໃຈ | |
| ເມື່ອນັ້ນ | ໂພທິສັດເຈົ້າ | ຍໍພິນເຕາະຕ່ອຍ | |
| | ສູຣະສຽງສິ່ງແຈ້ງ | ພຣະອວນນ້ອງຊຸ່ມໃຈ | |
| ທ້າວກໍ | ຕີແກະໃຫ້ | ໄຂກູນແຈກະເດັນອອກ | |
| | ແລ້ວສະເດັດດ່ວນເຂົ້າ | ຕ່ຽງນ້ອງນັ່ງຣຽງ | |
| ບາຈຶ່ງ | ພາທີຕ້ານ | ຖາມນາງຫາເຫດ | |
| | ນ້ອງມາເນົາຢູ່ຫ້ອງ | ຂື່ນເຫດໃດ | ນ້ອງເຮີຍ |
| ແຕ່ນັ້ນ | ສີດ້ານອຍ | ວັນທາທູນພື່ | |
| | ເລົ່າເຫດໃຫ້ | ຖແລງແຈ້ງຊູ່ອັ້ນ | |
| ພໍເມື່ອ | ຈາກັນແລ້ວ | ຍັກຂື່ນດົນລ່ວງ | ມາແລ້ວ |

ມັນກໍ ເຫັນຊຸແອ່ງນໍ້າ ຊານຖ້ວຍມູ່ນເພ
ມັນກໍ ໂກທາເຂັ້ນ ມະໂນໃນເຂົ້າອິ່ງ
ຍັງບໍ່ໄດ້ ພະເນ້ພ່າຍດ່ວນເຖິງ
ມັນກໍ ຕິງຕັງເຂົ້າ ໃນທໍ່ຟ້າວຟັ່ງ
ສົມໃຈມັກເກັ່ງກ້າ ໃຫ້ນໍ້າຂ້າງເພ
ມັນກໍ ແລເຫັນເຈົ້າ ທັງສອງນ້ອຍໜໍ່
ວ່າຊິຈັບຈິກເຈົ້າ ກິນຊໍ້າເທື່ອດຽວ
ເມື່ອນັ້ນ ໂພທິສັດເຈົ້າ ອີ່ມປານປູ່ນປຽບ
ຣິດເດດກ້າ ທະຍານເຂົ້າໃສ່ຍັກໂຂ
ມີກຳເກົ້າ ຈັບຫົວຍັກໃຫຍ່
ຖອດດາບງ້າວ ພຣະຂັ້ນກ້າວ່າຊິຟັນ
ຍັກກໍຍໍມອິ້ນ ຂໍພຣະອົງໃຫ້ຟັນຟາດ
ຂໍໃຫ້ ດັບຊາດຊໍ້າ ນອນມຽນສິ່ງເວນ
ຄັນພຣະອົງບໍ່ທຳການຂ້າ ຊິທຳເວນຫຼາຍຊາດ
ຄັນບໍ່ຂ້າໃຫ້ຕາຍຊາດນີ້ ກົ້ມໜ້າແມ່ນບໍ່ວາງ ວ່າຍແລ້ວ
ເມື່ອນັ້ນ ພູວະນາດທາວ ຫຼິງປ່ອງປາຣະມີ
ກະຕັນຍູຍານ ແວນແຍງຍໍ້ແກວ
ຊົງພຣະຂັນຕິຕັ້ງ ໃນໃຈບໍ່ກົວໂກດ
ຍັງບໍ່ ໄຂພຣະໂອດອາ ເພີຍລົ່ນວາຈາ
ຊຸບເປ່ກຂ້າທັນ ນິ່ງເສັຽບໍ່ເຖົ້ານຕອບ
ຍັກນັ້ນ ສັງຂານຂ້ອນ ຈອນຈຳປະຕູຄາດ

| | | |
|---|---|---|
| | ກົມຫົວຍັງຈ່ອງນ້າວ | ເຖິງເທົ້າຍັກສາ |
| ອັນວ່າ | ຊິວາເວັ້ນ | ບາຄານບໍ່ທຳໂທດ |
| | ຍັກຫາກເຖິງແກ່ເບື້ອງ | ກົມຂໍ້ຂາດຄິງ |
| | ຊິວາເວັ້ນ | ເບັນຈະອົມດັບຊາດ |
| | ຍັກກໍດັບຊາດມ້ຍົມ | ມອນມ້ວຍມິ້ງມອນ |
| ເມື່ອນັ້ນ | ພູວະນາດທາວ | ເຫັນຍັກສາມໍຣະນາດ |
| | ທາວກໍເກັບຊາກຮ້າຍ | ໄປຖິ້ມແຕ່ສະພັງ |
| | ແລ້ວຈິ່ງໄປຫານ້ອງ | ສີດານ້ອຍນາດ |
| | ຊື່ມກອດນ້ອງ | ໂຈມອຶ້ມໃສ່ເພົາ |
| | ສອງກໍນອນໃນຫ້ອງ | ພັນທະນັ້ງກຽວກອດ |
| | ການຣາຄະເຣົ້າ | ໂຣມນ້ອງອື່ມບໍ່ເປັນ ເຈົ້າເຣີຍ |
| ບັດນີ້ | ຈັກໄດ້ຊຸກເຣື່ອງພົ້ນ | ກັມເກົ່າເວັ້ນຫັງ |
| ອັນວ່າ | ຊາດກ່ອນນັ້ນ | ນາງສີດານ້ອຍຫນໍ່ |
| | ເກີດເປັນລູກພໍ່ບ້ານ | ພານເຖົ້າແກ່ຂຸແມງ |
| | ມີແຕ່ພາກັນຂ້າ | ສັກກູນາໃນປ່າ |
| | ຍັກສາເກີດເປັນນົກກອີ້ແກ້ວ | ພານເຖົ້າວ່າຊິກິນ |
| | ສີດາຍໍ້ມອ້ນ | ວອນຂໍນຳພໍ່ |
| ລູກຈັກ | ຂໍລ້ຽງໄວ້ | ສາລີແກ້ວຢ່າສູ່ກິນ ພໍ່ເຣີຍ |
| ນາງກໍ | ທຳພຽນລ້ຽງ | ສາລີກາຊຸປຖາກ |
| | ຫາຫມາກໄມ້ | ພຽນປ້ອນຊູ່ວັນ |
| ຄາວນັ້ນ | ໂພທິສັດເຈົ້າ | ເປັນສາມະເນນໄປເດີນທ່ຽວ |

ໄປພົບພໍ້ ສາລິກາແກ້ວແອ່ວຂໍ
ໃຫ້ຂ້ອຍຂໍດອມທ້ອນ ສາລິກາພາຍໂພດ ອອກເອີຍ
ຂ້ອຍຈັກໄປລ້ຽງໄວ້ ພຽມປ້ອນບໍ່ໃຫ້ຕາຍ ດອກນາ
ນາງຈິ່ງ ພາທີ້ຕານ ຂານຕອບສາມະເນນ
ອັນວ່າ ສາລິການາງ ຣັກແພງພົ້ນລ້ຽງ
ແພງເໝືອນແກ້ວ ໃນຕາດວງພຣະເນດ
ຣັກຍິ່ງພ້ຽງ ແພງໄວ້ເກິ່ງຕາ
ແຕ່ນັ້ນ ສາມະເນນກ່າວຕ້ານ ຂານຕອບສີດາ
ຂາຕະມາບໍ່ມີທັ້ຽງ ຊັບເງິນຄຳແກ້ວ
ມີແຕ່ຜ້າ ໃນກາຍຍ້ອມຝາດ
ວ່າແລ້ວ ປາດແຜ່ນຜ້າ ກາສ່າໃຫ້ແກ່ນາງ
ເນນກໍເອົາຍັງແກ້ວ ສາລິກາມາປ່ອຍ
ມົ້ມບາຍຣ້າຍ ພານຊີ້ຂາສ່ວງໄພ
ນາງກໍ ເອົາຍັງຜ້າ ກາສາຊັກຟອກ
ທຳເປັນທົງຊໍ່ຟ້າ ບູຊາແກ້ວໜ່ວຍສາມ
ອັນວ່າ ຕາພານເຖົ້າ ລູກທະໂກທິນະຊາດ ປາງນັ້ນ
ຫາກແມ່ນ ພຣະບາດເຈົ້າ ຈຳປາກ້ວາງນັ່ງເມືອງ ນີ້ແລ້ວ
ອັນວ່າ ບຸດຕີ້ນ້ອຍ ນາຍພານປາງກ່ອນ
ຫາກແມ່ນ ສີດານາດນ້ອຍ ເປັນແກ້ວລູກພຍາ ນີ້ແລ້ວ
ອັນວ່າ ສາລິກາແກ້ວ ນາງພຣົມອຸປຖາກ ປາງນັ້ນ
ເກີດເປັນຍັກໂຫດຮ້າຍ ຕົວເຖົ້າຖ່າຍໂສມ ນີ້ແລ້ວ

ກ-ນໍ ໑໓໑໑



ອັນວ່າ ສາມະເນນນ້ອຍ ທິງສິນສງວນເພດ ປາງນັ້ນ
ຫາກແມ່ນພຣະບາດທ້າວ ອີງລ້ຳໜໍ່ໂພ ນີ້ແລ້ວ
ພຣະກໍມາພົບພໍ້ ສີດານາງພ່າຍໂພດ
ເປັນເພາະບຸນແບ່ງເບື້ອງ ກູສິນສ້າງຮ່ວມກັນ
ຈຶ່ງເປັນພົງພັນເຊື້ອ ເຄືອໃຍຫຼາຍຊາດ
ມາພົບພໍ້ ພໍໃຫ້ຍາກກຸ່ໃຈ ເຈົ້າເຮີຍ
ຍຸດຕິການັ້ນ ບຸພກັ້ນແກ່ກາວ
ຂໍໃຫ້ຊາວພີ່ນ້ອງ ຟັງແລ້ວໃຫ້ຮ່ຳເພິງ ນັ້ນທ້ອນ
ມັບແຕ່ ບາຄານທ້າວ ປະໂລມນາງນອນກອດ
ຢູ່ແຫ່ງຫ້ອງ ຫໍກ້ວາງພ່ຳນານ
ພໍເມື່ອ ຣາຕີຂ້ອນ ພຣະແຂໄຂຊໍພົ້ນພູ່ງ ມາແລ້ວ
ພຣະສູຣິແສງສ່ວາງແຈ້ງ ກ້າຂຽງຂອກຮັ່ງ
ທ້າວກໍ ຈາຍັງນ້ອງ ຊິລາໄປດັ້ນດ່ວນ
ອາທິດສວຍສ່ອງແຈ້ງ ຊາວບ້ານເພີ່ນຊິເຫັນ
ໃຫ້ນ້ອງເມົາໃນຫ້ອງ ຄອງຫາພຣະພໍ່
ຍາມເພີ່ນຮູ້ເຫດເບື້ອງ ຄນິງໄຫ້ຊິດ່ວນເອົາ ນ້ອງເຮີຍ
ແຕ່ນັ້ນ ນາງໄດ້ຟັງຄຳຕ້ານ ອັດສູຊົນແຄ້ນຄຶ່ງ
ສໍຣະການກາຍກົ້ມ ປະນົມໄຫ້ວວີ່ງວອນ
ກະຣຸນາໂຜດນ້ອງ ເອົາມື່ງເມືອນຳ ພີ່ທ້ອນ
ສະກົນກາຍນາງ ຊິນອຍເວນຖວາຍອ້າຍ
ຂໍຈົ່ງ ສົງສານຂ້າ ສີດານອນປ່ຽວ ປາງນີ້

ທຸກຂະເວດໂອ້ ຣະອາເອື້ອນຊິເພິ່ງໃຜ
ເມື່ອນັ້ນ ພູວະນາດໄທ້ ຖແລງຕອບຄຳນາງ
ພີ່ບໍ່ໄລລານາງ ຫາງຊະເທີນຊຶມຊ້ອນ
ດຽວນີ້ ເວລາຂ້ອນ ຫາຍໂພຍພິດພຍາດ
ສັພເວນບາບຮ້າຍ ຫາຍຮ້ອນຮ່າງຄັງ ນ້ອງເຮີຍ
ເມື່ອນັ້ນ ນາງຄານນ້ອຍ ຟັງບາຖແລງພາກ
ມິແຕ່ ຂໍຈາກນ້ອງ ນາງຫ້າມຊິບໍ່ຟັງ
ໃຫ້ນ້ອງຂໍຍັງຜ້າ ຜືນແພງຂອງພີ່
ພໍໄດ້ພິຜ່າງຕູ້ມ ພຍານອ້າງຂ່າວເຖິງ
ນ້ອງຈັກ ເອົາແຫວນແກ້ວ ທັມມະໂຣງຖວາຍພີ່
ເປັນສັກຂີອ່າວອ້າງ ພຍານນ້ອງເມື່ອຊິໄປ
ແຕ່ນັ້ນ ໂພທິສັດໄທ້ ໄດ້ຍິນຄຳນາງນາດ
ໃຈຊິຂາດສະບັ້ນ ໄດ້ປັນຜ້າຝາກນາງ
ຊື່ວ່າໂກໃສສົ້ວ ຂອງຂວັນລ້ຳຄ່າ
ຝາກສີດານາດນ້ອຍ ຂອງຄ້ຳມິ່ງຂວັນ
ສ່ວນວ່າ ສີດານ້ອຍ ເອົາຂອງຂວັນຝາກພີ່
ທັມມະໂຣງລູກລ້ານ ຖວາຍອ້າຍເພື່ອພຍານ
ອັນວ່າ ບາຄານທ້າວ ລານາງສະເດັດດ່ວນ
ເຖິງຈົມໃກ້ ເຮືອນເຖົ້າຍາສ່ວນ
ຍັງບໍ່ ບໍຣະບວນຖ້ວນ ໂພທິຍານຍາວຍິ່ງ
ບົດນີ້ສັງເຂບຂໍ້ ໄຂໄວ້ແວ່ນແຍງ ເຈົ້າເຮີຍ

| | | |
|---|---|---|
| ພໍເມື່ອ | ວັນຮຸ່ງເຊົ້າ | ມື້ໃຫມ່ສວຍມາ |
| | ຝູງຫມູ່ຊາວເມືອງເຂົ້າ | ແຕ່ງຄົວຍາມເຊົ້າ |
| ຄາວນັ້ນ | ຍັງມີຊາວເອົາຫຽ້າ | ແສນພຍາຣະວັງຣາດ |
| ມັນກໍ | ໄປກ່ຽວຫຽ້າ | ມາໃກ້ຝັ່ງຫນອງ |
| | ແລ້ວຈິ່ງມອງເຫັນໄດ້ | ຍັກຂິນີຕາຍຊາກ |
| | ມັນກໍປາກບໍ່ໄດ້ | ກົວຍ້ານສິ່ນສາຍ |
| | ທັງເລົ່າສົງສັຍແທ້ | ມັນຕາຍຫຼືບໍ່ |
| ມັນກໍ | ຫຽັບເຂົ້າໃກ້ | ເອົາຫຼາວໄມ້ທັ່ງດູ |
| ກໍຈິ່ງ | ເຫັນເລືອດຍ່ງຍ້ອຍ | ໄຫຼຫຼັ່ງທັງເຫມັ້ນ |
| | ມັນຈິ່ງໄວວາລູກ | ແລ່ນຄືນທັງຮ້ອງ |
| ມັນກໍ | ໄປຕົວະເຍີ້ຍ | ຊາວເມືອງຫຼໍ້ຫຼອກ |
| | ເຮົາຫາກຂ້າຍັກໄດ້ | ຕາຍຄ້າງແຄ່ຫນອງ |
| | ຫຼຽວເບິ່ງໂລຫິດເປື້ອນ | ຫຼາວເຮົາແທງສຽບ |
| | ໃຜຜູ້ບໍ່ເຊື່ອແທ້ | ໄປຢ້ຽມເບິ່ງດູ ນັ້ນທ້ອນ |
| ແຕ່ນັ້ນ | ເຂົາກໍໄຊໂຍຮ້ອງ | ສຽງດຽວເປັນຣະບຽບ |
| | ເອີ້ນປ່າວບ້ານ | ສະເຫມືອນຂ້າທ່ຽງຈິງ |
| ເມື່ອນັ້ນ | ຂຸນແສນເຖົ້າ | ເມືອທູນພູວະນາດ |
| | ບອກເຫດເບື້ອງ | ໃຂ້ຂໍ້ດັ່ງໄດ້ຍິນ |
| ເມື່ອນັ້ນ | ພຣະໄດ້ຍິນຄຳຕ້ານ | ແສນເມືອງທູນຂ່າວ |
| | ພໍປານໄດ້ຫມື່ນຕື້ | ຄຳເຂັ້ນໃສ່ມື |
| ພຣະກໍ | ບັນຊາໃຫ້ | ນາຍນັກການເຮວຣືບ |

| | | | |
|---|---|---|---|
| | • ໃຫ້ໄປເບິງຍັກຖ່ອຍຮ້າຍ | ຕາຍແທ້ທ່ຽງຈິງ | ນັ້ນລີ |
| ອັນນຶ່ງ | ຍຸດຕິແກ້ວ | ທິດາລູກມິ່ງ | ກູນັ້ນ |
| | ນາງຊິຍັງຢູ່ຄ້າງ | ໃນຫ້ອງແຫ່ງທໍ | ນັ້ນບໍ່ |
| ເຂົາກໍ | ໂດຍຄຳເຈົ້າ | ພຣະອົງການຕັດບອກ | |
| | ປ້າຍຂົ້ນມາ | ແຖມແສເຮັ່ງເຮວ | |
| | ເຖິງຈົມໃກ້ | ເຫັນຍັກຕາຍຈິງ | |
| | ເຫັນທັງນາງງາມສ້ອຍ | ສິດາລູກພຣະບາດ | |
| ກໍຈຶ່ງ | ກັບຕ່າວມ້າ | ດິນໄຫວພໍ່ພຍາ | |
| | ຂ້ານ້ອຍໄປດູແລ້ວ | ເຫັນຕາຍແຈ້ງແຈບ | |
| | ກັບທັງນາງນາດນ້ອຍ | ສິດາໄຫ້ບໍ່ຕາຍ | |
| ເມື່ອນັ້ນ | ພຣະໄດ້ຟັງຄຳຕ້ານ | ນາຍມັ້ກການບືນບອກ | |
| | ພຣະຫັດຍົກໃສ່ເກົ້າ | ມະໂນນ້ອຍຊື່ນບານ | |
| | ພຣະຈຶ່ງຣາງວັນໃຫ້ | ຄຳພັນປຸນແຈກ | |
| | ໄວ້ແກ່ນາຍຫຍ້າມ້າ | ປະສົງໃຫ້ຣາຊທານ | |
| | ໃຫ້ເປັນນາຍທະຫານທ້າວ | ຄົນກິ່ງເດດ | |
| | ບໍ່ໄດ້ຫາຫຍ້າມ້າ | ເປັນຂ້າຄົ່ງຫຼັງ | ເຈົ້າເຮີຍ |
| ແຕ່ນັ້ນ | ພຣະຈຶ່ງໂອກາດຕີ້ງ | ຄ້ອງລັ່ນເທິງບົນ | |
| | ຝູງໝູ່ເສນາໄຫຼ | ຫຼັ່ງມາປານນ້ຳ | |
| | ໃນພະລານກວ້າງ | ຄົນເຕັມແໜ້ນອັ່ງ | |
| | ກຳຊັບຊ້ຳ | ຊິນຄຳນ້ອຍເຂົ້າສູ່ເມືອງ | |
| ພຣະກໍ | ຫວາຍທັງຊ້າງ | ມົງຄົນຕົວປະເສີດ | |

ສະເດັດດ່ວນຜ້າຍ    ເອົາແກ້ວລູກຕົນ
ເອົານາງຂຶ້ນ    ຄຶດສະສານຊິງນັ່ງ
ຝູງໝູ່    ຂ້າມະຫາກ້ລອມ    ສຽງຂ້າງໂຫ່ວັນ
ພໍເມື່ອ    ມາເຖິງຫ້ອງ    ທໍປາງຜ້າສາດ
ຝູງໝູ່ອຳມາດເຕົ້າ    ສົມແໜ້ນນັ່ງຄອຍ
ຊາວນະຄອນກວ້າງ    ຈຳປາລູ່ຫຼົງ
ຄັບຄັ່ງລົ້ນ    ສນາມກວາງຄັ່ງຄົນ
ໃຜກໍ    ຫວັງເຫັນໜ້າ    ສີດາກັບເກີດ
ນາງຫາກ    ພົ້ນໂທດຮ້າຍ    ຄືນເຂົ້າສູ່ນະຄອນ
ເມື່ອນັ້ນ    ພຣະບາດຕ້ານ    ຖາມນາດບຸດຕີ
ຄາວເມື່ອເມືອໃນຫ້ອງ    ທໍພິກອນຈອດ
ໃຜຜູ້ມາໂຜດໃຫ້    ນາງນ້ອຍຈຶ່ງບໍ່ຕາຍ    ລູກເອີຍ
ເມື່ອນັ້ນ    ນາງກໍຍໍກອນນ້ອມ    ບິດາຕົນພໍ່
ຖແລງວາດເວົ້າ    ໄຂແຈ້ງບໍ່ບັງ
ປາງນັ້ນ    ຍັງມີບາຕານຫ້າວ    ໂພທິຍານພາຍໂຜດ
ສະເດັດສູ່ຫ້ອງ    ຫານ້ອງກ່າວຈາ
ພໍເມື່ອ    ຍັກໂທດຮາຍ    ສະເດັດມາສູ້ນຄຽດ
ວ່າຈັກຈັບລູກນີ້    ກິນພ້ອມພໍ່ບາ
ບາກໍ    ລູກຕໍ່ສູ້    ຣອວຣົບມະຫາຍັກ
ຈັບຫົວພີ    ຍັກຍອມກົວຢ່ານ
ບາກໍ    ເອົາໄປຖີ້ມ    ທາງໃດບໍ່ຮູ້ແຫ່ງ

ຫຼືແມ່ນອ້າຍຍັກຣ້າຍ  ບໍ່ເຫັນແທ້ຕໍ່ຕາ  ພໍ່ເຣີຍ
ເຫັນແຕ່ກັບຫາທ້ອງ  ທໍພີບ່ອນລູກຢູ່
ຈັກວ່າເມືອງມົງບ້ານ  ບານັ້ນຢູ່ທີ່ໃດ
ລູກຈຶ່ງ  ເອົາແຫວນໃຫ້  ຂາບູນຖວາຍມອບ
ໃຫ້ເປັນຂອງຕອບຕ້ອນ  ສົນອງທ້າວຄາຣຸນ
ທ້າວຈຶ່ງ  ເອົາພື້ນຜ້າ  ໂກໃສ່ສີຕ່າງ
ປາດເຄື່ອງໃຫ້  ພຍານອ້າງມອບນາງ
ວ່າແລ້ວ  ບາຍເອົາຜ້າ  ໂກສີໃສ່ສະອາດ
ທູນຖວາຍພຣະພໍ່ເຈົ້າ  ເອົາໃຫ້ລໍ່າແຍງ
ພຣະຈຶ່ງ  ແລລ່ຳປ້ຽມ  ເຫັນຫຼາກກໍໃຈຈິດ
ຮ້ອຍວ່າເທພາພ້າຍ  ໂຜດເຣົາໃຫ້ຫາຍຮ້ອນ
ຜ້ານີ້  ບໍ່ແມ່ນສາມານເຊື້ອ  ຊາວຊົມຊັ້ນເທົ່າ
ໃຫ້ຜູ້ບູນມາກົ້ລົນ  ຈຶ່ງມີຜ້າຄ່າຄາມ
ຄວນຈັກ  ເກນຄົນໃຫ້  ຫາແພຜ້າຕ່ຳ
ຄົນຫາກນຶກແບບດ້ານ  ເຊີງຜ້າຕໍ່ກັນ  ດັ່ງນັ້ນ
ເຮົາຈັກ  ຍໍເນືອງໃຫ້  ຖວາຍມັນຍໍມອບ
ກັບທັງລູກມິ່ງຕົ້ນ  ຊີທານໃຫ້ບໍ່ຂີນ
ເມື່ອນັ້ນ  ເສນາເຂົ້າ  ຄົນໃນໃຊ້ແລ່ນ
ເອົາກໍເຕີນປ່າວຮ້ອງ  ຊາວບ້ານຊູ່ເຊື້ອນ
ໃຜຜູ້ມີພື້ນຜ້າ  ໂກໃສ່ສາວແລບ
ສີປະດັບຣະບັບຍ້ອຍ  ໃຫ້ມາວງເມື່ນສີ

ໃຜຜູ້ມີພື້ນຜ້າ ໃຫມງານໄປຕິດຕໍ່
ຄັນແມ່ນ ຖືກຖ້ອຍຄ້າມ ເຊີງຜ້າແມ່ນພື້ນ ດັ່ງນັ້ນ
ເມືອງຫຼວງກວ້າງ ຈຳປານັກຄະເຣດ
ກັບທັງສີດານາດນ້ອຍ ຊິຍໍໃຫ້ມອບເມືອງ
ເມື່ອນັ້ນ ຝູ່ງຊ່ຳເຊື້ອ ຊາຍຫນຸ່ມຍຸວະຊົນ
ລືມນະຄອນຈຳປາ ຫນຸ່ມຊາຍຫຼາຍລ້ານ
ບາງພ່ອງ ຂ້າສຶກຫານ ຟັນຄອນແຂວຫຼ່ອນ
ເກີດຊະອອນຊະອ້ອນ ພື້ນຜ້າແລ່ນຫາ
ຊະຣາການຫ້າວ ຫົວຂາວປານປຸ່ຍນູນ
ສຽງສັ່ນມິ່ນຫວັ່ນຫູ້ນ ຫາຜ້າສິ່ງພຍາ
ນັບແຕ່ ເຈັດວັນຖ້ວນ ມວນຊົ້ນລົ້ນຫຼັ່ງ
ຫວັງຢາກໄດ້ກ່ອມກົ້ງ ຍົ້ງແກ້ວຫນໍ່ເມືອງ
ປາຖນາສເວີ້ຍຫອງ ນະຄອນທອງທົ່ງແຫ່ນ
ຈິ່ນວ່າ ແປ່ນເປົ່າກ້ຽງ ຫນົດສ້ຽງຊູ່ລົ້ນ
ບໍ່ເປັນພົ້ນໃຜໄດ້ ສເວີຍເມືອງຄອງຣາດ
ບູນບໍ່ ເດີຍປະກ້ອບແກ້ວ ເສັ້ຽຜ້າເປົ່າດາຍ
ເມື່ອນັ້ນ ຣາຊາທ້າວ ຖາມຊູ້ນທາງເຫດ
ໃຜຜູ້ຍັງເສດລ້າງ ເມືອງບ້ານແຫ່ງເຮົາ
ແຕ່ນັ້ນ ເສນາທ້າວ ທູນລະອອງແຈ້ງເຫດ
ເຫຼືອແຕ່ຫຼານຢ່າເຖົ້າ ຍາຍເຝົ້າຢູ່ສວນ ພຣະເຣີຍ
ພໍໄດ້ຟັງກະບວນເບື້ອງ ເສນາທູ້ນເຫດ
ພຣະຈົ່ງ ຕັດບອກໃຫ້ ທູ້ນທ້າວຫຽວພລັນ
ເອົາກໍໂດຍຄຳເຈົ້າ ອາດຍາຫັນຕັດບອກ

| | | |
|---|---|---|
| ພຣະຈິ່ງ | ຕັດບອກໃຫ້ | ຫູ້ມທ້າວທ່ຽວພລັນ |
| | ເຂົາກໍໂດຍຄຳເຈົ້າ | ອາດຍາທັມຕັດບອກ |
| | ປ້າຍຂຶ້ນມ້າ | ແຖມແສ້ແລ່ນໄວ |
| ພໍເມື່ອ | ໄປເຖິງຫ້ອງ | ເຄຫັງເຮືອນຍ່າ |
| | ຂຶ້ນບອກເບື້ອງ | ຖແລງຂໍ້ຂໍບາ |
| ເມື່ອນັ້ນ | ໂພທິຍານເຈົ້າ | ຈາຂູນຖແລງຕອບ |
| | ເຮົານີ້ຄົນທຸກໄຮ້ | ບໍ່ມີຜ້າຊິ່ຕເຊິງ ດອກນາ |
| | ຢ່າໄດ້ສົງກາທ້ອນ | ຄອນເຮົາທຸກຂນອດ |
| | ມີແຕ່ຜ້າຢູ່ເນື້ອ | ທັງຊ້ຳຕໍ່ກາງ |
| ໃຫ້ທ່ານ | ຄືນເມືອໄຫວ | ພຍາຫຼວງຕາມເຫດ |
| | ຢ່າໄດ້ຄິດຂາວໂອ້ | ຄນິງກ້າຝ່າຍເຮົາ ວ່າເນີ |
| ເມື່ອນັ້ນ | ຝູງຄົນໃຊ້ | ກັບຄືນໂດຍຣີບ |
| | ຂຶ້ນກາບໄຫວ | ພຍາເຈົ້າບອກການ |
| ເມື່ອນັ້ນ | ພຍາເຈົ້າ | ຈຳປາຕົມອາດ |
| | ພຣະກໍຈຳຂ້າໃຊ້ | ໄປຊ້ຳເທື່ອສອງ |
| ນັບແຕ່ | ໄປເຊີນທ້າວ | ບາບູນບຸຕຣາດ |
| | ສາມເທື່ອຖ້ວນ | ບາທ້າວກໍບໍ່ມາ |
| ພຣະຈິ່ງ | ບັນຊາໃຫ້ | ໄປລອງເທື່ອສີ່ |
| | ຄັນບໍ່ມາເທື່ອນີ້ | ສູ້ຊິ້ມຮົມມອດຊີວັງ |
| | ພຣະກໍຈັດສົນໄດ້ | ຄົນດີຄັດເລືອກ |
| | ອ້າຍທະຫານຫຽ້ງມ້າ | ໄປໜ້າກ່ອນພົນ |
| | ເຂົາແຕ່ຄົນຫານກ້າ | ເຕັມອັດຕຣາພັນນຶ່ງ |

ຝູງໝູ່ຊ້າງແລະມ້າ ໃຫ້ສູ້ຫ້າງແຕ່ງໄປ
ກັບທັງຂັນເງິນພ້ອມ ຂັນຄຳໃຫ້ສູ້ແຕ່ງ ເອົາເນີ
ທຽນໃສ່ໄວ້ ປະສົ້ງຖາຣາຊທານ
ກັບທັງປີນຢ່າໝ້ອງ ສຳຫຼັບຕົວໃຫ້ສູ່ແທ່
ເສດສັດໂກ່ງກັ້ງ ປະຄົ້ສ່ວຊຸ່ແສງ
ຄັນບໍ່ມາເທື່ອນີ້ ຊີວາສູບໍ່ມີລອດ
ກູຈັກຟັ້ນມອດມຽນ ຕາຍຊ້ຳໃຫ້ສ່ວາງວອນ ນັ້ນແລ້ວ
ເມື່ອນັ້ນ ເສນາຂ້າ ມູນຕີໃນນອກ
ຝັງພຣະເອື້ອນໂອດອ້າ ຕັດຊື່ສົ່ງຄະດີ
ເຂົາກໍ ກົວຕາຍແທ້ ເຣວພະລັນຈັດຣິບ
ນາຍທະຫ້ານຫຼາມ້າ ໄປໜ້າກ່ອນພົນ
ພໍເມື່ອ ໄປເຖິງລູ້ມ ຊູງເຮືອນຍາຍຍ່າ
ເຂົາກໍຢາຍໝູ່ລ້ອມ ເຮືອນເຖົ້າແວດຣະວັງ
ກົວແຕ່ຊາຍພ້ວຍຣາຍ ຄົນຈົນທຸກຂມອດ
ຫຼົບຫຼີກເຕັ້ນ ໝີ້ຄົ້ກອນເຣົາ
ເຂົາກໍ ເອົາກັ້ນເຂົ້າ ໄປດູເຣືອນຍາຍຍ່າ
ເຫັນແຈບແຈ້ງ ບາທາວບໍ່ໜີ
ແລ້ວຈົ່ງຍໍຂັນຂົ້ນ ທູນຫົວປະນົມນອບ
ກົ້ມຂາບໄຫວ້ ທູນທ້າວຫຢື່ຳ
ຝູ້ງຂ້າ ເຊີນທັ້ນທາວ ປານີຜາຍໂຜດ
ຄັນບໍ່ໄປເທື່ອນີ້ ຊີວາຂ້າບໍ່ຍັງ ແທ້ແລ້ວ

ເມື່ອນັ້ນ ພູວະນາດທ້າວ ຫຼິງລ່ຳສີຣະຍານ

ວິຈານຄິດ ໄຕຕອງເຫັນແຈ້ງ

ກົວທ່ເປັນເວນຂ້ອງ ເຖິງຕົນພູວະນາດ

ຝູງໝູ່ເສນາທ້າວ ຊິຕາຍຍອມຄອບເຮົາ ນີ້ແລ້ວ

ພໍເມື່ອ ພຣະຮ່ຳແລ້ວ ເອື້ອນພຣະໂອດພາທີ

ສູຣະສຽງສູນທອນ ອ່ອນຫວານຂານແຈ້ງ

ພຣະຫາກ ຫັນເຮົາແຫ ບໍ່ມີຂືນຂັດວາດ

ກົມຫາກຣາມຮອດໃກ້ ຊິໜີລີ້ຫຼີກບໍ່ເປັນ

ບາກໍ ຫວາຍທົງຜາ ພະແສງອູ້ນງາວຖາບ

ຫັມມະໂຮງສອດກ້ອຍ ຕະເກິ້ງມາວແຕ່ງຕົວ

ພຣະຫັດຖືໄມ້ເທົ້າ ຫັນດັງສິດທິເດດ

ຝູງໝູ່ເສເນດນ້ອມ ເຊີນທ້າວເຂົ້າສູ່ວັງ

ເຂົາກໍ ເຊີນສູ່ຊາງ ສານແສ່ວສັງວານ

ພະລາຫີກຫັດແຖວ ໝູ່ອາຊະໄນມາ

ດູ່ດັ່ງ ທູ່ຣະນີ້ມາງ ຂາງສະເທືອນດີນໄງ່

ພູວະນາດໄທ້ ເຖິງເທົ້າຮອດເມືອງ

ເມື່ອນັ້ນ ໄປເຖິງກ້ຳ ຈຳປານັກຄະເຣດ

ເຂົາກໍຢາຍໝູ່ໄວ້ ສອງກ້ຳຫວ່າງຖໜົນ

ເຂົາກໍພາກັນຊອງ ມາດູພູວະນາດ

ເຕັມຂວ່າງຄູ້ມ ທາງເຂົ້າສູ່ວັງ

ຝູງໝູ່ເສເນດທ້າວ ແຫ່ພຣະອົງນຳຮອດ

| | | |
|---|---|---|
| | ເຖິງດ່ວງຊູ້ມ | ພຍາເຈົ້າຈອດເກີຍ |
| ບາກໍ | ລາລົງຊາງ | ດົດສະສານແສນປະເສີດ |
| | ສະຖິດແທບໃກ້ | ພຍາເຈົ້າບໍ່ກົວ |
| ອັນວ່າ | ໂສມສເລົາສອຍ | ສີດານາງນາດ |
| | ນາງກໍທົນບໍ່ໄດ້ | ຫຼົງຢ້ຽມໄລ່ຄອຍ |
| ອັນວ່າ | ສີດານ້ອຍ | ສະຕິລອຍລືມເພດ |
| | ສເດັດດ່ວນເຂົ້າ | ເຖິງທ້າວທີ່ຢໍາ |
| | ພຣະສ໌ຽນຮອງພົ້ມ | ທູນລະອອງຝ່າພຣະບາດ |
| | ອັດສູຊົມຊົບຫນາ | ສອງເບ໌ອງຢ່າວຍົມ |
| ອໍໃຫ້ | ພຣະພີ່ເຍ໌ຍອນ | ອົດໂຜດປານີ |
| | ຊາວນະຄອນຈໍາປາ | ຊື່ນຊົມດອນທ້າວ |
| | ຊາວນະຄອນຄາຍ | ເມືອງຫຼວງກັບເກີດ |
| ອໍໃຫ້ | ພີ່ໂຜດໃຫ | ເຖິງຊູ້ເທື່ອສອງ |
| ນາງກໍ | ຈັບເອົາເຊິງຜ້າ | ຖວາຍບາໃຫ້ຕໍ່ |
| | ໂພທິສັດແຈມເຈົ້າ | ເອົາຜ້າຕໍ່ກັນ |
| ປານວ່າ | ປຸ່ມແປກດານ | ພື້ນແຜ່ນໂກໃສ |
| | ມັນທາກພໍດີກັນ | ດ່ອງງານສເມີ້ແຕມ |
| ແຕ່ນັ້ນ | ຣາຊາຕ້ານ | ຈາອົງພູວະນາດ |
| | ເມືອງມິ່ງກ້ວາງ | ກວມພົ່ນແຜນໄຕ |
| ອໍໃຫ້ | ລູກແກນໃຫ | ຕູ້ມໄພດອງເມືອງ |
| | ພໍ່ຈັກວາງພາຈະໃຫ້ | ແກບາຄອງຊູມ |

ພໍເມື່ອ ພຣະກ່າວແລ້ວ ຕ້ານຕໍ່ເສນາ
ໃຫ້ເຂົາເຕົາຖ້າຕຶກ ແຕ່ງປະລໍາພານກ້ວາງ
ພໍເມື່ອ ບໍຣະບວນແລ້ວ ທໍາງານສົມກຽດ
ພຣະກໍ ເຊີນອ່ອນນ້ອຍ ສອງເຈົ້າຂຶ້ນສູ່ພາຍ
ຝູງໝູ່ພົງພັນເຊື້ອ ມູດຫາຫອມສົງໂສດ
ນໍ້າດອກໄມ້ ຈັນຖູ້ໂກ່ງຣີນ
ບັດນີ້ ເມືອງຫຼວງໃຫ້ ບາບູນສເວີຍຣາດ
ຝູງຄະນາຊາດເຊື້ອ ຫນີຣອນໄດ້ເພື່ງເຢັນ
ພອມພາບແລ້ວ ສົງໂສດພົມຜ້າຍ
ເສນາໃນ ເລີກລາເມືອບ້ານ
ເມື່ອນັ້ນ ອົງກະສັດໄທ້ ເຊີນອວນສອງອ່ອນ
ຂຶ້ນສູ່ຜາສາດແກ້ວ ກູ້ງກວາງເກົ້າສວັນ
ສາວສນົມຖວາຍໃຫ້ ບາບູ້ນທຶກໝື່ນ
ໄວ້ຜ່າງຂ້າງ ຂວາຊາຍແກ່ວງວີ
ນັບແຕ່ ບາຄອງສ້າງ ສເວີຍຣາດຈໍ້າປາ
ໂຣຄາຫາຍ ຫາງໂພຍໄພ້ຣອນ
ຫຼາຍເນື້ອງນ້ອມ ສາທຸການສົມສ່ວຍ
ນັບແຕ່ ໃຕ້ລຸ່ມຟ້າ ມາຂຶ້ນສ່ວຍສົມ ທ້າວແລ້ວ
ພໍເມື່ອ ບາທົງສ້າງ ນະຄອນຫຼວງຕູ້ມໄພ່
ພຣະຈົ່ງ ຕັດບອກໃທ ຊາວບ້ານທ້ຽວພລັນ
ພາກັນໄປຫາໄມ້ ຫຼົວຟືນເຜົາຈູດ

| | | |
|---|---|---|
| | ເຜົາຈູດສົບສາບເຈົ້າ | ຍັກໂຂເຖົ້າສິ່ງສະການ |
| | ຫຼຽວເບິ່ງໄຟລາມໄໝ້ | ຍັກໂຂຕາຍຊາກ |
| | ເຈັດພ່ຳນີ້ | ໄຟໄໝ້ບໍ່ເຫຼືອ ເຈົ້າເອີຍ |
| | ພຣະຈົ່ງບັນຊາໃຫ້ | ຊາວເມືອງທອນຝູ່ມ |
| | ເກັບດູກເຖົ້າ | ຍັກໂຂເຈົ້າລ່ອງມະຫິ |
| ເອົາກໍ | ພາກັນເຂົ້າ | ຫາມອົມຍັງກະດູກ |
| | ໜັກເກິ່ງພ້ຽງ | ສເມນຕັ້ງປຽບປານ |
| | ລືມຫາມນັ້ນ | ພົນປາຍໂກດເສດ |
| ແລ້ວກໍ | ອັບເສບໃຫ້ | ວັນເຖົ້າສິ່ງບູນ |
| | ເຈັດວັນຖ້ວນ | ບໍຣະບວນລາເລີກ |
| ພໍເມື່ອ | ວັນງ່ຽງເຂົ້າ | ເວົາຊາຍໄກ່ອັນ |
| ທ້າວກໍ | ເອົາກະດູກຣາຍ | ພີເຖົ້າດ່ວນໄປ |
| | ກໍບໍ່ມີໃຜຮູ້ | ບາບູນສະເດັດດ່ວນ |
| | ເຖິງແລ້ວຖິ້ມໃສ່ນ້ຳ | ຫນອງກວາງແຄ່ສະພັງ |
| ຫນອງນັ້ນ | ໄກຈາກຫອງ | ຈຳປານັກຄະເຣດ |
| | ກຳມົດເຂດດ້າວ | ເດີນລ້ຳລ່ວງດາວ |
| | ບາບູນດັ້ນ | ທັງໄປກັບຕາວ |
| ຍັງບໍ່ | ທັນຮູ້ແຈ້ງ | ລິນເຂົ້າສູ່ນະຄອນ |
| | ມືດຖິ້ບົນ | ຍາຄານສເວີຍຣາດ |
| | ສັ່ງເຂບເຂົ້າ | ໄຂພົນເພີ່ມຖແລງ ເຈົ້າເອີຍ |
| ເທື່ອນີ້ | ຈັກໄດ້ຈາຈັບເຣື່ອງ | ຄວາມຫຼັງກຮວກາຍ |

| | | |
|---|---|---|
| | ຂຍາຍແບບເຣື່ອງ | ຣຽງຕົ້ນຕໍ່ກອນ |
| ນັບແຕ່ | ອັດຖິເຖົ້າ | ຍັກຂີ່ມີຕາຍຊາກ |
| | ຈີ່ມແຊ່ນ້ຳ | ຫນອງກວ້າງບໍ່ຟູ |
| ຫນອງນັ້ນ | ໂລກຈົ່ງເອີ້ນຮຽກຮ້ອງ | ຊື່ວ່າຫນອງກະແສ |
| | ເປັນນິທານ | ສິບມາດຽວນີ້ |
| | ອັດຖິເຖົ້າ | ຍັກຂີ່ມີຈົ່ງກັບເກີດ |
| | ເປັນຜາສາດໃຫຍ່ກວ້າງ | ກາງນ້ຳແຕ່ສະພັງ |
| ອັນທີ່ | ຍັງເຫຼືອນັ້ນ | ປັນເປັນຫຼາຍຢ່າງ |
| | ເປັນຫມູ່ແຂ້ | ມັງກອນພອນພ່ຳປາ |
| | ນາຄານ້ຳ | ໃນຫນອງກັບເກີດ |
| ຝູງຫມູ່ | ຫມູ່ຮວແລະກຸ້ງ | ຫອຍກວ້າງບວງທະເລ |
| | ເຂົາກໍມາຊຸມຫຼື້ນ | ຫນອງກະແສແສນຍານ |
| | ຢາຍແວດລ້ອມ | ສາລາກວ້າງບໍ່ຫນີ |
| | ມີທັງບົວຫຼວງພ້ອມ | ຈົ່ງກິນໄຂກາບ |
| | ຝູງຫມູ່ທີ່ຄະຊາດເຊື້ອ | ແຊວຫຼື້ນລ່ອງລອຍ |
| ດາວນັ້ນ | ຍັງມີສາມັນເຊື້ອ | ສັດຕິນາງທັງສີ່ |
| | ໄຕນ້ຳມັນຫມາກຫຽ້າ | ບູຊາແກວຫມວຍສາມ |
| | ບູນສເລີມໃຫ້ | ດາວຕາຍນຳສິ່ງ |
| ນາງຈົ່ງ | ໄດ້ເກີດກ້ຳ | ສາລາກວ້າງພ່ຳບົວ |
| | ຊື່ວ່າປະທຸມມາສ້ອຍ | ໂສມສເລົາງາມຍິ່ງ |
| | ຍິ່ງຢູ່ໃຕ້ແຜ່ນຟ້າ | ບໍ່ຊ້າສຽວສວນສາມ |

ພໍເມື່ອ ຫຼາຍຂວບເຂົ້າ ນາງໃຫ່ຍສອນສາວ
ເມສາສິກ ລ່ວງກາຍມາໃກ້
ນັບແຕ່ ນອນໃນຫ້ອງ ປາງທອງຜາສາດ
ສິບສີ່ຂວບເຂົ້າ ຣະດູຕັ້ງຖ່າຍແຖມ
ຄາວນັ້ນ ຝູງຊ່ຳເຊື້ອ ກະສັດໃຫ່ຍໃຈເມືອງ
ເທວະດາດົນໃຈ ບອກສຽງສູນສ້ຽງ
ວ່າມີນາງງາມສ້ອຍ ປະທຸມມານາງນາດ
ບໍ່ມີພໍ່ແມ່ລ້ຽງ ຜົວຊີ້ຊອນກໍບໍ່ມີ
ປາງນັ້ນ ອົງກະສັດເຈົ້າ ເຕີນປ່າວພົນແພນ
ທັງຮ້ອຍເອັດຫົວເມືອງ ກະເດື່ອງດິນດາຍ້າຍ
ຄົບເມື່ອ ມາເຖິງຫ້ອງ ຫນອງກະແສເຊົາຈອດ
ແລ້ວຈຶ່ງ ຕົກຫມູ່ລອມ ແສນຊັ້ນແວດຣະວັງ
ຮຽງແຖວໄວ້ ເປັນຖັນຫຼາຍຍ່ານ
ທູກກະສັດເຈົ້າຟ້າ ຫວັ້ງຫຼ້າຜູດຮວ
ຫນອງນັ້ນ ຈຶ່ງໄດ້ເຕີນມານເຂົ້າ ສ[illegible]ມປາຍຕິດຕໍ່
ຫນອງກະແສແສນຍ່ານເຍັນ ດຽວນີ້ຕໍ່ມາ ເຈົ້າເອີຍ
ເພາະວ່າ ພົມແພນລ້ອມ ຮຽງແຖວຫຼາຍຍ່ານ
ເພື່ອຢາກ ໄດ້ມາດນ້ອຍ ປະທຸມແກ້ວພາງເພົາ
ນັບແຕ່ ພົມຫຼວງລ້ອມ ປະທຸມມານ້ອຍນາດ
ກໍບໍ່ໄດ້ຜາງຊ້ອນ ດິນເຂົ້າສູ່ນະຄອນ
ຄາວນັ້ນ ຍັງມີມາໂຄເຈົ້າ ພຍາຫຼວງນາກໃຫ່ຍ

ຫ້າຕົວພ່ຳພ້ອມ　　ຈາເວົ້າແມ່ນກັນ
ກົວແຕ່　ພົ້ນແສນຈຸ້ນ　　ຫນີໄປຊິກັບອີກ　ບໍ່ຮູ້
ຢ້ານແຕ່ມາແວດລ້ອມ　　ຫນອງກວາງຍາກກຳໃຈ　ອີກແລ້ວ
ຄວນເຮົາ　ໄປແປງສ້າງ　　ແດນໄກປະເທດຕາງ
ພົ້ນຂອດແດ້ວນ　　ຫນອງກວ້າງຊິຢູ່ເປັນ　ດອກນາ
ອັນວ່າ　ມາຄາພອມ　　ຄຳດຽວສາຣະພາບ
ຕ່າງຕົວຕ່າງທຳຣິດທິ໌ຂົ້ນ　　ບຸດິນດົ້ນລ່ວງໄປ
ແລ້ວພາກັນຫນີຈາກຫ້ອງ　　ຫນອງກວ້າງແມ່ກະແສ
ແລ້ວຈຶ່ງ　ໄປເຖິງນ້ຳ　　ສມຸດໂທທັງສີ່
ໄປຈອດຢັ້ງ　　ລັງກາພູ້ນແທ່ງໄກ
ໃກ້ເກາະນົ້ອາຈານເຈົ້າ　　ມີປັນຍາຖາມໂຈດ
ເກາະລັງການັ້ນ　　ເຂົາເອົານາມໃດມາເປັນຊື່
ຖ້າວ່າເຮົາຜູ້ແກ້　　ຊິແປເວົ້າວ່າຈຶ່ງໃດ　ທ່ານເຣີຍ
ແກ້ວ່າ　ຍັງມີນາກໃຫຍລ້ຳ　　ຕົວທີ່ພູເຂົາ
ພຍາອິສວນຕັດ　　ລ່ອງລົງມະຫິ້ກວາງ
ຝູງຫມູ່ໂກກາແຮ້ງ　　ບິນໂຮມຈິກຕອດ
ຈິກຄາບ້ຮາຍ　　ນາຄາເຖົ້າລ່ອງໄຫຼ
ແລ້ວຈຶ່ງ　ໄປຄາຄ້າງ　　ກາງທະເລຕິດຫາດ
ເກີດເປັນເກາະໃຫຍ່ກ້ວາງ　ດອນແກ້ວແຮ່ຊາຍ
ແລ້ວຈຶ່ງ　ເອົານາມເຂົ້າ　　ລັງກາຮຽກຊື່
ຕັ້ງແຕ່ນູ່ນ　　ດຽວນີ້ສືບມາ　　ເຈົ້າເຣີຍ

| | | |
|---|---|---|
| | ຍຸດຕິກາຂັ້ນ | ບົດກອນໄວ້ກ່ອນ |
| | ພາຍຫຼັງຈຶ່ງຄ່ອຍຊ້ອນ | ແຖມຊ້ຳຕື່ມຄຳ ເຈົ້າເຮີຍ |
| ບັດນີ້ | ຈັກກ່າວອົງກະສັດໄທ້ | ເມືອງຂວາງສເວີຍຣາດ ກ່ອນແລ້ວ |
| ກັບທັງ | ກວຽນຣ້ອນເຫຼັ້ມ | ທົງສາວະດີພູ້ນນັ້ງທົງ |
| ນັບແຕ່ | ບາບຸນທ້າວ | ຄັດທະນາມໂພທິຣາດ |
| | ພັດພາກບ້ານ | ນານລ້ຳຫ່າງເຫັມ |
| ສອງກໍ | ປຶກສາເວົ້າ | ດອມກັນຖາມຊອບ |
| | ຄວນເຮົາຫາຂອງໄວ້ | ແທນຄູນພູວະນາດ |
| ເມື່ອພຣະ | ກັບຕ່າວໄດ້ | ຂອງຕອນກໍຈຶ່ງຄວນ |
| | ຄວນເຮົາຫານາງນ້ອຍ | ກູມາຣີຮູບຫຼໍ່ |
| | ຍໍຍົກໃຫ້ | ບາທ້າວຕາວມາ |
| ເຂົາວ່າ | ນາງສາວສ້ອຍ | ສີດາດູ້ອາດ |
| | ເປັນລູກເຈົ້າ | ຈຳປາກວາງເຂື່ອນແຂງ |
| ຄວນເຮົາ | ໄປເພນາງ | ກວນເມືອງຊີວຍາດ |
| | ຊີງເອົານາງນາດນ້ອຍ | ສີດາໄດ້ດ່ວນມາ |
| | ສອງກະສັດຕາໄທ້ | ເຫັນດີໂດຍຊອບ |
| ແລ້ວຈຶ່ງ | ຈັດຣີບຟ້າວ | ພົນລ້ານຂອກວຽງ |
| | ເມືອງສອງກ້ຳ | ພົນແພນອະນັນເນກ |
| | ເມືອງພູ້ນພີ້ | ອົກໂຂລົ້ນດັ່ງກັນ |
| ພຣະກໍ | ຂຶ້ນຂີ່ຊາງ | ສານແຫ່ພົນຫຼວງ |
| | ເສນາໄຫຼ | ຫຼັ່ງມາປານນ້ຳ |

ຫຼາຍວັນລ້ຳ ພາພົນຂ້າມລ່ວງ
ມື້ສິບມື້ ໄປໜ້າເຄື່ອນຄາວ
ແລ້ວຈຶ່ງ ໄປເຖິງຫ້ອງ ຈຳປານັກຄະເຣດ
ຮອດເຂດກ້ວາງ ເຕີນຕັ້ງແຕ່ງພົນ
ເຂົາກໍ ຢາຍກັນໄວ້ ເປັນແຖວຮຽງສີ່
ແຫນແຫ່ຫາວ ຂວາຊ້າຍແວດຣະວັງ
ບໍ່ມີກົວເກງຢ້ານ ສົງຄາມຊິງຍາດ
ມີແຕ່ຕີລູກລົ້ນ ເມືອງບ້ານຜ່າຍໜີ
ພໍເມື່ອ ຫົວເສິກເຂົ້າ ເຖິງເມືອງຣະວັງວາດ
ຕີຜາບນ້າງ ຕີນຜ້າຍນອກວຽງ
ເມື່ອນັ້ນ ເມືອງແສ້ນຫາວ ທຸ່ມອົງພູວະນາດ
ຂໍໃຫ້ພຣະຢ່ຳເກົ້າ ຫຼົງປ້ຽນລ່ຳຄອຍ ຫັ້ນຫ້ອນ
ເມື່ອນັ້ນ ບາບູນເຈົ້າ ກະສັດຕາໂພທິຣາດ
ຣັບຊາບຊຶ້ງ ຊົງຊີ້ສັ່ງແສນ
ໃຫ້ທ່ານ ໄປເຣັ່ນຕັ້ງ ພົນທະຫານເຮວຣົບ
ຄັ້ນຫາກສູ່ບໍ່ໄດ້ ເຮົາຊິຕ້ານຕໍ່ຕີ ດອກນາ
ເມື່ອນັ້ນ ແສນເມືອງເຖົ້າ ລາລົງໂດຍຣີບ
ຈັດແຈ່ງຕັ້ງ ພົນຕໍ່ຕີ
ຊ້າງຕໍ່ຊ້າງ ພົນຕໍ່ຕີຣົບ
ງວງແທງສຶກ ຖືກກົ້ນຕາຍນ້ຽນ
ນັບແຕ່ ພົນສອງເບື້ອງ ຕາຍໄປເດັ່ຽຣະດາດ

ຊາວຈຳປາສູ້ບໍ່ໄດ້ ກົວຢ້ານແລ່ນໜີ
ເມື່ອນັ້ນ ພູວະນາຄທາວ ອົງເອກໂພທິຍານ
ຊົງພຣະຂັນຄົມ ພ່ອງພຣະກອນກ້ຳງາວ
ມືຖືວຣາວ ຖອນຕານພາບຸຕູ
ສະເດັດຄ່ວນຂຶ້ນ ນະພາພົ້ນແກ່ວງໄກວ
ຕາມສອງຕົ້ນ ຖືໄປກວັດແກ່ວງ
ຝູງໝູ່ເສິກຕ່າງດ້າວ ເຫັນແລ້ວກໍຢ່ອນກົວ
ອັນນີ້ ຣອຍທິຣິດທິ້ທາວ ບາບູນໂພທິຣາດ
ຄົງບໍ່ຜິດພາດພັ້ງ ພະລັງລົ້ນລື່ນສານ
ເຂົາກໍ ຍອມຍັ້ງທາວ ຂັນສົ້ມມາທູນກາບ
ຂໍໃຫ້ພຣະຢ່ຳເກົ້າ ກູ້ນາຂາໂຜດຜາຍ ແດ່ທ້ອນ
ຝູງຂ້າຄົນໜາແໜ້ນ ບໍ່ວິຈານຈົ່ງແນ່
ຂໍໃຫ້ພຣະໂຜດຂ້າ ຄາວນີ້ເຫື່ອສອງ
ອັນວ່າ ນານມະກອນຂ້າ ພຍາຫຼູວງສເວີຍຣາດ
ກັບທັງ ກວ້ຽນຣອນເຫຼັ້ນ ເຣວພອມພ່ຳກັນ
ເມື່ອນັ້ນ ພູວະນາຄທາວ ກ້າເກັ່ງອິດທິຣິດ
ພໍໄດ້ຍິນສຽງພົມ ໄພ່ເມືອງຍອມໄຫ້ວ
ພຣະກໍ ກຳຕານຕົ້ນ ທັງສອງເຊັ້ດສ່ວງ
ຕານນັ້ນຕົກແຫ່ງຫ້ອງ ລັ້ງກາກວ້າງແກ່ວໄກ
ພໍເມື່ອ ບາຄານຖົ້ມ ຕານໄປໄກ່ເຂດ
ສະເດັດລົງຈາກຟ້າ ຍັ້ງພົ້ນແຜ່ນດິນ

| | | |
|---|---|---|
| | ມາເຊົາຢັ້ງ | ກາງພົນພວກໄພ່ |
| | ຝູງໝູ່ເສເນດລ້ອມ | ຂວາຊ້າຍແກ່ວງວີ |
| ພຣະຈຶ່ງ | ຕັດຖາມຂາ | ສອງພຍາຫາເຫດ |
| | ສອງທ່ານຄິດໄຕ່ໄດ້ | ອັນໃດແທ້ຈຶ່ງລົບເຮົາ |
| ເມື່ອນັ້ນ | ທັງສອງເຈົ້າ | ກະສັດຕາງຫຸມຕອບ |
| | ບອກເຫດໃຫ້ | ພຣະອົງຮູ້ຊູປະການ |
| ເມື່ອນັ້ນ | ບາຄານທ້າວ | ໂພທິຍານຍໍມພຣະໂອດ |
| | ເຮົາບໍ່ມີຄຽດແຄ້ນ | ເຄືອງຂໍ້ທໍ່ໄຍ |
| ອັນທີ່ | ທັງຫຼາຍເຈົ້າ | ກະທຳມາອະພັຍໂທດ |
| | ເຮົາບໍ່ມີໂກດໃຫ້ | ອະພັຍທ່າວຊູ່ອັນ ແທ້ແລ້ວ |
| ພໍແຕ່ | ພຣະກ່າວແລ້ວ | ກໍ່ຊີ້ບອກສອນທັນ |
| | ສອນພຍາທັງສອງ | ໃຫ້ໄຕ່ຕອງຕາມເຄົ້າ |
| | ສອນໃຫ້ເອົາພົນຍ້າຍ | ຄືນເມືອສເວີຍຣາດ |
| | ຍຸດຕິກາບັ້ນ | ຄຳສອນສັງເຂບ |
| | ຝູງໝູ່ເສເນດນ້ອມ | ປະນົມນ້ວກ່າວລາ |
| | ພຍາຫຼວງເຈົ້າ | ທົງສາວະດີກັບຕ່າວ |
| | ຄືນສູ່ຫ້ອງ | ນະຄອນກວ້າງຢູ່ເຢັນ |
| ອັນວ່າ | ບາບູນທ້າວ | ໂພທິຍານຕົນປະເສີດ |
| | ຊົງປະທັບຢູ່ຫ້ອງ | ຈຳປາຕຸ້ມໄພ່ພົນ |
| | ເປັນເອກອົງ | ກວມແຜນພຣະສຸທາ |
| ນັບແຕ່ | ໄວຂອງທ້າວ | ໂພທິຍານຂ້າມລ່ວງ |

ຫຼາບຂວບເຂົ້າ ຣະດູຕັ້ງຖ່າຍມາ
ເຫີວເຫຼົ້າ ສີດາຫຽມຜາງ
ນ່າງຈິ່ງ ໄດ້ລູກນ້ອຍ ນາມຫນໍ່ແນວຊາຍ
ໂສມສເລີາງາມ ດັ່ງພົມພຽນແຕມ
ຊື່ວ່າຄັດທະຈັນເຈົ້າ ເອົານາມພັດພໍ່
ພໍເມື່ອ ສອງຫນໍ່ທ້າວ ບູນກ້ວາງໃຫຍ່ມາ
ວັດສາລ້ຳ ຄັດທະຈັນສາມຂວບ
ຄັດທະເນກ ວັດສາໄດ້ສີ່ປີ
ກໍ່ບໍ່ມີໄພຕ້ອງ ອັນໃດບັງບຽດ
ສຸກຢູ່ສ້າງ ບູນກ້ວາງພ່ຳພຣະອົງ
ເມື່ອນັ້ນ ໂພທິຍານທ້າວ ບາຄານນອຍຫນູມ
ຄິດສລາດຮູ້ ເຫັນຂໍ້ແຕ່ຫົວ
ພຣະຈິ່ງ ຈົ່ງເອົາໃຈ ທົມທູນພຣະພໍ່
ກັບທັງ ແມ່ແຈ່ມເຈົ້າ ຈຳສອນເຖົ້າໃຫ້ດ່ອນມາ ວ່າເນີ
ເຮົາຈັກສົງໂສດນ້ຳ ສອງເຖົ້າຫນູ່ມຄືນ
ເຂົາກໍ ໂດຍຄຳເຈົ້າ ຣາຊາຕັດບອກ
ໄປຣອດແລ້ວ ເຊີນເຈົ້າດ່ອນພລັນ
ບາກໍ ສົງໂສດນ້ຳ ສອງເຖົ້າຫນູ່ມຄືນ
ເຫມືອນດັ່ງສາວສິບຫ້າ ເທວະດາລົງຫຼໍ່
ເກີນວ່າງາມກະດົ້ ພົ້ນລື່ນຂຽນ
ຍຸດຕິກ່າບັ້ນ ບາບູນສເວີຍຣາດ

| | | | |
|---|---|---|---|
| | ນິທານຍັງບໍ່ແລ້ວ | ທີໜ້າຈຶ່ງຕ່າວຕາມ | ທ່ານເອີຍ |
| ບັດນີ້ | ຈັກໄດ້ຈາເຖິງຫອງ | ໂພທິຍານສເວີຍຣາດ | |
| ພຣະກໍ | ບໍ່ເດືອດຮ້ອນ | ປະການແຫ້ສິ່ງໃດ | |
| | ອັນແຕ່ໂພຍພັຍສິ້ງ | ກໍບໍ່ມີມາຕ້ອງ | |
| | ພຣະກໍດີເຫຼືອລົ້ນ | ຈົນດົນລື້ນໂລກ | |
| | ເປັນປໂຍດຢູ່ | ປະຊາເຊື້ອເພິ່ງເຢັນ | |
| | ຫຼາຍປີລ້ຳ | ພຣະໄທຫວງໂອອາວ | |
| | ຄິດຄນຶງພໍ່ຊ້າງ | ແສນເສົ້າໂສກເຫງົາ | |
| ຄຶດເຫັນ | ຕັ້ງແຕ່ເຊົ້າ | ສິຕາມພໍ່ພາຍສານ | |
| | ສັງຊິມາມົວເມົາ | ເພີດເພີນນຳຫຼິ້ນ | |
| | ການບໍ່ສົມພົນແທ້ | ເສັຍສິ້ນສິດຊື່ | |
| | ບໍ່ສຳເຣັດປຊັຍດຍ້ອນ | ເມົາຫຼິ້ນມ່ວນກໍໃຈ | |
| ຄວນກູ | ເຂົ້າຕົນດັ້ນ | ເດີນຫາພຣະພໍ່ | |
| ພໍ່ເມື່ອ | ພຣະຣ່ຳແລ້ວ | ຕົກແຕ່ງກາຍາ | |
| | ທົງພື້ນຜາ | ແສນລ້ຳຄ່າເມືອງ | |
| ແລ້ວຈຶ່ງ | ເມືອທູນໄຫວ້ | ປີຕາໃຫ້ພໍ່ເມື້ອ | |
| | ປະນົມກອນນ້ອມ | ອັນຂູລີເຫນືອເກດ | |
| ລູກນີ້ | ວ່າຈັກພັດພາກບ້ານ | ຣາມໜາໄຄລອຍ | ພຣະເອີຍ |
| | ຈິດປະສົງຄົ້ນ | ຕາມຮອຍພຣະພໍ່ | |
| ຄາວເມື່ອ | ອອກຈາກບ້ານ | ຄນຶ້ງຊາງຈຶ່ງມາ | |
| ຈຶ່ງໄດ້ | ລາເມືອງກວ້າງ | ນະຄອນຫຼວງສີສະເກດ | |

| | | | |
|---|---|---|---|
| | ພັດແມ່ໄວ້ | ຣາມໜ້າບໍ່ເຫັນ | ແທ້ແລ້ວ |
| ເມື່ອນັ້ນ | ພຣະພໍ່ເຈົ້າ | ຟັງພາກບາຖແລ້ວ | |
| | ສະເຈົາໃຈຈິດ | ໃຄຄອຍຄາວແຄນ | |
| ແລ້ວຈິ່ງ | ກອຍໃຈ້ຕາມ | ດອນລູກບຸດຕາ | |
| | ເອົາແຕ່ເວລາເຖິງ | ຄອບຄິງຄຽນເນື້ອ | |
| | ເວນເຖິງແລ້ວ | ໃຜເດຈົ່ລົບຫຼີກ | |
| | ວາຈາໄດ້ວ່າແລ້ວ | ລີ້ຫາມຫອນເປັນ | |
| | ເສັຽລັດນີ້ | ເສັຽສິນດີ່ກວ່າ | |
| | ຕາມຣິດເຕົ້າ | ປະຖົມເຖົ້າກ່າວມາ | |
| ພໍເມື່ອ | ພຣະພໍ່ເຈົ້າ | ໄຂລີ້ນວາຈາ | |
| | ບາໄທຜາຍ | ກາບລາລົ້ງຫຸອງ | |
| ແລ້ວຈິ່ງ | ຈານາງນ້ອງ | ສີດາຍອດສ່ງາ | |
| | ພີ່ຈັກລາຈາກນ້ອງ | ເດີນດັ້ນດົ່ງໄພ | ກ່ອນແລ້ວ |
| ເມື່ອນັ້ນ | ສີດາໄຫ້ | ໃຈເມືອງແຄ້ນຄັ່ງ | |
| | ພໍໄດ້ຟັງພາກຖ້ອຍ | ຜົວແກ້ວສັ່ງລາ | |
| | ເໝືອນດັ່ງຜ້າທະເປື້ອງ | ແຂນຂວາຂາດທ່ອງ | |
| | ຈິດໃຈໝ້ອງຫົ່ມນເສົ້າ | ສະເຈົາບ້າເມື່ອຍອິນ | |
| ນາງກໍ | ຍໍຖ້ວີນໄຫວ | ອັ້ນຊູລີຫູນພີ່ | |
| | ຂໍໃຫ້ພຣະພີ່ຕົນ | ທົນເຍືອນຢ່າໄປ | |
| ອັນວ່າ | ວິໃສ້ນ້ອງ | ແນວຍິງຍົກຕ່ຳ | |
| | ສຸກຢູ່ຍອມ | ບູນສ້າງເພິ່ງຜົວ | |

ຍິງບໍ່ມີຜົວຊ້ອນ ສເນີຕານສູດຍອດ

ບໍ່ມີເປັນປໂຍດຍ້ອນ ອຸຕ່າຍຖຶ້ມແຄ້ວນ ພີ່ເຣີຍ

ເມື່ອນັ້ນ ບາບູ້ນທ້າວ ໂພທິຍານຂານຕອບ

ໂລມລູບນ້ອງ ຢ່າເສົ້າໂສກເຫົງາ

ຊາດທີ່ ສິງສານນີ້ ບໍ່ມີໃຜຕັ້ງທ່ຽງ

ມີແຕ່ປຸ່ນເປັ່ນມ້າງ ຫຼາຍລົ້ນເກື່ອນກະຫາຍ

ອັ່ນວ່າ ຄວາມນາຍມ້າງ ຫິນກັນເຈັຽຣະຈາກ

ດັ່ນບໍ່ພົ້ນວັງກວ້າງ ອຸທຽວພີ້ຢູ່ເລີ້ງ ນັ້ນແລ້ວ

ພື້ນ ບໍ່ຢາກໄລ້ລິ້ນນ້ອງ ວອນຫຼົ້ງຫາກລາວໃສ່

ສີດຈະໄດ້ວ່າແລ້ວ ນາຍນາງບໍ່ຫອນເປັນ

ພໍເມື່ອ ຈາກັ້ນແລ້ວ ສູຣິໂຍລັບຫຼ້ຽມ

ສເວີຍໂພດພ້ອມ ຈັ້ນທະລູ່ສວຍສີ

ບາກໍ ບັນທົມຫ້ອງ ທໍ່ປາງຜ້າສາດ

ສະຖຶດແທບຊ້ອນ ສອງແກມພ້າງເພົາ

ພໍຄ່າວແລ້ວ ໃສຍາຍາມຍີບ

ພຣະອາທິດພູ່ງພົ້ນ ເປັນມື້ໄໝ່ມາ

ບາຄານທ້າວ ໂພທິຍານຄາດເຄື່ອງ

ແລ້ວຈຶ່ງ ເອີ່ນສົ່ງນ້ອງ ຫົ້ງໄທໃສ່ປາງ

ພໍເມື່ອ ພຣະສົ່ງແລ້ວ ສະເດັດລ່ວງເວຫາ

ວາໂຍລົມ ເບີກພະກາຍກາງແຈ້ງ

ມັບແຕ່ ໃນທົ່ມທອງ ຣອຍເອັດເມືອງມາຊ່ວຍ ພຣະອົງນັ້ນ

| | | |
|---|---|---|
| ພຣະກໍ | ເອີ້ນສັ່ງແລ້ວ | ເລີຍລ້າລ່ວງກາຍ |
| ແລ້ວຈິ່ງ | ໄປເຖິງຫ້ອງ | ຫິມະພານໄພຍະມາດ |
| | ເປັນເຖື່ອນຖ້ຳ | ດົງຊ້າງຫມູ່ເສືອ |
| | ມີທັງຊຸດຖຸ້ມໄມ້ | ຊອງຊໍ່ມິນຂຽວ |
| | ບັບພະໂຕຕົ້ນ | ໂງມດອຍດູຣາຍ |
| ບາກໍ | ກາຍໄປຫນ້າ | ຖືກຂ້າຍີວຣະຍາດ |
| | ມີແຕ່ຮາລັດຕ້ອນ | ຮອຍຊ້າງພໍ່ຕີນ |
| | ກໍບໍ່ເຫັນພານຕ້ອງ | ຕາມອູງຫຼິງລ່ຳ |
| ກັບທັງ | ເຫຼົ່າຫມູ່ໄມ້ | ເດີນຂ້ຽວເດັ່ງຄາວ |
| | ທ້າວກໍຊົມຫມູ່ໄມ້ | ເຮັ້ຍໄລ່ບົງຊ້າງ |
| | ຫຼາຍວັນດີນ | ຄຽນຄາວຍໍຍາຍ |
| ພໍເມື່ອ | ແສງສູນເສົ້າ | ພຣະດັ້ນທອນຫຼັບລ່ຽມ |
| | ອາທິດມົວມິດໄມ້ | ແລ້ງຄອຍຄ່ຳລົງ |
| ບາກໍ | ເຂົ້າຕີນເຂົາ | ເນົານອນໃນຣົ່ມ |
| | ຍິນແຕ່ລົມລ່ວງຕ້ອງ | ຕ້ອງໄມ້ປ່າໄຣ |
| ອັນວ່າ | ພຣະບາດໄທ້ | ໂອ້ອາລົມມົງຫົງ |
| | ຫຼັ່ງນ້ຳຕາພັງລົ້ນໄຫຼ | ຮ່ຳໄຣຫາບ້ານ |
| | ບໍ່ມີເຫັນພ້ອງ | ພົງພົນໃນປ່າ |
| | ເອົາຄະນາຫມູ່ເນື້ອ | ເປັນເພື່ອນພ່ຳສອງ |
| ພໍເມື່ອ | ພຣະຮ່ຳແລ້ວ | ເຖິງທີ່ຍາມສງັດ |
| | ບາກໍວອຍງຫຼັບ | ຊົ່ວຍາມຄາວນອຍ |

| | | |
|---|---|---|
| | ພໍຄາວແຈ້ງ | ສຸຣິແສງພົ້ນພຸ່ງ |
| ບາກໍ | ຍົວຣະຍາດຍ້າຍ | ພະເນ່ຜາຍຜາລົງ |
| ແລ້ວຈຶ່ງ | ໄປເຖິງຫ້ອງ | ອຸດທິຍານສວນດອກ |
| | ບາກໍຫາຊອກໄຊ້ | ຊົມໄມ້ຕ່າງແນວ |
| | ພໍຕາວັນສູນແສງ | ຄ່ຳລົງເລີຍຄ້ອຍ |
| ບາກໍ | ຄອຍມອນຄາງ | ກາງສວນຫາຄື່ວ |
| | ເຈັດຂວບມື້ | ບາຫາວຈຶ່ງໄປ |
| ບາກໍ | ສົມຈອນຍ້າຍ | ຫຼາຍດົງດັ້ມປ່າ |
| | ຊົມຣຸກຂາເຂດດ້າວ | ຄາວນ້ອຍນຶ່ງໄປ |
| | ເຂົ້າປ່າໄມ້ | ຝູງໝູ່ມາຣີ |
| | ມັນຫາກມິຕາມແຖວ | ຣະຫວ່າງແນວໄພກ້ວາງ |
| ບາກໍ | ເດີນຊົມຫຼີ້ນ | ມາຣິດວງດອກ |
| | ບໍ່ຊຸມະຊຸຫຼົ້ມ | ສາວນ້ອຍກໍ່ບໍ່ປ່ານ |
| ແລ້ວຈຶ່ງ | ໄປພົບພໍ້ | ຝູງໝູ່ລືສີ |
| | ໃນຄີຣີ | ຢູ່ດົງຫຼາຍຮ້ອຍ |
| | ຄອຍທີ່ລືສີເຈົ້າ | ຕາປະໂສລົມສອດ |
| | ເຫັນທ່ອນທ້າວ | ຈາເອີ້ນໃສ່ພັກແຮງ |
| ຫາງເລົ່າ | ຫາຫມາກໄມ້ | ມັນເຜືອກຜາລາຜົມ |
| | ຖວາຍບາບຸນ | ໂມ່ມັນຕາງເຂົ້າ |
| ແລ້ວຈຶ່ງ | ທູນຖາມເຈົ້າ | ໂພທິຍານຈະເດັດດ່ວນ   ສັງນໍ |

ມີຫູຣະເຫດຮ້ອນ ປະການແຫ້ສິ່ງໃດ
ເມື່ອນັ້ນ ພຣະບາດໄທ້ ຕ້ານຕອບລີສີ
ຂ້າຫາກມີຄວາມຄິດ ໄດ່ເດີນດົງກວ້າງ
ເພື່ອປະສົງຫາໄທ້ ບິດາຕົນພໍ່
ຕັ້ງຫາກ ເປັນພໍ່ຊ້າງ ສານກ້ຳຢູ່ດົງ ທ່ານເຮີຍ
ວ່າແລ້ວ ທ້າວກໍອາລັຍຊົ້ນ ລັດສີສີນຊີປ່າ
ລັດສີມານັ່ງເວົ້າ ນຳເຈົ້າເທສນາ
ບອກໃຫ້ ບາສອນຊີ້ ຄຸນທັມຫຼາຍຢ່າງ
ລັດສີສີນຮອບຂ້າງ ຟັງເຈົ້າກ່າວທັມ
ແລ້ວກໍ ຈັດໝູ່ຊ້າງ ທັງເຜດພີຫຼວງ
ທັງປວງຜີ ໃຫ້ແລ່ນມາວັນເຈົ້າ
ຜີກໍ ເອົາກັນເຂົ້າ ມາວັນປະສົງເສບ
ມີເຄື່ອງຫຼີ້ນ ວັນເຈົ້າຊູ່ວັນ
ນັບແຕ່ ບາເຊົ້າຢັ້ງ ນຳລັດສີຊີປ່າ
ວັນແລະມື້ ວັນລ້ຳລ່ວງໄປ ແຫ້ແລ້ວ
ພຣະຈິ່ງ ຄິດໄດ້ດວຍ ສະເດັດຄວນຕາມພາຍ
ຄນິງກຸ່ມຊອນ ພໍ່ຕົນຕາມຕົ້ນ
ແລ້ວຈິ່ງ ລາລັດສີເຈົ້າ ລາເດີນໄປຕໍ່
ບໍ່ໄດ້ລໍຢູ່ຊ້າ ໄປໜ້າປ່າໜາ
ຍຸດຕິກາຕອນນີ້ ພູ້ມີເດີນປ່າ
ເຖີງເວລາພັກແລ້ວ ຕົວຂ້າຊິພັກເຊົາ ເຈົ້າເຮີຍ

| | | |
|---|---|---|
| ບັດນີ້ | ຈັກກ່າວກ້ຳ | ເທວະຣາດອິນຕຼາ |
| | ຢູ່ໃນດາວວະດິງສາ | ແທນທອງງາມຍ້ອຍ |
| | ມີມະເຫສີສ້ອຍ | ເມັຽແພງພໍສີ່ |
| | ນາງສນົມໜຸ່ມນ້ອຍ | ພໍ້ຮອຍແກ່ວງີ |
| | ຊົງສະເດັດເກົ້າອີ້ | ຟູກອ່ອນຈຸະອອນເບາະ |
| | ປານສະປົງອິ້ງເພາະ | ຟູກນອນໜ້ອນກຽງ |
| | ບັນທຸກກັມພົນຜ້ຽງ | ພຽງປານປຸຍນຸ່ນ |
| | ເນື້ອລະມຸ່ນອ່ອນກຽ້ງ | ປຸຍຝ້າຍກໍບໍ່ປານ |
| ວັນນັ້ນ | ທ່ານປະທັບນັ່ງ | ໃນມິລິນນາ |
| | ຫີນສີລາເລີຍແຂງ | ຜ່ອງຄາຍກະທາຍຮ້ອມ |
| ແຕ່ກ່ອນ | ເຕີຍນອນກ້ຽງ | ນວນກາຍສະບາຍຍິ່ງ |
| | ສະປົງຟູຟູກຫູ້ມ | ສູ່ຊຸ້ມຂື່ນຊຸ່ມໃຈ |
| | ບັດນີ້ໄດ | ລະຄາຍໃຕຍຕົນຫວຍ |
| ໃຜຈັກ | ມາທຳເຮົາ | ໃຫ້ຫ່າງເມືອງປ່ານີ້ |
| ພໍພຣະ | ຈິນຕະນາແລ້ວ | ແລລົງໂລກລຸ່ມ |
| | ທອດພຣະເນດສົ່ງ | ຫຼິງຢ້ຽມສ່ອງຍາມ |
| ຈິ່ງເຫັນ | ບາຄານຫ້າວ | ໂພທິຍານທ່າພໍ່ |
| ດຽວນີ້ | ຍັ້ງຍາກຫຼຽງ | ຄາດ້າງຕວາງດອຍ |
| | ສູດທີ່ພອຍເມືອງບ້ານ | ກັ້ນຄານເດີນຍາກ |
| | ຄວນເຮົາພາຍໂຜດໃຫ້ | ຄາວແດນໃຫ້ທານເຫັນ ພໍ້ຫອນ |
| ພໍເມື່ອ | ອິນຮ່ຳແລ້ວ | ສະເດັດດ່ວນໂດຍພລັນ |

ເຖິງຕີນເຂົາ ແຕ່ດອຍດັ້ງກວ້າງ
ອິສຈິງ ຈຳແຮງໃຫ້ ເປັນສັດທັນຂາວເຜືອກ
ເຖົ້າແກ່ກາ ຊະລາລ້ຳເລີ່ມນອນ
ເມື່ອນັ້ນ ໂພທິຍານເຈົ້າ ຫຼຽວເຫັນດູຫຼາກ
ຈິນຕະນານຶກນ້ອມ ຄນຶງຂໍ້ບໍ່ລືມ
ອັນນີ້ ຮອຍທີ່ເປັນພຍາຊ້າງ ພາຍສາມຕີນພໍ່ ກູລື
ຫຼືວ່າ ຊ້າງເຖື່ອນຖ້ຳ ເຖິງເທົ້າຊວດຊະຣາ ນີ້ນໍ
ຫູຫາງພ້ອມ ສະກົນກາຍດູໃຫຍ
ທ້າວກໍ ວັດແທກດ້າມ ຮອຍຊ້າງພໍ່ຕີນ
ກໍຫາກປຸນປານພ້ຽງ ສເໝີກັນທຸກສ່ວນ
ຖິກແບບເບື້ອງ ບາທາວກາວຈ່າ
ພຣະສຸ່ມໃສ່ແຈງ ຄຳຄວນຖາມຂາວ
ພຣະທາກ ເມົາຢູ່ຫ້ອງ ດົ້ງກວ້າງສຳຣານ ແດ່ລື
ເມື່ອນັ້ນ ຊ້າງຕອບຕານ ແກເວື່ອນໂພທິຍານ
ເຮົາມີທັ້ມນະຊາດເຊື້ອ ເດັຽຣະສານສັດຕ່ຳ
ທ່ານນັ້ນ ອຸຕະມະແທ້ ນາມເຊື້ອຊາດຄົນ
ສັນໃດເອີ້ນ ຕົວເຮົາເປັນພໍ່
ຂໍທ່ານ ບົນບອກເບື້ອງ ຄຳມີຢ່າພາງ ທ່ານເຮີຍ
ເມື່ອນັ້ນ ໂພທິຍານເຈົ້າ ຄຳຄວນຖະແລງຕອບ
ເວົ້າພາກພື້ນ ກະບວນເບື້ອງແຕ່ຫຼັງ
ລູກນີ້ ເມົາຕົນທ້ອງ ນະຄອນຫຼວງສີສະເກດ

ແມ່ບອກໃຫ້ ແນວຊ້າງພໍ່ຕົນ
ເພາະເພື່ອ ແມ່ໄດ້ກິນນ້ຳ ໃນຮອຍສານເພືອກ
ຈິ່ງບັງເກີດລູກນ້ອຍ ຄືຂ້າຕໍ່ມາ
ແມ່ຈິ່ງ ວັດຍາວກວ້າງ ຮອຍສານປຸນແຫກ
ໄດ້ແບບດ້າມ ຕົວຂ້າຈິ່ງດ່ວນມາ ພຣະເຣີຍ
ພໍ່ເມື່ອ ມາເຫັນຊ້າງ ພາຍສານພຣະພໍ່ ພາຍພີ້
ລູກກໍ່ ເອົາໄມ້ດ້າມ ປູນເປື້ອງແຫກຕີນ
ວາປາທາເຫົ້າ ສເນີກັນກວ້າງແຄບ
ລູກຈິ່ງ ຂານຕອບເອີ້ນ ທູນໄທ້ພໍ່ຕົນ ນີ້ແລ້ວ
ເມື່ອນັ້ນ ພາຍສານຊ້າງ ຟັງບາຖແລງພາກ
ຫາກແມ່ນລູກມິ່ງຕົ້ນ ກູນີ້ດູງມາພໍ່ນໍ
ສັ້ນໃດບ້ານ ເມືອງເຮົາຍັງຄ່ອຍຢູ່ ດີລີ
ພຣະແມ່ເຈົ້າ ຍັງສ້າງສຳຣານ ພໍ່ລີ
ເຈົ້ານີ້ ຕົນດຽວພ້າຍ ໄພຂວາງຫິມະເວດ
ກໍ່ບໍ່ມີເຫດຮ້ອນ ເຖີງເນື້ອເຍື່ອງໃດ ພໍ່ລີ
ເມື່ອນັ້ນ ໂພທິຍານທ້າວ ຍໍກອນກົ້ມຂາບ
ພຣະແມ່ເຈົ້າ ເນົາສ້າງຄ່ອຍຢູ່ດີ ພໍ່ດອີຍ
ເພາະເພື່ອ ປາຣະມີເຈົ້າ ປົກມຸງມາເຫຼື້ອມ
ຈິ່ງຄ່ອຍສຸກຢູ່ສ້າງ ສິ້ນຊ່ອຍຄອຍສຳຣານ
ອັນວ່າ ຕົນຕົວຂ້າ ຕາມຫາພຣະພໍ່ ພາຍພີ້
ກໍ່ບໍ່ມີເຫດຮ້ອນ ຈອນດັ້ນດູງສະບາຍ ພໍ່ເຣີຍ

ເມື່ອນັ້ນ ອິນທາຊ້າງ ພາຍສານຕົວແກ່
ບອກບ່ອນເບື້ອງ ບາທ້າວສັ່ງເສັຽ
ພີ້ ເຖົ້າແກ່ແລ້ວ ຈະຕູ້ດາດຈວນຈຳ ລູກເຮີຍ
ຊີວາຍັງ ແຕ່ໃນວັນນີ້
ໃຫ້ລູກເອົາງາແກ້ວ ທັງສອງຂອງພໍ່
ກັບຕາວໜາ ເມືອບ້ານເກົ່າຫຼັງ ພໍ້ທອນ
ອັນນຶ່ງ ຄັນລູກຄິດໄດ້ໄດ້ ສັພສິ່ງເງີນຄຳ
ໃຫ້ເອົາຫີນຊາຍເຂົ້າ ໃນໂກນງາພໍ່
ຫາກຈັກ ລູ້ລາບໄດ້ ໂດຍດ້ານດັ່ງຄິງ ລູກເຮີຍ
ອັນນຶ່ງ ຄັນມີສັດຕູຮ້າຍ ມາຜະຈົນບ້ານບຽດ
ໃຫ້ຮູດເອົາໃບຂາມສົ້ມ ໃສ່ໃນໂກນງາພໍ່
ໃບຂາມນັ້ນຈັກເປັນແມງພູ່ເຜິ້ງ ທັງແຕນມີ້ມຕໍ່
ມັນນັ້ນ ຄືຂນາດກາ ໄລກົ້ນຜິດແຂວງ ລູກເຮີຍ
ລືຈັກ ໄປທາງນ້ຳ ນະທີຫຼວງແປວເປົ້ງ
ໃຫ້ເອົາງາພີ້ ວາງຖົ້ມແຄມນະທີ
ງານີ້ ຈັກເປັນນາວາຫຼວງ ໃຫ້ຍາວທັງກວາງ
ລືຈັກ ໄປທາງຟ້າ ມະພາບົນອາກາດ
ຫາກຈັກຜັນຜາດເຕັ້ນ ໄປໄດ້ດັ່ງໃຈ ລູກເຮີຍ
ຄ້ອມສັ່ງແລ້ວ ອິນທະສານນໍຣະນາດ
ລະລາບຊ້າງ ສະເດັດຄືນສູ່ສວັນ
ເມື່ອນັ້ນ ຈອມທັ້ນທາວ ໂພທິຍານນ້ອຍໜໍ່

| | | |
|---|---|---|
| | ເຫັນພໍ່ຊ້າງ | ຕາຍຄ້າງແຕ່ດຶງ |
| ທ້າວກໍ | ເອົາງາຊ້າງ | ຕາມຄຳພໍ່ສັ່ງ |
| | ມຽນຄາບແຫຼວ | ບາທ້າວແຕ່ງຕົວ |
| ທ້າວກໍ | ເອົາເຄືອໄມ້ | ຫວາຍຊະນອຍມັດຜູກ |
| | ພັນມັດໝັ້ນ | ດີແລ້ວຂີ່ເທິງ |
| ງາກໍ | ພາຜຍອງຂຶ້ນ | ເວຫາເທິນເມກ |
| | ພົ້ນກິບຟ້າ | ໄກລ້ຳຊິ່ວດອຍ |
| | ເໝືອນດັ່ງວາໂຍພັດ | ເມກລອຍປິວເປື້ອງ |
| ກໍຈຶ່ງ | ໄປເຖິງຫ້ອງ | ຕັກກະສີລານັກຄະເຣດ |
| | ພູເບດທ້າວ | ຫຼິງຢ້ຽມຊິ່ວດອຍ |
| ທ້າວກໍ | ຢູດງາໄວ້ | ເໝືອເມືອງຫຼິງລ່ຳ |
| ຍາມເມື່ອ | ທ້າວບໍ່ຕອງ | ງາຊ້າງກໍບໍ່ໄປ |
| | ຟັງຍິນລົມປິ່ນເປື້ອງ | ອາກາດກາງຫາວ |
| | ທ້າວກໍເນົາມາວາ | ຢູ່ງາເທິງຟ້າ |
| | ງາບໍ່ມີໄປໜ້າ | ບາບູນໃຫ້ຢູດຢູ່ |
| | ດູດັ່ງມີເປົ້າກ້ຳຫານ | ເຊົາຊ້ຳກໍບໍ່ຕິງ ເຈົ້າເຮີຍ |
| ບັດນີ້ | ຈັກກ່າວເຖິງພຍາຫຼວງເຈົ້າ | ຕັກກະສີລາສເວີຍຣາດ |
| | ພຣະກໍບໍ່ເດືອດຮ້ອນ | ປະການແຫ້ສິ່ງໃດ |
| ວັນນັ້ນ | ພຣະກໍຊົມເຊີຍຫຼີ້ນ | ເກີຍຂວາງຢ້ຽມພໍ່ |
| | ທອດພຣະເນດສົ້ງ | ຫຼິງໄຕ້ລູ່ມເທິງ |
| ຈຶ່ງເຫັນ | ຍົນບາທ້າວ | ໂພທິຍານຢູດຢູ່ |

ໃຈວູ່ຣ້ອນ ປານສ້ຽງສຽບແທງ
ຊີງພຣະໂກທາກ໊ວ ໂກທາຂຶນຄຽດ
ໃພ້ຜູ້ມາເບັ່ງມ້າ ແຂງກາອວດສະຫາວ ນ໊ເດ
ອັນນີ໊ ຣ້ອຍທີ່ໂຈໂຣຮ້າຍ ຈັງໄຣທິນະຊາດ
ລື່ວ່າ ຣິດເດດກ້າ ເທາະລ້ຳລ່ວງມາ ນ໊ເດ
ອັນແຕ່ສາຕສິນຮູ້ ລືກູ້ງໂລກ
ອັນນີ໊ ຫມາປ່າເຂົ້າ ມາບານບໍ່ດອນທາງ ແຫ້ນໍ
ຄ້ອນວ່າ ພຣະຮ່ຳແລ້ວ ຄ້ອນໃສ່ສະບູຫຼວງ
ເສມາໄຫຼ ຫຼົ່ງມາປານນ້ຳ
ສິບສອງອັກໂຂເພນິ໊ລົມ ໄຫຼມ່າປານແມງເມົ່າ
ຫຼູ່ງເຂົ້າ ສນາມກວ້າງຂວ່າງໄຊ
ເຂົາກໍ ຍໍມືໄຫວ ທູນຖາມພູ້ວະນາດ
ເປັນເຫດຮ້ອນ ໃດແທ້ປ່າວພົນ. ພຣະເຣີຍ
ເມື່ອນັ້ນ ອົງກະສັດໄທ້ ໄຂຄຳຖແລງຕອບ
ຜິດບໍ່ຊອບແທ້ ສູ້ ທ້າວຮ່ຳເພີງ ນິ້ນທ້ອນ
ບັດນີ໊ ມີຊາຍກ້າ ກາລະຂື້ນຂ້າມເຂດ
ມັນກໍ ມາລ່ວງລ້ຳ ແດນດ້າວແຫ່ງເຮົາ
ມັນຫາກມາເຊົາຢັ້ງ ກາງບົນອາກາດ
ຍັງຢູ່ຫັ້ນ ດຽວນ໊ບໍ່ຫນີ
ໃຫ້ສູ ພາກັນຂ້າ ມະຫາໂຈນໃຈຖ່ອຍ
ພຣະຂັນຄຽນຄາດເນ໊ອ ອົງງາວຄູ່ມື

ໃຫ້ຣິບໄປຂັບຂ້າ ຊາຍໂຈນໃຈບາບ
ໃຫ້ມັນໜີຈາກເຂດບ້ານ ຈອນຄັ້ນດ່ວນກາຍ ທ່ຽວເຫັ້ນ
ເມື່ອນັ້ນ ເສນາຂ້າ ເຫັນພຍາກົ້ວໂກດ
ເຂົາກໍໂຫດໆຣ້ອງ ຕີ້ດອງປ່າວພົນ
ເທື່ອນີ້ ການເຖິງແລ້ວ ຊາວເຣົາຈັດຣົບ
ຢ່າຢູ່ຊ້າ ດຽວນີ້ທ່ຽວພລັນ
ເຂົາກໍ ທຳຣິດທ໊ອນ ຫຼາຍເຊີ້ງດູຫຼາກ
ເຫາະລ່ອງລ້ຳ ເມືອຟ້າເມກພະໂຍມ
ເຂົາກໍ ຫີນໆຣ້ອງ ຄຳຣາມຂື້ນຂູ່
ເພື່ອໃຫ້ພຣະບາດທ້າວ ກົວຢ້ານຜ່າຍໜີ
ເຂົາກໍ ທຳຣິດທີໃຕ້ ເປັນໝີເຫີນອຍປ່າ
ລາງພ່ອງ ຕົວແມ່ນຊ້າງ ຫົວຊ້ຳແມ່ນຄວາຍ
ລາງພ່ອງ ຫົວເປັນມ້າ ຣາຊະສີເສືອໂຂ່ງ
ຕົວເຕ່າງແທ້ ເປັນແບ້ພ່ອງລາ
ເຂົາກໍ ພາກັນຂຶ້ນ ເຫາະຫ້ອງເຖິງເມກ
ສຽງສັ່ນຫ້າວ ກາງຄ້າວທົ່ວບົນ
ເຂົາກໍຍິນໆລ້ອມ ບາບູນບຸຕຣາດ
ເຂົາກໍເຂົ້າບໍ່ໄດ້ ດູລ້ຳເປົ່າດາຍ
ທ້າວກໍ ທຳສະບາຍເນື້ອ ບໍ່ມີເກງຂາມປ່ອນ
ບໍ່ເດືອດຮ້ອນ ກົວຢ້ານຣ່ອນໃດ
ທໍ່ແຕ່ແລດູໜ້າ ສັດຕູລູ່ຫຼົ້ງ

| | | |
|---|---|---|
| | ຣະວັງແວດລ້ອມ | ຫຼັງໜ້າມິດມິວ |
| ເມື່ອນັ້ນ | ພູມພະລາເຊື້ອ | ແມວແຕນເຜິ້ງຕໍ່ |
| | ໄຫຼຫຼັ່ງອອກຈາກໂກດແກ້ວ | ງາຊ້າງພໍ່ຕຶນ |
| | ຄູຫຼາຍລົ້ນ | ອະສົງຂັຍຫຼາຍຫຼາກ |
| ມັນກໍ | ບິນເຂົ້າໃກ້ | ໄລກົ້ນໄລແທງ |
| | ແຕນຕອດໜ້າ | ທາງຫຼັງເຜິ້ງຕໍ່ |
| | ຂວາແລະຊ້າຍ | ແມງເຜິ້ງຜູ້ຕອມ |
| ມັນກໍ | ເຈັບແສບແທ້ | ພິດພູ່ງໄຟເຜົາ |
| ເໝື່ອນດັ່ງ | ເອົາຫຼາວແຫຼມ | ສຽບແທງຕາມເນື້ອ |
| | ເຫຼືອທົນແທ້ | ພົນກືຂະຈັດພ່າຍ |
| | ສູ້ບໍ່ໄດ້ | ກົວມິ້ນຕໍ່ແຕນ |
| ເຂົາກໍ | ໜີໄປລີ້ | ແດນໄກຕ່າງປະເທດ |
| | ຫວີດເຂດບ້ານ | ນະຄອນກວ້າງບໍ່ຄອຍ |
| ເມື່ອນັ້ນ | ອົງກະສັດໄທ | ຫຼິງດູອາກາດ |
| | ເຫັນທີ່ແປນເປົ່າສ້ຽງ | ພົນລານພ່າຍໜີ |
| | ພຣະກໍຕຶກແຄ້ນ | ຄຳແຂງກົວໂກດ |
| | ໃຜຈັກດີຂ້ນາດກາ | ລີລ້າກົ່ວກູ້ ນເດ |
| ພຣະສໍ | ນີຣະມິດໃຫ້ | ທົວພັນພອນພາກ |
| | ແຂນ ແລະ ເບື້ອງ | ພັນແທ້ກັ້ນ |
| | ອາວຸດກ້າ | ປະຈຳມືຖືຢູ່ |
| | ຈິດວູ້ຣອນ | ເທາະຂັ້ນເຣົ່ງເຣວ |

|  |  |  |
|---|---|---|
|  | ຍັງບໍ່ເຖິ້ງອົງເຈົ້າ | ສາມວາໃກ້ສຽດ |
| ອັນວ່າ | ເສນາຂາ | ຮັກສາອົງຣະວັງຣາດ |
|  | ຫົກໝື່ນເຊື້ອ | ສະເດັດຂຶ້ນຕັ່ງລົມ |
|  | ໄປວົງລ້ອມ | ໂພທິຍານທຸກພາກ |
|  | ທຳບໍ່ໄດ້ | ຣິດທີ້ຫາວເດດແຂງ |
| ເມື່ອນັ້ນ | ຝູງໝູ່ແຕນຕໍ່ເຜີ້ງ | ບິນມາສັບຕອດ |
|  | ຈິກຕອດຫົວເກດເກົ້າ | ພົມນັ້ນເລົ່າຫາຍ |
| ກັບທັງ | ແຂນພັນເບື້ອງ | ຕີນມືຫາຍຂາດ |
| ເພາະເພື່ອ | ເຈັບປວດແທ | ຣິດທີ້ກາເລົ່າສູນ |
|  | ແສນຊິທຳຣິດທ້ອນ | ຂະມັ້ນຕັ້ງຮອຍຊ່ອງ ກໍຕານທ້ອນ |
|  | ທຳກໍທຳບໍ່ໄດ້ | ສູນສຽງເປົ່າແປນ |
| ເປັນໜ້າ | ອັບອາຍແທ | ບໍ່ສົມໃຈຝູ່ມຄຽດ |
|  | ວ່າໂຕເຄັ້ນຂນາດກ້າ | ເຂົ້າພູ່ມແຮງເຄັນ |
| ພຣະບໍ່ | ທົນທານໄດ້ | ກັບຕົວໜີຫຼີກ |
|  | ເຂົ້າສູ່ຜູ້ສາດຊົ້ນ | ຊອນລີ້ຕໍ່ແຕນ |
| ພໍເມື່ອ | ບັ້ນທົນຮອນ | ໃນກາຍຫາຍຂາດ |
| ພຣະຈິ່ງ | ເອື້ອນພຣະໂອດຕ້ານ | ຂານເວົ້າຕໍ່ຊຸມ |
|  | ຄວນເຮົາມື້ມິນ | ສະເດັດລົງມາຜາຍໂຜດ |
| ຫຼອນວ່າ | ດີ້ຂນາດແທ | ມົ້ນກາສາດສິຍ |
|  | ເຮົາຈັກເອົາບາໃຫ້ | ເປັນຄູຣສອນສັ່ງ |
|  | ຈັກເຫັນຈິງ ທັດແທ້ | ກິນລ້ຽວເລັດເຊີງ ທ່ານເຮີຍ |

| | | |
|---|---|---|
| ຄັ້ນວ່າ | ພຣະກ່າວແລ້ວ | ເສດເນດຣອພລັນ |
| | ຈັດແຈ່ງຂັນສີມມາ | ເຣື່ອງຣອງໄວ້ຟ້າວ |
| | ເອົາທັງຂັນເງິນພ້ຣມ | ຂັນຄຳທອງເທດ |
| | ຜ້າຫຼາກເຫຼື້ອມ | ງາມລ້ວນຄ່າແສນ |
| | ຄ້ອນແຕ່ງແລ້ວ | ເທາະລ່ອງເວຫາ |
| | ເຖິງທີ່ບາຄານພັກ | ກາບກອນຖວິ້ນໄຫວ |
| ເຣົານີ້ | ເປັນພຍາແທ້ | ຕັກກະສີລາສເວີຍຣາດ ທ່ານເຣີຍ |
| | ໂທດໝື່ນຊັ້ນ | ຂໍເຈົ້າໂຜດພາຍ ແດ່ທອນ |
| ຂໍໃຫ້ | ເປັນສະຫາຍແກ້ວ | ໄມຕີຣຕິດຕໍ່ |
| | ຂໍພຣະລຶງໂຜດຢ້ຽມ | ພົ້ມລ້ານໄພ່ເມືອງ ກ່ອນທ້ອນ |
| ເມື່ອນັ້ນ | ໂພທິຍານຫ້າວ | ບາບູ້ນຕານຕອບ |
| | ເອົາແດ່ຄຳຊອບແທ້ | ສະຫາຍແກ້ວສ່ຽວແພງ |
| ຄັນທາກ | ມີສັດຈິງແທ້ | ທາງເຣົາຊິໄປໂຜດ |
| | ວາຈາໄດ້ວ່າແລ້ວ | ຫຼາຍລົ້ນບໍ່ຄວນ ພຣະເຣີຍ |
| ສອງກໍ | ສະບົດສະບານຕັ້ງ | ສັດຈັ່ງບໍ່ພາງລ່າຍ |
| | ແລ້ວຈຶ່ງເຊີນໜໍ່ທ້າວ | ສະເດັດດັ້ນດ່ວນລົງ |
| | ມາເຖິງຫ້ອງ | ທີ່ປາງຜາສາດ |
| | ຝູງສົມມາຄ້ນອຍ | ແທນເຝົ້າແກ່ວງວີ |
| ພຣະກໍ | ປັນເມືອງໃຫ້ | ບາບູນບຸ້ດຣາດ |
| | ປັນແບ່ງໃຫ້ | ນະຄອນຄ້າຍເຄິ່ງກັນ |
| ພໍເມື່ອ | ຈອນເຈືອງເຈົ້າ | ຊົງອາສນະສູງ |

ຕົກກະສິລາພຣະ　　ຄ່ອຍຈາຈົ້ງຕາມ
ທູນສະຫາຍແກ້ວ　　ຄໍາດີໂດຍຊອບ
ຣິດເດດກ້າ　　ລືລ້າສາຕລີນ
ອັນແຕ່　ປັຖພີ້ນ　　ຊົນພູມະນຸດສະໂລກ　ເຮົານີ້
ໃຜບໍ່ອາດສູ້ໄດ້　　ຣິດທີ່ກ້າເກັ່ງສເມີ
ສະຫາຍຮຽນຄວາມຮູ້　　ຄູດີສາຕເພດ
ຂໍຈົ່ງສົ້ນເພດຂາ　　ຄໍານັ້ນຢ່າພາງ　ພຣະເຮີຍ
ເມື່ອນັ້ນ　ໂພທິຍານເຈົ້າ　　ຂານຄໍາໂດຍຊອບ
ສັດຈະທ່ຽງແທ້　　ຄໍາລຽວບໍ່ດີ
ເຮົານີ້　ບໍ່ມີໃຜສອນໃຫ້　　ນົນຢໍາຢາແຝດ　ທ່ານເຮີຍ
ດີດ້ວຍໄມ້ຄອນເທົ້າ　　ຂອງຕໍ່າມິ້ງເມືອງ
ໄມ້ນັ້ນ　ເອົາກົກຊຸ້　　ສັດຕາຍມະນຸດມອດ
ປາຍຕາວຊູ້　　ສັດນັ້ນເລົ່າດີນ
ເມື່ອນັ້ນ　ພຍາມານຜູ້　　ສະຫາຍເກີນດຈິ່ວ
ຜີໄດ້ຟັງພາກຕ້ານ　　ຄໍານີ້ແງ່ງອນ
ອະທັມເອົ້າ　　ໃນໃຈລວງຫຼອກ
ຄໍາປາກຫວານຈື່ງນ້ຳອ້ອຍ　ໃຈລ້ຽວບໍ່ທ່ຽງທັມ
ເອົາໃຫ້ເປັນຈິງແທ້　　ສະຫາຍລອງເຮົາເບິ່ງ
ເປັນແຕ່　ຄວາມປາກເວົ້າ　　ເຮົານັ້ນຢ່ານບໍ່ຈິງ
ອັນແຕ່ພາສາໄມ້　　ໃນດົງດອຍດາດ
ບໍ່ເຫັນດີອມາດກ້າ　　ຄໍານັ້ນຢ່ານບໍ່ຈິງ

ຂໍໃຫ້ ລອງເຮົາໃຫ້ ເຫັນຕາຍແຈ້ງແຈບ
ຄົນທ[illegible]ກຕາຍທ່ຽງແທ້ ສະຫາຍແກ້ວຈິ່ງໂພດຄືນ
ເມື່ອນັ້ນ ໂພທິຍານທ້າວ ຄືນຈິ່ງບໍ່ກັບກອກ
ຍົກໄມ້ເທົ້າ ຍໍຊີ້ໃສ່ສະຫາຍ
ພຣະກໍ ຕາຍໄປແລ້ວ ພໍຄາວນ້ອຍນຶ່ງ
ປ່າຍຕາວຊີ້ ຄືນໄດ້ຄົ່ງຫຼັງ
ພໍເມື່ອ ຄືນມາແລ້ວ ຄຳຈິ່ງບໍ່ໄດ້ວ່າ
ຫາແຕ່ຄວາມໂລບລ້ຽງ ກົ້ນແກລ້າຍພາງ
ເຮົາບໍ່ມີຕາຍແທ້ ນອນໄປນ້ອຍນຶ່ງ
ສະດຸ້ງຕື່ນຂຶ້ນ ບໍ່ເຫມືອນເວົ້າວ່າຕາຍ ນີ້ເດ
ເຮົາຫາກ ສົງສັຍຫຼາຍ ໃນໃຈບໍ່ແຈ້ງແຈບ
ຂອງບໍ່ມີແບບເບື້ອງ ຄຳນີ້ຊີ້ບໍ່ຄວນ ) ດອກນາ
ຈັກໃຫ້ ເຮົາເຊື່ອແທ້ ຄວນລອງສະຫາຍເບິ່ງ
ເຫັນວ່າຕາຍແນ່ແທ້ ປາຍຊີ້ຕ່າວຄືນດັ່ງນັ້ນ
ມັນວ່າຄຳສັດຫມັ້ນ ໃນໃຈບໍ່ກັບກອກ
ຈິດຫາກຄຶດກອບເກື້ອ ພາຍພໍ້ເຫຼືອນມູງ ນັ້ນແລ້ວ
ເມື່ອນັ້ນ ໂພທິຍານທ້າວ ຮອມທັມບໍ່ໄລຣິດ
ສັດຈະຕັ້ງທ່ຽງຫມັ້ນ ຄຳລ້ຽວບໍ່ມີ
ຈຶ່ງໄດ້ ຍິນຍອມໃຫ້ ພຍາມານທຳຕອຍ
ມັນກໍຊົ້ນອດມ້ຽນ ຕາຍແລ້ວບໍ່ໂພດຄືນ
ຄວາມທີ່ສັນຍາໄວ້ ຫຼົງສະຕິລືມເພດ

ເຫັນຂອງດີຕິດຢາກໄດ້ ທຳໜ້າບໍ່ຢາກອາຍ
ມັນກໍ ເອົາໄມ້ເທົ້າ ທັງງາອັນວິເສດ
ມັບແມບມ້ຽນ ໃນຫ້ອງບ່ອນດີ
ບັງລັບໃຫ້ ຄືນມາຕາມຊາກ
ລາກເອົາຈາກໜໍ່ທ້າວ ໄປໄວ້ແດ່ເມືອງ
ຟັງສຽງຄືນມັນຮ້ອງ ພໍພັນຊູຊວຍ
ແລວຈິ່ງຮອດຈົ່ມໃກ້ ຕີນຕາຍນອກວຽງ
ເມື່ອນັ້ນ ກາຍາເນື້ອ ໂພທິຍານບູນມາກ
ກັບເກີດເປັນແທ່ນແກ້ວ ຄຳເຂັ້ມຄ່າເມືອງ
ນິມະເຫສັກເຝົ້າ ເວັດຢຳພື້ນຂນາດ
ຝູງໝູ່ ເປັນພຍາດຮ້າຍ ຫຼວດຕ້ອງຢູ່ບໍ່ເຊົາ
ເຂົາກໍ ຢຳແຢງຢາມ ທຳພຽນອຸປະຖາກ
ເອົາຕອກທັງດອກໄມ້ ຫວານສົ້ມພ່ອງດາວ
ພະລິກັມເສັ້ນ ຫາຍໂພຍພິດພຍາດ
ລັນບໍ່ ທຳດັ່ງນັ້ນ ເມືອງບ້ານບໍ່ກະເສີນ
ຍຸດຕິກາບັ້ນ ຂາບູນນໍຣະມາດ
ສັງເຂບໄວ້ຫັ້ນ ເມືອໜ້າຈຶ່ງຕາມ ເຈົ້າເຮີຍ
ບັດນີ້ ຈັກກ່າວເຖິງຫ້ອງ ຈຳປາຂອງເກົ່າ ກ່ອນແລວ
ສີດາມາດນ້ອຍ ເປັນໄທ້ແມ່ເມືອງ
ສີໄວແກ້ວ ຫຼຽມທັນເປັນເພື່ອນ
ສອງກໍ ລຽງລູກນ້ອຍ ສອນໜ້າໃຫຍ່ມາ

| | | |
|---|---|---|
| ແລ້ວຈຶ່ງ | ທຶກສຶງເຈົ້າ | ທັງສອງແທນພໍ່ |
| | ເມືອງມຶ່ງບ້ານ | ປັນໃຫ້ເຄິ່ງກັນ |
| ນັບແຕ່ | ສອງສເວີຍສ້າງ | ເມືອງຫຼວງແທນພໍ່ |
| | ກໍບໍ່ມີເດືອດຮ້ອນ | ປະການແທ້ເຍື່ອງໃດ |
| ແຕ່ທໍ່ | ເຄືອງໃຈເຈົ້າ | ສີດາພຣະແມ່ |
| | ຄິດເຖິງພຣະບາດທ້າວ | ຈອມແກ້ວມຶ່ງຜົວ |
| ນັບແຕ່ | ພັດພາກບ້ານ | ໄກຫ່າງເຫິງນານ |
| | ເຖິງສິບສອງປີປາຍ | ບໍ່ຄອຍຄອງຢຽມ |
| ນາງຈຶ່ງ | ເວົ້າຕໍ່ແກ້ວ | ບຸດຕາຕົນນຶ່ງ |
| | ຈັກວ່າພຣະພໍ່ເຈົ້າ | ໄປແຫ້ທີ່ໃດ ລູກເຮີຍ |
| | ເຫິງນານລ້ຳ | ຫນີໄປບໍ່ກັບຕ່າວ |
| ຫຼືວ່າ | ຕາຍມອດມ້ຽນ | ບໍ່ມີຮູ້ຂ່າວຄາວ |
| | ຄວນເຈົ້າໄປຕາມພົ້ນ | ຫາດູຕົນພໍ່ |
| | ພໍໃຫ້ຮູ້ເຮື່ອງເຄົ້າ | ຕົວເຈົ້າຈຶ່ງຕ່າວຄືນ ລູກເຮີຍ |
| ຄັນຫາກ | ຕາຍທຽງແທ້ | ຂອງນັ້ນຫາກຊິຍັງ |
| ເມື່ອນັ້ນ | ຄັດທະຈັນທ້າວ | ໄຂຄຳຮັບພາກ |
| | ເອົາແຕ່ພຣະແມ່ໃຊ້ | ຄຳນັ້ນບໍ່ຂືນ |
| | ລູກຈັກໄປຊວນອ້າຍ | ພໍໄປເປັນເພື່ອນ |
| ລາງເທື່ອ | ມີມານຮ້າຍ | ມາຜະຈົນຊິໄດ້ຊ່ວຍ |
| | ຫຼືບໍ່ຮູ້ | ພໍເວົ້າເພື່ອນທາງ |
| | ຄອນວ່າແລ້ວ | ລາລົງເຈົ້ຽຣະຈາກ |
| ຂົ່ນສູ່ | ຜາສາດກວ້າງ | ຕົນອ້າຍກ່າວຈາ |

ດຽວນີ້ມາດາແກ້ວ ທັງສອງຊິໃຊ້ຊ່ວງ
ວ່າໃຫ້ເຮົາພີ່ນ້ອງ ຕາມໄທ້ພໍ່ພຍາ ວ່າມາ
ເມື່ອນັ້ນ ຄັດທະເນກອ້າຍ ຟັງພາກກະນິຖາ
ແລ້ວຈຶ່ງພາທີຕ້ານ ກະນິຖານ້ອງນຶ່ງ
ພື້ນ ຫາກແມ່ນລູກໄພ່ນ້ອຍ ເສດຖີເຖົ້າຈຶ່ມເມືອງ ນ້ອງເຮີຍ
ພີ່ບໍ່ເຄືອງໃຈດ້ວຍ ຊິໄປຕາມພຣະພໍ່
ເອົາແຕ່ນ້ອງ ຊິຕາມໄທ້ພໍ່ຕົນ ນັ້ນທ້ອນ
ເມື່ອນັ້ນ ຄັດທະຈັນເຈົ້າ ພາທີຕ້ານຕອບ
ຄັນພີ່ເວົ້າຈັ່ງຊັ້ນ ຕົວນ້ອງບໍ່ຂືນ
ຍາມເມື່ອ ນ້ອງຕ້ານໄດ ຂອງດີນຳພໍ່
ກັບຕ່າວບ້ານ ມາແລ້ວຢ່າແຍ່ງເອົາ ນັ້ນເນີ
ຄັດທະເນກອ້າຍ ຖແລ້ງຄຳເວົ້າຕໍ່
ຄັນແມ່ນ ນ້ອງຫາກໄດ້ແມ່ຊ້າງ ມາແທ້ກໍ່ບໍ່ເອົາ ນ້ອງເຮີຍ
ເມື່ອນັ້ນ ຄັດທະຈັນເຈົ້າ ຣາຊາອ້າຍພີ່
ກັບຕ່າວບ້ານ ມາເວົ້າແມ່ຄົງ
ລູກນີ້ໄປວອນອ້າຍ ບໍ່ມີໄປເປັນເພື່ອນ ແມ່ເຮີຍ
ເທື່ອນີ້ ລູກຈັກຄືນດຽວດັ້ນ ຕາມຫາພຣະພໍ່
ຂໍໃຫ້ພຣະແມ່ເຈົ້າ ເນົາຫ້ອງຄ່ອຍຢູ່ດີ ແດ່ທ້ອນ
ຄ້ອນວ່າແລ້ວ ຍໍກອນກົ້ມຂາບ
ຂື້ນສູ່ຫ້ອງ ໂຮງກວ້າງແຕ່ງຕົວ
ແລ້ວຈຶ່ງ ທັນໂຫນເຖົ້າ ຮູຮາລົງເລກ

| | | |
|---|---|---|
| | ກັບທັງເສເນດທ້າວ | ມາພ້ອມພ່ຳມອນ |
| | ໂຫມກໍຍິ້ມຂອນ | ທູນຖາມຫາເຫດ |
| | ທັ້ນຂາເຖົ້າ | ມານີ້ເຍື່ອງໃດ ພຣະເຣີຍ |
| | ດູລາເຖົ້າ | ໂຫມເດີຍດື້ອສ່ຽງ |
| ເຮົາກໍ | ເປັນເຫດຮ້ອນ | ເຖີງເທົ້າຮອດຄິງ ນີ້ແລ້ວ |
| ເພາະເພື່ອ | ເຮົາຮານຫ່າງໜ້າ | ພັດພໍ່ພອຍເຫັນ |
| | ຈັກຊິເປັນຕາຍທັຽງ | ດົ່ງໃດບໍ່ມີ້ຮູ |
| ຫຼືວ່າ | ໄປເນົ້າຄາງ | ນະຄອນໃດບໍ່ຮູ້ແຫ່ງ |
| | ຂໍແກ່ເຖົ້າໂຫມຮູ້ | ຄຳນີ້ຮ່ຳເພິງ ນັ້ນທອນ |
| ເມື່ອນັ້ນ | ໂຫມກໍຍໍສໍຕອງ | ກະດານຫີນໂກກກາກ |
| | ປາກກ່າວເວົ້າ | ໂທເອນພອຍພັດ |
| | ພໍໜົດເກນແລ້ວ | ທູນຖາມຖແລງເຫດ |
| ອັນວ່າ | ພຣະບິດາທີ່ຣາດເຈົ້າ | ຈອນດັ້ນພາກເມີອງ |
| | ຕານໂຫມຫ້ອງ | ຊູດທັງຣາຊາເກນຂາດ |
| | ລິກໜ່ວຍນີ້ | ດີ້ຣາຍທ່ກັນ ພຣະເຣີຍ |
| ຍັງຈັກ | ສ້ອນທັ້ນໃຫ | ພຍາຟັງນົບນອບ |
| ພຍາ | ຮ້ອຍເອດປະເທດນ້ອມ | ຟັງເຈົ້າເທສນາ |
| | ແຕ່ວ່າໃນຫີນຫ້ອງ | ຊະຕາຊັ້ນນອກ |
| | ຫມໍບອກໃຫ້ | ລິກກັນຫາພາເວ |
| | ວ່າຈັກລູລາບໄດ້ | ກໍ້ກວາງຢູ່ຊົງ ພຣະເຣີຍ |
| | ຖ້ານສາມນັ້ນ | ປັນຈະອັນທັ້ງຫ່າແຫ່ງ |

ຍັງຈັກມີແມ່ນ້ຳ　　ທັງຫ້າຢູ່ຕົ້ນ
ຖ້ານສີ່ນັ້ນຕາມຫ້ອງ　　ທໍລະຍູ້ນໂຊກໃຫຍ່
ຫາກຈັກ　ຮ້ອນຮອດໄທ້　　ອິນຟ້າຜໍ່ລົງ
ອິນຈັກນຳມາໃຫ້　　ຂອງດີອັນວິເສດ
ບໍ່ແມ່ນແກ້ວ　　ເຂົ້ານັ້ນຫາກແມ່ນງາ　ພຣະເຮີຍ
ຕາມຖ້ານຫາ　　ທໍລະຍູນຊົ່ຊອງ
ລິກຖິກຕ້ອງ　　ສູຣິໂຍລ້ຳລວງບົນ
ເຫມີອນດັ່ງມີຍິນແກ້ວ　　ເຫາະເຫີນບິນເວີ່ນ
ກັບຕ່າວຫນາ　　ຊິມາບ້ານເກົ່າຫຼັງ
ຕາມໂຫນຊົ້　　ປານະໂພຊະນັງເປັນລິກ
ຍັງຈັກລູລາບໄດ້　　ເມືອງບ້ານຢູ່ທົ່ງ
ຖ້ານທິກນັ້ນ　　ບໍ່ດີຈັກຢາດ
ເລກຂາດທ້ອງ　　ສູນຫຼວງທັງແປດ
ເທັ່ນຈັກ　ຕ່າຍທຽງແທ້　　ຄາວນັ້ນບໍ່ຍັງ
ເມື່ອນັ້ນ　ຄັດທະຈັນເຈົ້າ　　ຟັງໂຫນຖຸແລງເຫດ
ເປັນທີ່ສັງເວດແທ້　　ຫນໍເຖົ້າສຽງເສົງ
ແລ້ວຈິ່ງ　ຮາງວັນໃຫ້　　ຄຳພັນປູນແຈກ
ເປັນເຄື່ອງຈ້າງ　　ໂຫນເຖົ້າຮາຊຫານ
ແລ້ວຈິ່ງ　ດ້າດີເມື່ອ　　ພຣະກາຍາຕົກແຕ່ງ
ຄ້ອນແຕ່ງແລ້ວ　　ລາໄທ້ແມ່ຕົ້ນ
ລາທັງສາວສົມນ້ອຍ　　ຄຳພອຍສະເດັດດ່ວນ

| | | |
|---|---|---|
| | ເທາະເຜີ່ນອັ້ນ | ເມືອງຟ້າຟ່າຍສູງ |
| | ຕາມທາງອັ້ນ | ຫມື່ນີ້ມ່ຈູບອງ |
| | ລັດລ່ອງເຂົ້າ | ເຂົ້າກ້ວາງເຖື່ອນກວາງ |
| | ເຫັນຫມູ່ເນື້ອ | ຖາມທາງທາພໍ່ |
| ພໍເມື່ອ | ເຂົ້າບອກແລ້ວ | ພະເນ້ພາຍເຄື່ອນຄາວ |
| | ແລ້ວຈຶ່ງໄປເຖິງຫ້ອງ | ອາສິນແກ້ວກູ່ |
| | ແວະຈອດຢັ້ງ | ຖາມໄທ້ພໍລັດສີ |
| | ພຣະລັດສີຊຸ | ຖວາຍຄະດີບົນບອກ |
| | ພາກທັ້ນ | ດັ້ນດ່ວນພຣະດີຣີ |
| | ທະຍານເວຫາ | ເມກໄກຄອຍປຽມ |
| ແລ້ວຈຶ່ງ | ໄປເຖິງຫ້ອງ | ເຂົ້າສູ່ເມັ່ນຄອຍຄາດ |
| | ເຫັນຫນັງສືຈາຣຶກໄວ້ | ວາງວ້າວຢູ່ນຳ |
| ດາບນັ້ນ | ແມ່ນຈັກຟັນເຂົ້າໄມ້ | ໃນເງົາກໍຂາດທ່ອງ |
| | ຟັນຫມູ່ຫີນດາດແກ້ງ | ທະລາຍລົ້ມເກື່ອນພັງ |
| ເປັນເພື່ອ | ບູນບາທາວ | ພາຍຫຼັງແຕ່ຊາດກ່ອນ |
| | ໄດ້ທານດາບງ້າວກ້າ | ບູຊາແກ້ວຫນ່ວຍໃດ |
| ອັນວ່າ | ອັກສອນນັ້ນ | ພຍາອິນຂຽນບອກ |
| | ຈິ່ງໄດ້ຈາຣຶກໄວ້ | ບາທ້າວອ່ານດູ |
| ອັນວ່າ | ລັດທະນາມທ້າວ | ບິດາພຣະພໍ່ ເຈົ້ານັ້ນ |
| | ມາຣອດນີ້ | ບາທ້າວຕ່າວຕືນ |
| | ໄປເຊົາຢັ້ງ | ຕັກກະສິລາແດນເພດ |

| | | |
|---|---|---|
| | ຢັ້ງຢູ່ຫັ້ນ | ດຽວນີ້ບໍ່ຫນີ ທ່ານເຮີຍ |
| ທ້າວກໍ | ຮູ້ແຈ້ມແຈ້ງ | ຫົນແຫ່ງທາງຊິໄປ |
| | ຕົງກັບຫມໍຫົນຫວາຍ | ບອກບົນບານແຈ້ງ |
| ທ້າວກໍ | ຄາດິເນື້ອ | ພຣະສູອນແສງຄາດເຄື່ອງ |
| | ສະເດັດດ່ວນຜ້າຍ | ເມື້ອຟ້າເມກພະໂຍມ |
| | ຫຼິງເຫັນເບື້ອງ | ຕັກກະສິລານັກຄະເຣດ |
| ບັດນີ້ | ຈັກກ່າວເຖິງເຈົ້າ | ຕັກກະສີລາສເວີຍຣາຊ |
| ນັບແຕ່ | ຂ້າທ່ອນທ້າວ | ຕາຍແລ້ວມຸ່ງມອນ |
| | ເຈັດວັນລ້ຳ | ຣາຕີ້ຂ້າມລ່ວງ |
| ພຣະກໍ | ຫົນໂສກວ້ວງ | ນອນໄດ້ບ່ອມຕາ |
| | ຫຼາຍວັນແລ້ວ | ຊົນລະທາໄຫຼອາບ |
| | ຜິວຮູບເຈົ້າ | ຈົນເສົ້າຈ່ອຍໂຊ |
| ພຣະຈຶ່ງ | ຫົນເອົາເຖົ້າ | ໂຫມມາເຣວຣີບ |
| | ລູບເລກຕ້ອງ | ດູ້ຖ່າມຊູເຊີວ |
| ໂຫມກໍ | ຍໍກອນນ້ອມ | ທູນຖແລງບົນບອກ |
| | ຍັງຈັກມີມານຮ້າຍ | ມາຜະຈົນບັງບຽດ ທ່ານເຮີຍ |
| | ຫາກຈັກເຫັນມນ | ບໍ່ຍາມເຊົ້າກໍຄ່ຳແລງ |
| ມານນັ້ນ | ຕາມກົງຫ້ອງ | ທໍຣະຄູນບົນບອກ |
| | ວ່າເປັນລູກຫນໍ່ທ້າວ | ພຍາຂາພ໌ຕາຍ ນັ້ນແລ້ວ |
| | ລິກຫນ່ວຍທ້າຍ | ມັດເຊມີຣະນຸ່ງເກນຂາດ |
| ຫາກຈັກ | ຂຳເຂື້ອກຣອນ | ເມືອງບ້ານວູ່ນວາຍ ພຣະເຮີຍ |

ພໍເມື່ອ ຫມໍໂຫມເຖົ້າ ທົດສະເກມຊູມເລກ
ຍັງບໍ່ແລ້ວ ບາທ້າວດ່ວນເຖິງ
ເມື່ອນັ້ນ ພຍາຕັກກະສິລາເຈົ້າ ຫຼຽວເຫັນຟຸ່ມຄຽດ
ພຣະກໍ ຄອນພາດຄອງ ສຽງຫາວປາວພົນ
ຝູງຫມູ່ເສນາລົ້ນ ໄຫຼມາປ້ານປອກ
ບົດມືດຟ້າ ເຫາະຫາວໃສ່ບາ
ແລດູວວຫາກູ້ນ ບົດຄູ້ວັນມືວມົດ
ແຫນແຫລອນ ບາທ້າວພອງຝັ່ນ
ຂະໂຍງແກງທ້າວ ທັງຝັນກວັດແກ່ວງ
ກໍບໍ່ມີຖືກທ້າວ ພໍສຽວທໍ່ໃຍ
ເມື່ອນັ້ນ ລັດທະຈັນທ້າວ ເຫັນພົນກົ້ວໂກດ
ທ້າວກໍອຶດບໍ່ໄດ້ ຍັງ້າວຜ່າຝັນ
ຕິດເງົ້າລົ້ນ ພັງລົງເດັ່ຽຣະດາດ
ທ້າວກໍ ແກວງດາບເປື້ອງ ຝັນເຂົ້າບໍ່ທົນ
ນັບແຕ່ພົນຫຼາຍລ້ານ ຕາຍໄປມູດມອດ
ກໍບໍ່ເຫຼືອເສດຄ້າງ ບິນຟ້າເປົ້າແປນ
ເມື່ອນັ້ນ ພຍາຕັກກະສິລາຜູ້ ໃຈແຂງຂົມຄຽດ
ຄ້ອນໃສ່ຄອງ ພົນໄດ້ຫມື່ນປາຍ
ພຣະກໍ ໂກຫາຂົ້ນ ຕາແດງປານເລືອດ
ຄຽດທີ່ຊາຍຫມູ່ມ້ນອຍ ຊິງບ້ານຍາດເມືອງ
ພຣະກໍ ເຄືອງໃຈແຄ້ນ ພົນຫຼວງຣົບຕໍ່

ລູຫຼົ່ງເຂົ້າ ເຖິງທ້າວບໍ່ລໍ
ເມື່ອນັ້ນ ຄັດທະຈັນທ້າວ ເຫັນພຍາຟູມຄຽດ
ຫວັງຊີ້ຂ້າ ໃຫ້ຕາຍມຽນມອດຊີວັງ
ທ້າວກໍ ອຸບາຍເວັ້ນ ຫນີໄປພຽງທາ
ເຫນືອແມ່ນ້ຳ ເຊົາຢັ້ງບໍ່ຫນີ
ທ້າວກໍ ທຳກົນລໍ້ ພຍາມານລວງຫຼອກ
ທັງແລບລີ້ນ ທັງປິ້ນປອກຕາ
ພຍາມານເຈົ້າ ເຫັນບາລວງຫຼອກ
ຍິ່ງໂກດແຄ້ນ ຟັນເຂົ້າບໍ່ຖອຍ
ມານກໍຕາຍຕົກນ້ຳ ນະທີຫຼວງຈົມຈູ່ມ
ຝູງຫມູ່ຍັ່ງຕາວຢ້ານ ດິ້ນເຂົ້າສູ່ນະຄອນ
ບັດນີ້ ຈັກກ່າວຕາມເຣື່ອງ ນິທານທັ່ມສັບສອດ ກ່ອນແລ້ວ
ຍັງບໍ່ແລ້ວ ເມື່ອຫນ້າຊິໄຕ່ຕາມ ເຈົ້າເຣີຍ
ຄາວນັ້ນ ຍັງມີຊາຍຫານກ້າ ນາມມັນຊື່ຊາຍຫູດ
ບ້ານຢູ່ໃກ້ ຄອງນ້ຳແມ່ນະທີ
ມັນນັ້ນ ມີຣິດທີແຮງ ເກິ່ງເຈັດສາມຊ້າງ
ມັນທຳສ້າງ ອັນໄດທີນລົງທ່າ
ເອົາຫມູ່ໄມ້ ຍາງຕົ້ນເຣັດຄານ
ສາຍເຫຼັກຫມັ້ນ ລຳຕານປູ່ນປຽບ
ທານທາບກ້ອນ ທີນລ້ານກໍ່ອັນໄດ
ທັງເລົ່າ ທຳແປງຕ້ອນ ຕົ້ນປ່ອງນະທີຫຼວງ

24/VH
ຫ້າມຈຳໜ່າຍ

| | | |
|---|---|---|
| | ຫີນສຽນຄູນ | ລື່ຍາວຕົ້ນຕອນ |
| | ຜົ້ມັນມັ້ນ | ຊື້ອາຍຟ່າມືໃຫ່ຍ |
| | ກ້ວາງຂນາດແຫ້ | ແຮງລ້າເກື່ງກັນ |
| ຄາວເມື່ອ | ຈັ້ນທະຄາດທາວ | ຟັນພຍາມູ້ດມອດ |
| | ໄຫຼ່ລອງນ້ຳ | ໄປ້ດາງຫຼື່ມັນ |
| ໂລກຈຶ່ງ | ຂນານນາມເອີ້ນ | ມິມາແຕ່ປາງກ່ອນ |
| | ແກ້ງຫຼື່ຜີເພີ່ນເອີ້ນ | ເປັນຈຸ້ນຊື່ມານ |
| | ບ່ອນທີ່ມັນແປງສ້າງ | ອັນໄດເຮືອນລຶງທ່າ ປາງນັ້ນ |
| | ຜາໄດໂລກກ່າວໄວ | ດຽ້ວນຕມາ |
| | ໂລກຂນານນາມເຂົ້າ | ທັງສອງພັດຊື່ |
| | ວ່າເໜືອຜາໄດໄຕ້ຫຼື່ຜີ | ສືບມາດຽວນີ້ |
| ເມື່ອນັ້ນ | ແສນເມືອງເຖົ້າ | ມິນຕີ້ຮນ້ອຍໃຫ່ຍ |
| | ເຕັນພຍາຕາຍມອດມ້ຽນ | ກິ້ວປ່ານສິ້ນສາຍ |
| ແລ້ວຈຶ່ງ | ສະຖິດແທ່ງທ້ອງ | ເມືອງບ້ານທີ່ໃດ ພຣະເຮີຍ |
| | ເຄືອງພຣະໄທດ້ວຍ | ປະການໃດນັ້ນດູ່ງ ມານີ້ |
| | ຈຶ່ງໄດ້ລູລາບແພ້ | ມານຮ້າຍພ່າຍໜີ |
| ເມື່ອນັ້ນ | ຄັດທະຈັນເຈົ້າ | ບາບູນບຸດຮາດ |
| | ຂານຕອບຂໍ້ | ຄຳແຈ້ງບໍ່ບັງ |
| ເຮົານີ້ | ເມົາຫີນທ້ອງ | ຈຳປານັກຄະເຣດ |
| | ຄິດໄດ້ຮູ | ມິນແກ້ວສາຕສີນ |
| ຫຼືວ່າ | ຕັກກະສີລາກ້ວາງ | ຄນາຈານຈອມປາດ |

ມີມາກລົ້ນ　　ແນວເຊື້ອຊາດພານ
ລ້ວນແຕ່ພົງພັນເຊື້ອ　　ເມທານັກປາດ
ຄວາມສລາດລຶກຣູ　　ແຫຼມສ້ຽນສາດສິນ
ເຮົາຈຶ່ງ　ສົມຈອນດັ້ນ　　ສືບດຽວດັ້ນຮອດ
ຄິດໄດ້ໄດ້　　ຄວາມຮູ້ກໍ່ຈຶ່ງມາ　ທ່ານເຮີຍ
ອັນວ່າ　ພຍາເມືອງນີ້　　ບໍ່ວິຈານຕ້ອງເຫດ
ເອົາແຕ່　ຄວາມໂກດກາ　　ຊິຟັ້ນຂາເອີບເກືອ
ເອົາແຕ່　ໂລພາເຂົ້າ　　ໃນໃຈບໍ່ຕ້ອງທີ່
ເຫັນວ່າ　ເຮົາຜູ້ນ້ອຍ　　ຊິກຸ້ມຂາໃຫ້ຕາຍ　ວ່ານາ
ຈຶ່ງໄດ້　ຈິບຫາຍສ້ຽງ　　ທົ່ວເມືອງນ້ອຍມູນ
ດັບຊາດມ້ຽນ　　ຕາຍຖົມຄ້ອບຫຼົງ　ທ່ານເຮີຍ
ເມື່ອນັ້ນ　ເສນາຂ້າ　　ສາທຸການພ້ອມພ່ຳ
ຍໍຍິ້ມນົວ　　ທູນເກົ້າໃສ່ສຽນ
ເຂົາກໍ　ຍິນດີດ້ວຍ　　ດອນພຍາອົງໃໝ່
ອົງເກົ່ານັ້ນ　　ຕາຍແລ້ວບໍ່ຄືງ
ອົງກະສັດຕານ້ອຍ　　ທົ່ວເມືອງສຸເວີຍຣາດ
ກໍບໍ່ລະຣືດເຄົ້າ　　ຄອງເຖົ້າແຕ່ປະຖົມ
ນີ້ແຕ່　ກິນທານສ້າງ　　ທຳບຸນບໍ່ໄດ້ຂາດ
ຝູງໝູ່ທຸກຂນອດໄຮ້　　ໂຮມເຂົ້າເພິ່ງບຸນ
ຄູນສິນສ້າງ　　ປາຣະມີມາວົງ
ຝູງໝູ່ສັງຄະເຈົ້າ　　ສະມະນະສ້າງຄຽນຄອງ

ຣຸພສັດໃຫ້ ປັດຈັຍທັງສີ່
ບໍຣິຈາກໃຫ້ ທານຊ້ຳເຊື່ອສິນ
ອຸປະຖາກຄ່ຳເຊົ້າ ຊົມຊື່ນໂມທະນາ
ຊົງຮັກສາສິນສັດ ບໍ່ໄລລາເວັ້ນ
ນັບແຕ່ ມາສເວີຍສ້າງ ທົງທັມຕັ້ງທ່ຽງ
ເມືອງມົ້ງບານ ຫາຍຮ້ອນຢູ່ກະເສມ
ພໍເມື່ອ ຣາຊາທາວ ຄົດທະຈັ້ນສເວີຍຣາດ
ຄິດຢາກ ປະພາດຫຼົ້ນ ໃຫ້ຫາຍຮ້ອນສວ່າງກໍໃຈ
ພຣະຈິ່ງ ບັນຊາໃຊ້ ຄວນສາມຫ້າງເຄື່ອງ
ຈັດແຢ່ງຊ້າງ ສາມຕົ້ນຂຶ້ນທົງ
ຝູ່ງຫມູ່ ເສນາລ້ອມ ຕາມອົງພູວະນາດ
ແຫ່ນແຫ້ທາວ ຕາມຕາຍລຽບເມືອງ
ແລ້ວຈິ່ງ ໄປເຖິງເຫົ້າ ບັນລັງພຍາພໍ່
ທ້າວກໍ່ ເຫັນແຫ່ນແກ້ວ ແດງເຂັ້ມແຫ່ງຄຳ
ຈິ່ງໄດ້ ຖາມຂູນເຖົ້າ ເມືອງຈັ້ນຫາເຫດ
ແຫ່ນອັນນີ້ ໃຜສ້າງກໍ່ກະທຳ ທ່ານເຮີຍ
ເມື່ອນັ້ນ ເສນາເຖົ້າ ທູນຖແລງແຈ້ງເຫດ
ອັນນີ້ ບໍ່ມີໃຜກໍ່ສ້າງ ຫາກບັນດົນບັງເກີດ
ຫາກແມ່ນ ອະສູພະຊາກເນື້ອທ້າວ ຄົດທະນາມບັງເກີດ ເປັນແລ້ວ
ດູລາເຖົ້າ ເສນາອາມາດ
ແປກປລາດເບື້ອງ ຄຳນີ້ແມ່ນຈິງ ນັ້ນລີ

| | | |
|---|---|---|
| | ເດີມທີນັ້ນ | ສັນໃດໃຫ້ເວົ້າຊື່ |
| ຈຶ່ງເປັນ | ທອງແທ່ນກ້ະຂາງ | ຄຳເຫຼື້ອມຫຼື່ງແສງ |
| ເມື່ອນັ້ນ | ເສນາເຖົ້າ | ທູນຖວາຍບົນບອກ |
| | ເລົ່າເຫດຕົ້ນ | ຖແລງຂໍ້ບັງ |
| ປາງນັ້ນ | ຍັງມີກະສັດເຊື້ອ | ຄຶດທະນາມນ້ອຍຫນໍ່ |
| | ເຫີນເມກຟ້າ | ເຫາະຫ້າວຂື່ງາ |
| ຫ້າວນັ້ນ | ໃຈຫານກ້າ | ອິດທິພົນເພັງເດດ |
| | ມີໄມ້ເທົ້າ | ສອນແກ້ວພ່ອງງາ |
| | ແຕ່ພຍາເມືອງນີ້ | ອະທັມສາໂຫດ |
| | ໄມ້ເທົ້າຊີ້ | ຕາຍແລ້ວບໍ່ໂຜດຄືນ |
| ແລ້ວຈຶ່ງ | ບັງຄັບຊີ້ | ເສນາຫານສົ່ງ |
| | ມາຖືມໄວ້ | ຄອຍແຮ້ງພ່ອງກາ |
| | ເປັນເພື່ອສົມພານກ້າ | ຄັດທະນາມສິດທິເດດ |
| ພຣະສົບ | ຈຶ່ງໄດ້ເປັນແທ່ນແກ້ວ | ຄຳເຂັ້ມແທ່ງທອງ |
| ເມື່ອນັ້ນ | ຄັດທະຈັນເຈົ້າ | ຝົງຊຸ້ມຖແລ່ງບອກ |
| | ນ້ຳພຣະເນດຍ້ອຍ | ຮ່ຳແກມຍາວຍົມ |
| | ພຣະໄທທົງແຄ້ນ | ແສນຣະທົມຂົມຂື່ນ |
| | ຊົງໂສກເສົ້າ | ແສນຊັ້ນທຸກຣະທົມ |
| | ກົ່ນແສງເສົ້າ | ໄຫຼນອງນ້ຳພຣະເນດ |
| | ຖືກແບບເບື້ອງ | ໂທນແທ້ທ່ຽງຈິງ ແທນໍ |
| ພຣະກໍ | ຂັນຕີຕັ້ງ | ບໍ່ມີຈາຕ້ານປາກ |

ແລ້ວຈຶ່ງ ກັບຕ່າວຊ້າງ ຄືນເຂົ້າສູ່ນະຄອນ
ພໍເວລາແລງຄ້ອຍ ສູຣິໂຍລັບລຽມ
ພຣະສູຣິແສງມືດໄມ້ ມ ຍາມເຄົ້າຂຶ້ນຄອນ
ທ້າວກໍ ວອນເພິ່ງໄກ ມະໂນນູມເອົ້າອິ້ງ
ເຂົ້າແລະນ້ຳ ວັນມື້ບໍ່ສເວີຍ
ພຣະຈຶ່ງ ຕັດຖາມເຖົ້າ ເສນາຕາມບາດ
ອັນວ່າ ໄມ້ຄອນເທົ້າ ບາທາວຢູ່ທີ່ໃດ , ທ່ານເຮີຍ
ຂໍຈົ່ງນຳມາໃຫ້ ເຮົາດູຈັກສະຫນອຍ
ໃຫຍ່ແລະນ້ອຍ ຍາວສັ້ນທໍ່ໃດ
ເມື່ອນັ້ນ ເສນາທາວ ນຳທູນຖວາຍບາດ
ພຣະກໍ ຮັບໄມ້ເທົ້າ ມາແລວລ່ຳແຍງ
ພໍເມື່ອ ແສງສູນຂົນ ອາຣຸນເປັນມື້ໃຫມ່
ຊົງສູພາໂພດເຂົ້າ ງາຍເຊົ້າພາງພາ
ແລ້ວຈຶ່ງ ຕັດຖາມເຖົ້າ ໂຫຣາທາຣິກ
ອັນວ່າ ວັນແລະມື້ ຍາມໃດດີຂຸນາດ
ວັນມື້ຣືກຖືກຕ້ອງ ກິນແຫ້ຫນ່ອຍໃດ
ເມື່ອນັ້ນ ຫນໍໂຫນເຖົ້າ ເອົາສໍຂຽນຂີດ
ເກນເລກຖວນ ຫມົດແລ້ວເລົ່າທູນ
ມັນທາກດີຍັນມື້ ຍາມແຖ້ໃກ້ຊີ່ທ່ຽງ ທ່ານເຮີຍ
ດີຕລອດເທົ້າ ເຖີງຄ້ອຍຄ່ຳແລງ
ຕາມກົງຫອງ ຊາຕາຝອຍບອກ

ວ່າຄືນທູກຂົນອດໄຮ້ ຊິມາໄດ້ແທ່ນຄຳ
ຜີຈັກ ຈາຕານທອງ ທໍຣະຄູນເກມຂາດ
ຍັງຈັກລູລາບໄດ້ ສັກການພ້ອມມາກມູນ
ອັນນຶ່ງ ຍາມຕູດຊາຍ ສູຣິໂຍຄ້ອຍຍ່ຽງ
ໄດ້ລີກເບື້ອງ ພຍັບຍ່າມດີ
ຊື່ວ່າ ຕົ້ນທັບຣາຊາ ໂຊກຍາມວັນຄ້ອຍ
ໄດ້ແກ່ ລູກຊ້າງນ້ອຍ ກາຍເກີດເປັນພຍາ
ຝູງຫມູ່ເງີນຄຳເຫຼືອງ ຊິເກີດມາເປັນທ້າວ
ຍາມແລງຄ້ອຍ ມະຫາຊັຍດີຂນາດ
ປູ່ຈັກນີ່ງແທ່ນແກ້ວ ຈາຕ້ານຕໍ່ຫຼານ ພຣະເຣີຍ
ເມື່ອນັ້ນ ປູ່ໂລຫິດເຖົ້າ ທູນຖາມຫາເຫດ
ອັນວ່າ ພຣະບາດເຈົ້າ ຫາວັນຍາມປອດ
ພຣະຫາກ ຄິດໄດ້ດ້ວຍ ກະທຳແຫລ່ງໃດ
ລີຈັກໄປຊິ້ງບ້ານ ເລວເມືອງສູ່ຕ
ຝູງຂ້າ ຂໍເກື້ອຍແກ ຕາງເຈົ້າບໍ່ໃຫ້ເຄືອງ
ຂໍພຣະ ດຽງຄວາມໃຫ້ ໃຈປະສົງຊ່ຊອງ
ຝູງຂ້າ ຄິດໄດ້ຮູ້ ຂໍແຈ້ງເທສນາ ພຣະເຣີຍ
ເມື່ອນັ້ນ ຄັດທະຈັນທ້າວ ບາບູນບຸຕຣາດ
ຖແລງວາດເວົ້າ ຈາແຈ້ງຕໍ່ຊຸນ
ເທົ່ານີ້ ຊົງສເວີຍເມືອງບ້ານ ຊົນສານອຍຫມູ່ມ
ສິບຫົກຂວບເຂົ້າ ປີ້ນລ່ວງມາ ທ່ານເຣີຍ

ຄວນທີ່ ທຳເຂົ້າຫາວ ຄັດທະມານໃຫ້ກັບເກີດ
ມາສເວີຍສິບສ້າງ ເມືອງບ້ານເຂື່ອນແຂງ ນັ້ນທ້ອນ
ເມື່ອນັ້ນ ເສນາກົ໋ມ ອັນຈະລືງົບນອບ
ເຂົ້າແຕ່ ພູວະນາດທ້າວ ຊີຊົງເກື໊ອໂຜດຜາຍ
ຟູ້ງຂາ ຍິມດີ້ດວຍ ດອມອົງໂພທິຣາດ
ເພາະເພື່ອ ສູ້ກຢູ່ລວມ ບູ້ນທາວເຫຼື່ອມມຸງ ພຣະເຣີຍ
ເມື່ອນັ້ນ ຄັດທະຈັ້ນທາວ ສົງການຕັ່ກບອກ
ໃຫ້ຣີບ ຕີປ່າວຄ້ອງ ພົ້ນລານໄພ່ເມືອງ
ໃຫ້ເຂົ້າ ທຳທາງກວາງ ຖົມຫຼວງພຽງຣາບ
ຖາກຖາງຕໍ່ແກ່ນຫມັ້ນ ຂວານປ່ຳກີ່ນຖົມ
ໂພນຫຼວງມ້າງ ຫນາມ້ຖາງຊຸດອອກ
ສອງຂອກຕາຍ ຢາຍກ້ວຍແຄທາງ
ທັງໄຫເຫຼົ໋າ ສາໂທຕົ໋ມກົ່ມ
ອູ່ແອງຕັ້ງ ຂົງນ້ຳຫວາງທ່າງ
ກັບທັງ ອ່າຫານເຂົ໋າ ໂພຊະນັງນ້ຳທ່າ
ຂິ່ງຂາ໋ຂວ ຈີນເນື໊ອທອດຫມູ
ປາທູຫນັ໊ງ ທັງເຕັ້ນໃຫ້ຈັດແຈ່ງ
ແກ່ງພອງຂົ໋ວ ງົ້ວກອຍລາບຍຳ
ທຳໃຫ້ ສົມກະບວນເບື໊ອງ ຄັດທະນາມກັບເກີດ
ຟູງຫມູ່ໄທເສບຄ້ອງ ກອງຕູ້ນຕ່ອຍຕະໂພນ
ໃຫ້ເຂົ້າ ໂຍນຕີ້ຕູມ ຕະຈຸ້ມບອນຟ້ອນແອ່ນ

ຝູງໝູ່ ແຟນນັກຫຼິ້ນ　　ໃຫ້ເຂົ້າເຕັ້ນແອ່ນຂາ
ນໍຣະຄາເຫົ້າ　　ທາງຫຼວງໃຫ້ເຖິງແທ່ນ
ທຳໃຫ້ ແປນແກ່ນກຽງ　　ວັນນີ້ຢ່ານານ
ເມື່ອນັ້ນ ເສນາຂາ　　ຂຸນຫຼວງຈັດແຈ່ງ
ຕຶກແຕ່ງຕັ້ງ　　ດູແລວຊູແນວ
ເຖິງເມື່ອ ຍາມດີແລ້ວ　　ຄັດທະຈັນສະເດັດອອກ
ຝູງໝູ່ເສເນດລ້ອມ　　ຂວາຊ້າຍແຫ່ຕາມ
ແລ້ວຈຶ່ງ ທຳຜ້າກັ້ງ　　ເພດານມຸງມານ
ວົງແວດລ້ອມ　　ບັນລັງກວາງແທ່ນທອງ
ຮອງໆເຫຼື້ອມ　　ຮັງສີໃສ່ສ່ອງ
ຫອມອູດເອົ້າ　　ບູຊາເຈົ້າເທພດາ
ພໍເມື່ອ ເວລາລ້ຳ　　ມະຫາຊັຍໂຊກໃຫຍ່
ບາກໍເຂົ້າແທບໄກ້　　ໃນມູ້ງຜູ້ດຽວ
ແລ້ວຈຶ່ງ ຍໍກອນນ້ອມ　　ອັນຊະລີນົບນອບ
ກາບແຜ່ນພົ້ນ　　ບັນລັງແກ້ວພໍ່ຕີນ
ພຣະຈຶ່ງ ອະທິຖານຕັ້ງ　　ໃນພຣະໄທແນວແນ່
ຂໍແກ່ ອິນທິຣາດໄທ　　ຫຼີງຢ້ຽມສ່ອງຍານ ແດ່ແມ
ເທີ້ອນ ຂໍໃຫ້ບັນລັງແກ້ວ　　ອິນທາຊູຊ່ວຍ
ຂໍໃຫ້ ກັບເກີດຂື້ນ　　ເປັນໄທພໍ່ລຶງ ແດ່ທອນ
ພໍເມື່ອ ອະທິຖານແລ້ວ　　ຖືເອົາໄມ້ເທົ້າພໍ່
ຍໍຍົກຊື້　　ສາມທີແລ້ວເລົ່າວາງ

ເມື່ອນັ້ນ ຂັນລົງແກ້ວ ຄັດທະນາມຂຳເຂືອກ
ກັບເກີດຂົ້ນ ເປັນທ້າວຫນໍ່ພຸດໂທ
ໂສມງາມລ້ຳ ຄືຄຳງາມຫຼໍ່
ເຫມືອນຫນໍ່ໄທ້ ອິນຟ້າໂຜດຜາຍ
ງາມຍິ່ງຜ້ຽງ ພຽງດັ່ງທອງທາ
ບາຄານພຣະ ນັ່ງອິງຫມອນເທົ້ງ
ຄື່ບ ເຖິງຕາຍແທ້ ນໍຣະນາກັບເກີດ
ຂັດສະນາທິຕັ້ງ ປານເຂົ້າສູ່ຊານ
ເມື່ອນັ້ນ ຄັດທະຈັນເຈົ້າ ດີພຣະໄທຊອຍຊື່ນ
ເຫັນພໍ່ ກັບເກີດຂົ້ນ ຄືນແທ້ດັ່ງຫັງ
ແລ້ວຈິ່ງ ເປີດຜ້າກັ້ງ ລຶດມ່ານເພດານ

ເສນາເຫັນ ເຊີບກອງທັ້ງຄ້ອງ
ເສພາພ້ອມ ສວນໄລແຄນປີ່
ຂັບເສບພ້ອມ ແຄນໄລ້ຂູ່ຍລະບຳ
ຂັນດານກ້ອງ ປີຖພິຂຳເຂືອກ
ຝູງຫມູ່ເທພໄທ ວອນໄຫວ້ສິ່ງສຽງ
ເມື່ອນັ້ນ ໂພທິຍານທ້າວ ເຫັນບາຕີນລູກ
ນັ່ງແທບໃກ້ ບໍ່ມີຣູ້ກ່າວຖາມ
ກູມານ້ອຍ ເມືາທີ່ນະຄອນໃດ
ຈິ່ງໄດ້ມານັ່ງທຽມ ແທ່ນເຮົາຮຽງໃກ້
ເມື່ອນັ້ນ ຄັດທະຈັນນ້ອຍ ຍໍມືທູນບາດ

ຖແລງວາດເວົ້າ ຂານຂໍ້ພໍ່ຕົນ

ລູກນີ້ ຫາກແມ່ນໂລຫິດກ້ອນ ໃນອຸທອນຂອງພໍ່ ນັ້ນແລ້ວ

ເນົາແຫ່ງຫ້ອງ ຈຳປາກວ້າງແກວໄກ່

ສີດາແກ້ວ ນາງເມືອງເປັນແມ່

ຈຳຂ້າໃຊ້ ພຣະເນຜ້າຍດູງຕ່າມ ພຣະເອີຍ

ແລ້ວຈຶ່ງ ມາພົບພໍ້ ພຣະບິດານໍຣະມຶ່ງ

ຈົ່ມພັບເກີດຂຶ້ນ ດຽວນີ້ບໍ່ຫມີ ພໍ່ເອີຍ

ຍຸດຕິກາບັ້ນ ອົງພຍາເກີດໃຫມ

ຄາວຫນ້າພູ້ນ ຍັງຊິ້ກວາງກ່ວາຫຼັງ

ເມື່ອນັ້ນ ໂພທິຍານທາວ ຟັງບາຖແລງພາກ

ປາກບໍ່ໄດ້ ໃຈສະອື້ນອ່ອນມະໂນ

ມືຄົວອູ້ມ ກຸມານຕົນລູກ

ໂຈມຈູບເຈົ້າ ໂຈມຂຶ້ນໃສ່ເພົາ

ອັດຊຸຈູມໂຊມຫນ້າ ກັນແສງສລົບເພດ

ເປັນຫນ້າສັງເວດໂອ ສະຕິເພື້ຍາຫຼົງ

ແລ້ວຈຶ່ງ ກອຍໃຈ້ຕານ ດອນບາບຸຕຣາດ

ດູລາເຈົ້າ ກຸມານລູກພໍ່

ອັນວ່າ ເມືອງມຶ່ງບ້ານ ສະຖຽນຫມັ້ນຄ່ອຍຢູ່ດີ ພໍ່ລີ

ຝູງຫມູ່ ພົງພັນເຊື້ອ ມາດາພຣະແມ່

ຍຸດຕິກາໄພຟ້າ ເມືອງບ້ານຄ່ອຍກະເສມ ແດ່ລີ

ເມື່ອນັ້ນ ກຸມານທ້າວ ຂາບູນບຸຕຣາດ

ກີ້ນຂາຍໄຫ້ວ　　ທູນໄທ້ພໍ່ຕີນ
ອັນວ່າ　ພື້ນເມືອງບ້ານ　　ຫຼານລູງພັງແມ່
ກູລວົງພີ່ນ້ອງ　　ສະບາຍບາງຫ່າງໄພ　ພໍ່ເອີຍ
ທໍ່ແຕ່　ເຄືອງໃຈເດວຍ　　ພຣະບິດາບໍ່ກັບຕ່າວ
ແມ່ຈິ່ງໃຊ້ສົ່ງຂ້າ　　ໃຫ້ຕາມດັ້ນດູ່ງຫາ
ພໍເມື່ອ　ຈາກັນແລວ　　ສູຣະແສງມົວມິດ
ເສຕສີດກຶ້ງກັ້ງ　　ກັ້ນຟ້າຫມອກຊຶຣວ່າຍ
ໂຄມໄຟຟ້າ　　ຕະກຽງສານເຮືອງຮຸ່ງ
ຝູງຫມູ່　ຂີບເສບພ້ອນ　　ຊະອອນໂອໂຫ້ວັນ
ເມືອງນັ້ນກອງ　　ເພ້ງລະບຳແຄນຂຸ່ຍ
ພິນພ່ອງໄດ້　　ຊໍແອພອງແກ
ມິມະໂຫລີ້ຫູ້ນ　　ຫຼາຍເຊີງສນຸກຍິ່ງ
ຫນັງແລະງົ້ວ　　ລິເກຫຼົ້ມກອນຕະຫຼວງ
ງານມະໂຫຣາລົ້ນ　　ສເລີມບາບູນມາຕ
ເຈັດພ່ຳມື້　　ງານຫຼົ້ມເລີກລາ
ເຈັດວັນຖ້ວນ　　ສລອງບາລາເລີກ
ແລ້ວຈຶ່ງ　ແຫນແຫ່ທາວ　　ຄືນເຂົ້າສູ່ນະຄອນ
ເຂົາກໍ່ຫົດສົງເຈົ້າ　　ທັງສອງພ່ລູກ
ປູກໃຫ້ເປັນຫນໍ່ເຊື້ອ　　ແຫນສາງສືບເມືອງ
ພໍເມື່ອ　ຂາບູນທ້າວ　　ໂພທິຍານສເວີຍຣາດ
ຝູງຫມູ່ອາມາດເຕົ້າ　　ໂຮງກວ້າງດັ່ງຄືນ

| | | |
|---|---|---|
| ພຣະຈິ່ງ | ບັນຊາໃຫ້ | ກຸມານຕົນລູກ |
| | ຍືວຣະຍາດຍ້າຍ | ຜາຍຂັ້ນຂຶ້ງາ |
| | ຣາຊາທ້າວ | ໂພທິຍານພຣະພໍ່ |
| | ເຫັນລູກແກ້ວ | ເມົ້າຊາງຂຶ້ງາ |
| ພຣະຈິ່ງ | ອະທິຖານຕັ້ງ | ປາຣະມີເສົ້ງສຽງ |
| | ຫຼິງລ່ຳຢ້ຮູມ | ຍານແກ້ວຜໍ່ຄອຍ |
| ອັນວ່າ | ງາສານຊ້າງ | ກູນຊູ້ະໂຣພຣະພໍ່ |
| | ຂານອອນດວຍເດດທ້າວ | ບູນສາງແຕ່ຫຼັ້ງ |
| ດັ່ງນັ້ນ | ຂໍໃຫ້ສີນບັດເຂົ້າ | ເງິນຄຳແກ້ວຫຼາກ |
| | ໄຫຼອອກຈາກພຣະໂອດແກ້ວ | ງາຊາງເຜືອກຜາຍ |
| ໃຜຜູ້ | ຈິ້ນໃຈຮ້າຍ | ເຂັ້ນໃຈທຸກຂມອດ |
| | ໃຫ້ເຂົ້າສຸກຢູ່ຍ້ອນ | ຄຳແກ້ວເພິ່ງບູນ ນັ້ນທ້ອນ |
| ຄັນບໍ່ | ເຣືອງເດດທ້າວ | ສີນພານບໍ່ເຄີຍແມ່ນ |
| ຫາກບໍ່ | ໄດ້ໂກດແກ້ວ | ງາຊ້າງເປົ່າສູນ ດັ່ງນັ້ນ |
| ຂໍໃຫ້ | ຈິບຫາຍສຽງ | ເງີນຄຳຢ່າໄຫຼອອກ |
| | ສີນບັດທັງເຂົ້ານ້ຳ | ສູນສຽງຢ່າໄດ້ມີ ນັ້ນທ້ອນ |
| ພໍເມື່ອ | ອະທິຖານຕັ້ງ | ໂພທິຍານເສົ້ງສຽງ |
| | ສີນບັດເຂົ້າແລະນ້ຳ | ໄຫຼລົ້ນຫຼັ່ງເທ |
| | ເງີນຄຳແກ້ວ | ອະນັ້ນຕັງໄຫຼອອກ |
| | ມັບບໍ່ຖ້ວນ | ດູຜຽງດັ່ງຊາຍ |
| ພຣະກໍ | ຕີ່ປ້າວຄອງ | ບອກປາວພີລເມືອງ |

ໃຜຜູ້ ເຄືອງໃຈດ້ວຍ ເງິນຄຳບໍ່ພໍຈ່າຍ
ໃຫ້ຣີບຟ້າວ ເງິນແກ້ວມາກຸມູນ ທ່ານເຣີຍ
ໃຜປະສົງອັນໃດໄດ້ ຕາມໃຈທຸກຢ່າງ
ສົມບັດໄຫຼຫຼັ່ງລົ້ນ ຄົນຢ້ຳແຍ່ງຊິງ
ຝູງຊາຍຍິງຊາວບ້ານ ປະຊາຊົມຊົນຊື່ນ
ສຽງລະງົມແຕກຕົ້ງ ຜິນເຜົ້າທົ່ວພາຍ
ບາງພ່ອງ ເອົາໄຫຫມໍ້ ທໍກະເຊີຊາບກະຕ່າ
ຫົງກະບຸ້ງກະຊາ ຫາເອົ້າໃສ່ຄຳ
ລາງພ່ອງ ຕຳກັນລົ້ນ ໂຄມຊົ້ງບ່າຄແຍ່ງ
ຫາບເຕັມແຮງເຣື່ອຍ້ອຍ ໃຄ້ຄາວຍ່າວໄຫຼ
ຄົນທີ່ຈົນຈອນຣາຍ ເຂັນໃຈທຸກຂົມອົດ
ກັບເກີດມີເຂົ້ານ້ຳ ເຫຼືອບຸ້ງໃສ່ສາງ
ມີຊັບພໍໃຊ້ ເງິນຫຼາຍເຫຼືອໄທ່
ເຫຼືອຈາກໄຫໃສ່ຫມໍ້ ກະທໍ້ຊາຕ່າງເຕັມ
ໃຜຜູ້ ເລັມເກັບມ້ຽນ ເຫຼືອເຍັຍຍຸ້ງໃຫຍ່
ເກັບໃສ່ໄຫທີບລົ້ນ ເຫຼືອເລົ້າໃສ່ກະຖົງ
ປາງນັ້ນ ຫາຍໂພຍຮ້ອນ ບໍ່ມີຄວາມອຶດຢາກ
ບໍ່ມີທຸກຢາກແຄ້ນ ອົນຮ້າຍດົ່ງຫົວ ເຈົ້າເຣີຍ
ຄວັນ ມີສຸກຍ້ອນ ສົມພານໂພທິຣາດ
ປາຣະມີ່ຫຼູ້ມ ພົນລ້ານຢູ່ກະເສີມ ເຈົ້າເຣີຍ
ເມື່ອນັ້ນ ໂພທິຍານທາວ ຖແລງໂລມຈາລູກ

| | | |
|---|---|---|
| | ແຍ້ມພຣະໂອດກ້າ | ຈາຕ້ານສັ່ງສອນ |
| ພົ້ນ | ກາຍາເຖົ້າ | ຊະຣາການກາຍແກ່ |
| | ເຊີນລູກກັບຕ່າວຍ້ານ | ນະຄອນກວ້າງແຫ່ງເຮົາ ພໍ່ທ້ອນ |
| ປານນີ້ | ແມ່ຢູ່ບານ | ຊິຄອງຄ່ຳຄອຍທາງ ແລນໍ |
| | ຈັກຄນິງຫອນຫາ | ເມື່ອຍມະໂນຄອງຖາ |
| ອັນວ່າ | ງາສານຊ້າງ | ທັງສອງໃຫ້ລູກຂີ່ ເອົາເນີ |
| ຈັກວ່າ | ເມືອງມິ່ງບ້ານ | ປານນີ້ຊິດັ່ງໃດ ບໍ່ຮູ້ |
| ເມື່ອນັ້ນ | ບາດານທ້າວ | ຄັດທະຈັນຕົນລູກ |
| | ຟັງພໍ່ໃຊ້ | ຕາມຕ້ານສັ່ງເມືອ |
| | ບາບໍ່ຂືນອັດຄໍ້ | ຂືນຄຳພຣະພໍ່ |
| | ບໍ່ໄດ້ຂືນບາດພົ້ນ | ບິດາໄທ້ທ່ານສອນ |
| ນັບແຕ່ | ບາສເວີຍສ້າງ | ຕັກກະສີລາດູຣມພໍ່ |
| | ໄຕມາດົ້ມ | ເດືອນຖ້ວນຖ່າຍມາ |
| ບາກໍ | ຕາມຄຳເຈົ້ສ | ພຣະບິດາຕັດບອກ |
| | ນົບນອບນົ້ວ | ທູນໄທ້ຕ່າວເມືອ |
| | ເອົາງາຊ້າງ | ເປັນເຮືອຂັບຂີ່ |
| | ເຫາະຫອນຜາຍ | ເຫີນຟ້າຜ່າລົມ |
| | ພໍເມື້ອທ້າວ | ຄັດທະຈັນເຈັຽຣະຈາກ |
| ຝູງໝູ່ | ຊາວພີ່ນ້ອງ | ແດດົ້ນດັ່ນນຳ |
| | ເປັນທີ່ກັ້ມສູດແທ້ | ແສນຣະທົມຂົມຂື່ນ |
| | ພັດພ້າກຫອງ | ເດີນດ້າວຜູ້ດຽວ |

| | | |
|---|---|---|
| ເມື່ອນັ້ນ | ໂພທິຍານທ້າວ | ຄັດທະນາມພຣະພໍ່ |
| | ຍາມເມື່ອລູກຈາກແລ້ວ | ພຣະໄທເສົ້າຣ່ຳຄນຶງ |
| ກູ໊ນ | ຕືນຕົວເຖົ້າ | ຊະຣາການກາຍແກ່ |
| | ນ້ຳເຕົ້າແກ້ວ | ທັງເຫົ້າມິ່ງເມືອງ |
| ກູ໊ນ | ຄວນທີ່ເອົາໄປໄວ້ | ພູຈິນາຍເທທອດ |
| | ຍັງຈັກເປັນປໂຍດແທ້ | ເມືອຫນ້າໂລກລື |
| ພໍເມື່ອ | ພຣະຣ່ຳແລ້ວ | ເຖິງທີ່ຍາມແລງ |
| | ຣາຕິເຖິງ | ທ່ຽງຄືນເວົ້າຊາຍ |
| ພຣະກໍ | ບາຍເອົາເຕົ້າ | ຄັນທີສົງໂສດ |
| | ກັບທັງໄມ້ຄອນເທົ້າ | ສະເດັດລ້ຳລວງລົຍ |
| ເອົານັ້ນ | ມີສະນ້ຳ | ທັງສອງຣຽງຣາບ |
| ບ່ອນນັ່ງ | ເປັນສະນ້ຳ | ຊຸດທະກັງລາງສ່ວຍ |
| ບ່ອນນັ່ງນັ້ນ | ເປັນບ່ນ້ຳ | ສັດໄດ້ດື່ມກິນ |
| | ມີຣົດສີສືນເຝົ້າ | ອາສັຍກິນລ້າງສ່ວຍ |
| ແຕ່ວ່າ | ດັບຊາດມ້ຽນ | ເມືອຟ້າກ່ອນບາ |
| ພຣະຈິ່ງ | ເອົາໄມ້ເທົ້າ | ທັນດັ່ງຖ໊ມໃສ່ |
| | ຊຸກຊ່ອນໄວ້ | ສະນ້ຳສ່ວຍສີ |
| ເລີຍເລົ່າ | ເປັນນະທີ | ເກີດໂພຍເຂັນຣ້າຍ |
| | ຝູງຫມູ່ສັກກູ້ນາເນື້ອ | ລົງກິນນໍຣະນາດ |
| ແມ່ນເອົາ | ເຫຼັກຂນາດກ້າ | ລົງຖ໊ມກໍເປື່ອຍເພ |
| ໂລກຈິ່ງ | ຫານາມໃຫ້ | ສືມຈົງຕາມຊື່ |

ນ້ຳກົດເຫຼັກກັດທອງທ່ານເອີ້ນ　ເຮົາຮູ້ຕໍ່ມາ
ອັນວ່າຄັນທີ່ເຕົ້າ　ເອົາລົງສະນຶ່ງ
ສະນັ້ນ　ເກີດເປັນນ້ຳບໍ່ແກ້ວ　ໂພຍຣາຍບໍ່ມີ
ສັດຕົວໃດກິນແລ້ວ　ມີຣິດທີ່ແຮງຂນາດ
ອາດຈັກ　ເຫາະຫອຍເຕັ້ນ　ເຫີນຟ້າດັ່ງລົມ
ຝູງສັດເຖົ້າ　ລົງກິນກໍກັບຫນຸ່ມ
ໃຜຜູ້　ບູນມາກລົ້ນ　ຫຼົງພໍ້ກໍຈຶ່ງເຫັນ　ທ່ານເອີຍ
ພໍເມື່ອ　ບັນຈຸແລ້ວ　ຂາບູນກັບຕາວ
ເຫາະຫອບຟ້າວ　ດີນເຂົ້າສູ່ນະຄອນ
ກໍບໍ່ມີຄວາມຮ້ອນ　ອັນຕຣາຍບັງບຽດ
ພຣະກໍ　ສູກຢູ່ລ້ອນ　ຄຳເສົ້າບໍ່ມີ
ນັດຖືບັ້ນ　ດີດທະນາມພຣະພໍ່
ສັງເຂບຂໍ້　ໄຂໄວ້ແຕ່ປະມານ　ທ່ານເອີຍ
ຟັງເນີ　ເມທາໃຫ້　ທານຄະນາຈານຈອມປາດ
ອະນຸຍາດຍົກໃຫ້　ອະພັຍບາງຣະຫວ່າງເຜີ
ຟັງເນີ້　ນົງນາງຫຼາ　ຫູຮາຮູບຫຼໍ່
ຟັງແລ້ວ　ຈຳຈື່ຂໍ້　ຢ່າຫຼົງເຄົ້າສາສນາ
ສັງຮອມກາຍຫູໄວ້　ກາຍໃຈໃຫ້ຕັ້ງທ່ຽງ
ຫ່າບັກຊຽງຂັດ　ຢ່າຫຼົງລໍ້ລຽມມັນ
ໃຫ້ພາກັນຕຽມໄວ້　ພາຍໃນຣະວັງຖື່
ຖືກບັກມັນບໍ່ດີ　ມັນຊິຕີວະເຈົ້າລາຍພາງ

ມັນຊິ ລໍ້ເຍາະຫຼົ້ນ ເຫັນແປ້ວເພີ່ນຊິຫຽັນ ເຈົ້າແລ້ວ
ບັດນີ້ ຈັກໄດ້ຈາເຖິງທ້າວ ຄົດທະຈັ້ມນອຍນາດ
ທ້າວກໍ ຜັນຜາດເຕັ້ນ ງ້າຊາງຂີ່ເມືອ
ພໍເມື່ອ ໄປເຖິງຫ້ອງ ຈຳປານັ້ກຄະເຣດ
ສະຖິດເນກຟ້າ ນະພາພູ້ນບໍ່ລືງ
ເມື່ອນັ້ນ ຄົດທະເນກທ້າວ ຕືນພີ່ແລເຫັນ
ພຣະໄທຊືງຄິດ ຮ່ຳເພິງພິຈານແຈ້ງ
ອັນນີ້ ຮ້ອຍທີ່ຄົດທະຈັ້ມນອງ ກະນິຖາກັ້ບຕ່າວ ມ້າແລ້ວ
ຄືງຈັກລູລາບໄດ້ ຂອງຄ້າຣິດທິ ແທ້ແລ້ວ
ຄືງຈັກໄປຕາມໄດ້ ຂອງດິດອນພໍ່
ກູຈັກ ຂໍແບ່ງນ້ອງ ປັ້ນໃຫ້ກັນ
ຄົນແມນນ້ອງບໍ່ໃຫ້ ກູຊິເຣ້ວຊິງຍາດ
ໃຜບໍ່ຄືຂນ້າດກາ ຕາຍແລ້ວກໍ່ຊາງມັນ
ພໍເມື່ອ ທ້າວຮ່ຳແລ້ວ ສະເດັດດ່ວນເວ້ຫາ
ເຖິງທີ່ງ້າພາຍສານ ກ່າວຈາຖາມນ້ອງ
ມີຈັ້ບໄວ ງາສານເຈົ້າຕິ
ນ້ອງຫາກ ຕາມພໍ່ໄດ້ ອັນໃດແທ້ຕ່າວມາ ນ້ອງເຮີຍ
ນ້ອງຈື່ງມາແບ່ງໃຫ້ ປັນພີ່ຊາຍຄືນຖ່ອງ
ພີ່ຮັກສາມິ່ງບ້ານ ຄອງເຈົ້າພ່ຳນານ
ເມື່ອນັ້ນ ຄົດທະຈັນເຈົ້າ ຈາຈິງແຈ້ງແຈຍ
ອ້າຍປ່າເວົ້າ ຄຳນົບຄວນ ອ້າຍເອີຍ

ສາວເມື່ອໄປຊວນອ້າຍ ບໍ່ເອົາສິ່ງຈັກຢ່າງ
ເຖິງວ່າໄດ້ແມ່ຊາງ ມາແຫ່ກໍ່ບໍ່ເອົາ ວ່າເດ
ບັດນີ້ ສັງຊິມາຂໍຊູ້ ຄໍາບໍ່ອາຍອ້າຍໂງ່
ນ້ອງຫາກ ຕາມຢາກແທ້ ພຣະອວນອ້າຍປ່າຄອງ ໄດ້ທ້ອນ
ຊາດທີ່ ເປັນກະສັດເຊື້ອ ໃຫ້ສັດຈິງຈາແມ່ນ
ຢ່າໄດ້ຕົວະຫຼາຍລົ້ນ ຫຼາຍປົ້ນບໍ່ແມ່ນຄອງ ພີ່ເອີຍ
ເມື່ອນັ້ນ ລັດທະເນກອາຍ ຟູມຄຽດຂຶ້ນມະໂນ
ມືຂວາຈັບງາສາມ ຊາກຊິງບ່ານ້ອງ
ດູດິ່ງຫມັ້ນ ບໍ່ມີຕິງກະເດັ້ນອອກ
ອ້າຍກໍ ເຕັ້ນໃສ່ນ້ອງ ທະຍານເຂົ້າລວດຟັນ
ລັດທະຈັນຟ້າວ ວາງພຣະແສງຮັບພີ່
ພຣະຂັນດາບງ້າວ ຟັນເຂົ້າສູ່ທາງ
ແຕ່ບໍ່ມີຖືກຕ້ອງ ເຕັ້ນໄລເຮວຮີບ
ເປັນສິງຄາມ ຊວງຊິງວ່າຊ້າງ
ສອງກໍ ພັນທະນັງແຫມ້ນ ດິງວາຍາດແຍງ
ພຣະແສງດາບງ້າວ ຟັນເຂົ້າບໍ່ຫັນ
ຊູ້ຕົນຊູ້ມີຣິດເດດແທ້ ທຽມກັນກ້າເກີ່ງ
ສິງຄາມສອງພີ່ນ້ອງ ກູມປ່າຕ່ອຍຕີ
ເທື່ອນີ້ ງາສານຊ້າງ ທັງສອງບໍ່ຊູ່ຊວຍ
ເພາະເພື່ອ ສອງພີ່ນ້ອງ ງາຊ້າງບໍ່ຊວຍໃຜ
ເມົາແຕ່ສົມພານທ້າວ ທັງສອງເຄີຍຮ່ວມ

ຫາກຈັກ ຊິ່ງຊວງໄດ້ ສານຊ້າງຂີ່ຊົງ
ສອງກໍ ກຸມກັນຂາ ຕະລູມບອນບຸກໃຫ່ຍ
ເໜືອແລະໃຕ້ ຟັນສູ່ຊູທາງ
ລາງເລົ່າ ເຫົາຣິດໜ້ອມ ເປັນຫົວຕູດນາຄ
ຫຼາຍມາກລົ້ນ ທະຍານເຕັ້ນໃສ່ກັນ
ຂາຟັນເປື້ອງ ມາໂຕກູດຂາດ
ຕົກໃສ່ພົ້ນ ຕາຍແລ້ວບໍ່ຄືນ
ສອງກໍ ນິຣະມິດໃຫ້ ຫົວພາຍຊ້າງໃຫ່ຍ
ທີ່ລະລ້ານ ຈົນໃງ້ໄລແທງ
ສອງກໍ ແຍງຫົວຊ້າງ ພຣະສອນຕາວຕັດຂາດ
ຖືກພາບລານ ທະລາຍລົ້ມເກື້ອນພັງ
ຕົກສູ່ພົ້ນ ໄພພະນອນພາຍລຸ່ມ
ຕົກຖືກ ຊຸ່ມໝູ່ໄມ້ ຈັນແດງເຂັ້ມປ່າໝາ
ເຫິງນຸ່ມລ້ຳ ກາຣະດູ້ແຖມຖ່າຍ
ອັ່ນວ່າ ຈັນປ່າໄມ້ ເປັນບານມື້ງເມືອງ
ຈິ່ງໄດ້ ເອົານາມຊ້າງ ພາຍສາບລ້ານມື້ງ
ຕົກລົງໃສ່ປ່າໄມ້ ຈັນແດງໄດ້ໃສ່ນາມ
ຊື່ວຽງຈັນລ້ານຊ້າງ ປາງປະຖົມບໍຣົມກາວ
ມີແຕ່ ຄາວລັ້ງພູ້ນ ໂບຮານເຖົ້າກ່າວມາ ທ່ານເຮີຍ
ສອງບໍ່ຍອມໃຜແທ້ ຊິງກັນກວນຍາດ
ຣິດເດດກ້າ ສອງເຈົ້າບໍ່ຖອຍ

| | | |
|---|---|---|
| ມີແຕ່ | ກອຍໃຈຈິດ | ເຈືອດຟັນເພ້ມາງ |
| ຢາງພ່ອງ | ທຳຣິດທີໃຫ້ | ເປັນຮູບຣາຊສີ |
| | ມີເຫຼືອຫຼາຍ | ອະເນກນອງເຫຼືອລົ້ນ |
| | ອີນລະທີນຫຼອງ | ເວຫາອາກາດ |
| | ສອງຟາກຂາງ | ຖາງສູ້ທົ່ງແຫງ |
| | ທັງສອງກ້ຳ | ຕາວຟັນຕັດຜາ |
| | ດາບຖືກຕ້ອງ | ຝູງເນື້ອເກື່ອນລົງ |
| | ຕົກລົງລົ້ນ | ເຫຼືອດິນແດນປ່າ |
| | ຖືກປ່າໄມ້ | ກູງຕົ້ນມູ່ນທະລາຍ |
| ພໍເມື່ອ | ເຫິງນານລ້ຳ | ກັບກັນແຖມຖ່າຍ |
| | ຫຼາຍສັຕວັດເຂົ້າ | ເດີນເຕົ້າຕາມາ |
| ຍັງມີ | ສອງເຂືອເຖົ້າ | ຜົວເມັຽເປັນຂ້າໄຖ່ |
| ສອງກໍ | ໄດ້ຫຼົບລົ້ | ລົບເຈົ້າລັກໜີ |
| | ໄປແປງສ້າງ | ມາສ່ວນຮົ້ວໄຮ່ |
| | ໃນປ່າໄມ້ | ກູງກວ້າງແຄ່ດົງ |
| ສອງບໍ່ | ມີບຸດຕາ | ສືບພົງພັນເຊື້ອ |
| | ເມັຽຖາມເອີ້ນ | ຜົວຕົບວ່າພໍ່ |
| | ຜົວຕອບເອີ້ນ | ເມັຽເຈົ້າວ່າແມ່ຄູນ |
| | ຂ້າພົ້ນຈາກລ້າ | ເຂົາເອີ້ນວ່າໄທ |
| ອັນວ່າ | ປ່າໄມ້ນັ້ນ | ກາຍເກີດເປັນເມືອງ |
| ຊົ່ວາ | ກູງສີອະຍຸທຍາ | ສືບມາໃຫ້ເຮົາຮູ້ |

ເມືອງນີ້ ເອົານາມເຊື້ອ ຣາຊາສີຕົກໃສ່
ຖືກຕົ້ນໄມ້ ງົວກວາງປ່າໜາ ເຈົ້າເຮີຍ
ເມື່ອນັ້ນ ສອງນ້ອງອ້າຍ ເຊົາແຄມພັກເມື່ອຍ
ຫາຍເມື່ອຍແລ້ວ ທະຍານເຕັ້ນໃສ່ກັນ
ໃຜບໍ່ ທັນຫຼັງໃຫ້ ເສັຽທີພາດທ່າ
ຕ່າງກໍຫຼີບຫຼີກເວັ້ນ ຄົມງ້າວບໍ່ຖືກໃຜ
ແລ້ວຈຶ່ງ ນິຣະມິດໃຫ້ ເປັນໂສມສັດຕ່າງ
ເປັນຫມູ່ມ້າ ພໍລ້ານຫຼາກຫຼາຍ
ອັນວ່າ ອາຊະໄນມ້າ ເຫັນກັນຕະຖີບ
ມ້າ ຕໍ່ ມ້າ ແຫ້ນຫາວໃສ່ກັນ
ສອງກໍ ຟັນຄໍມ້າ ບັນໄລກູດຂາດ
ຕົກໃສ່ພື້ນ ກອງຂື້ນທົ່ວພູ
ອັນວ່າ ຣິດທີມ້າ ເປັນໄຟກັບເກີດ
ໄຫມ້ຫມູ່ໄມ້ ໄພກວ້າງລຸກລາມ
ປາງນັ້ນ ຍັງມີເທພເຈົ້າ ຣັກສາດອຍດົງປ່າ
ນິຣະມິດຢາດນ້ຳ ຝົນຟ້າຫຼັ່ງລົງ
ອັກຄີ້ຮູມ ເລີຍຫາຍມູດມອດ
ເກີດເປັນ ໂພຊະນັ່ງເຂົ້າ ຂອງກິນມີມາກ
ເປັນໄຮ່ກວ້າງ ເຫຼືອຊ້ຳຊົ່ວຕາ
ມີຫມູ່ ຜາລາລົ້ນ ເຫມືອນຄົນແປງປູກ
ຝູງພິດສະຫມາກໄມ້ ມີພ້ອມຊູ່ອັນ

ຄາວນັ້ນ ຍັງມີກຸມະຣີນ້ອຍ ໂສມງາມແມນຫຼໍ<br>
ເປັນລູກເຈົ້າ ແຖນເຮົາຢູ່ເທິງ<br>
ນາງນັ້ນ ນາມມີ້ທອງ ຊາຍຖືງລັກລອບ<br>
ກົວແຕ່ ພຣະພໍ່ຮູ້ ຊິສູນຮ້າຍໂກດເຄັມ<br>
ສອງກໍ ຊວນກັນໄດ້ ຫຼີບໜີພຣະພໍ່<br>
ຕາມໄຕ່ເຕົ້າ ເຖົ້າໄມ້ລວງລຶງ<br>
ລຶງຈາກ ເມືອງແຖນເຖົ້າ ຕາມເຄືອເຂົາກາດ<br>
ມາສູ່ພື້ນ ພາຍໃຕ້ລຸ່ມດິນ<br>
ເລີຍມາ ເຫັນສວນກວ້າງ ກະທຳການປູກຫວານ<br>
ກະສິກອນກໍ່ສ້າງ ຖາງຮົ້ວໄຮ່ນາ<br>
ຕໍ່ມາບຸດຕານ້ອຍ ຂອງນາງເລີຍອອກ<br>
ອອກສືບເຊື້ອ ເມືອໜ້າໜໍ່ແໜວ<br>
ເທິງນາມລ້ຳ ເປັນເມືອງບ້ານໃຫຍ່<br>
ຊື່ວ່າ ເມືອງມ່ານກວ້າງ ນາມຕັ້ງຄືບພາ ເຈົ້າເອີຍ<br>
ເທິງນາມລ້ຳ ຈຶ່ງເອົານາມມາໃສ່<br>
ວ່າເມືອງພະມ້າ ດຣວມສືບມາ ເຈົ້າເອີຍ<br>
ສອງກໍ ຍັງກຸມຢ້ຳ ຟັນຮັກບໍ່ຢຸດຢ່ອນ<br>
ຢູ່ກາງອາກາດກວ້າງ ເທວະທ້າວສິ້ນສາຍ<br>
ໃຜບໍ່ ມີຫານຫານ ຫຼີບໜີລີ້ຊ່ອນ<br>
ຫ້າມກໍ່ຫ້າມບໍ່ໄດ້ ກົວຢ້ານແລ່ນໜີ<br>
ເຂົາຈຶ່ງ ໄປທູນໄທ້ ອິນຕາເທວະຣາດ

ໄຫ້ວບາດພົ້ນ
ຍັງມີ ກູມານ້ອຍ
ຈັກວ່າ ເປັນລູກທ້າວ
ຝູ້ງຂ້າ ຫ້າມບໍ່ໄດ້
ຈຶ່ງໄດ້ມາຫາພຣະ
ຂໍພຣະສົງສານຂ້າ
ປົກເຫຼື່ອມກັ້ງ
ເມື່ອນັ້ນ ສັກໂກໄທ້
ທອດພຣະເນດສົ້ງຢ້ຽມ
ອັນວ່າພັ້ນຕ້ອງ
ອັນນີ້ ຫາກແມ່ນບຸດຕານ້ອຍ
ກູມຍາດຊ້າງ
ອິນຈຶ່ງ ຂັບຊາໃຫ້
ໃຫ້ທ່ານ ລົງໄປຫ້າມ
ໃຫ້ທ່ານ ແນະບອກໃຫ້
ຢ່າໄດ້ສົງຄາມຣົບ
ເມື່ອນັ້ນ ວິສູກັມເຈົ້າ
ມາຮອດໃຫ້
ຂັດນີ້ ອິນທິຣາດໃຊ້
ວ່າໃຫ້ເຮົາໄປຫ້າມ
ບໍ່ໃຫ້ເຮວຣົບພຸ່ງ

ອິນເຈົ້າຜໍ່ຄອຍ ແຄ້ທອນ
ຮູນເລວຣົບຕໍ່
ນະຄ້ອນກວາງແຫ່ງໃດ ບໍ່ຮູ້
ກົວຢານເດດບາ
ເພິ່ງພາຄາວນີ້
ກູມາຜາຍໂຜດ
ຝູ້ງຂ້າຜໍ່ຄອຍ ແຄ້ທອນ
ອິນທາເທວະຣາດ
ລົ້ງໃຕ່ສ່ອງຍານ
ສ່ອງຍານເຫັນເຫດ
ຄົດທະນາມທັ່ງຄູ່
ຊິ້ງຂ້າເພື່ອງາ
ວິດສູ້ກັມການດ່ວນ
ສ່ອງນ້ອຍຢ່າລົບເຮວ ວ່າເມີ
ສອງເຂືອສະດັບຖື່
ແຍ່ງຊິງວ້າຊາງ
ຍໍກອນຮັບພາກ
ສູວັນພຍາເວດ
ເຮົາໃຫ້ດ່ວນລົ້ງ
ກູມານສ່ອງອອນ
ກວນຂ້າແກ່ກັນ

ເມື່ອນັ້ນ ວອດສູວັນຈາຕ້ານ ຈາຂູນໄຂບອກ
ໃຫ້ຮີບຕຶກແຕ່ງຕັ້ງ ລືມຂັ້ນຢ່ານານ
ດຽວນີ້ ຍັງມີກຸມານນອຍ ທັງສອງຮີບຕໍ່
ແຕ່ແຜ່ນພົ້ນ ພາຍໃຕທິບູຄືນ
ຈີນເຖິງເຫົ້າ ແດນເຮົາຂ້າມເຂດ
ມັນຊິ ລັດລ່ອງເຂົ້າ ເຖິງເຫົ້າຮອດເຮົາ ນັ້ນແລ້ວ
ຊຸມກໍໂດຍຄຳເຈົ້າ ວອດສູວັນຕັດບອກ
ຕຶກແຕ່ງຕັ້ງ ລືມຂັ້ນສູ່ເຊິງ
ມີທັງ ລືມພວນຮົ້ ໂປງລາງແຂນທຶ່ງ
ລືມມິດແຖແລະພ້າ ເຫຼັກກາພອງຂວານ
ມັນກໍ ຫວນງູ ເມໂຄໄຫຼຜ່ານ
ທິດງກອງ ລືມຟ້າລ່ອງບິນ
ລືມກໍ ແຍງຍັງຫາວ ທັງສອງພັດຜ່າ
ພັດແກ່ວງເປື້ອງ ສອງຫາວຜ່າກາງ
ລືມກໍ ຕັດຍັງຫາວ ທັງສອງນ້ອງພີ່
ຄັດທະເນກອາຍ ຄໍກັ້ງຂາດກະເດັນ
ຄັດທະຈັນນ້ອງ ບໍ່ຫັນຕາຍຍັງຢູ່
ແຕ່ຫາກ ເປັນປ່ວງບ້າ ລະເມີເພ້ຫຼາຫຼຸ່ງ
ຫ້າວບໍ່ຖອຍຫຼັງກ້ຳ ລືມຫຼ້ວງຟັນຜາ
ພຣະຂັນແກ່ວງເປື້ອງ ລືມກ້າຂາດຄໍ
ຫົວລືມເຫົ້າ ຕິດຕາວກູດຂາດ

| | | |
|---|---|---|
| | ຕົກລົງສູ່ພື້ນ | ພາຍໃຕ້ຫວິບຕົນ |
| | ລົມະປ່າໄມ້ | ພັດງ່າສາຂາ |
| ດົນຈຶ່ງ | ວ່າລົມຫົວກູດ | ສິບມາດຮ້ອມ |
| ອັນແຕ | ສີສະວາຍ | ລົມຕີເດຂາດ |
| | ຕົກສູ່ພື້ນ | ພະລານກ້ວາງແຄ່ເຂົາ |
| ເຂົານັ້ນ | ຊື່ວ່າເຂົາຈອມຫົວ | ສິບມາດຮ້ອມ |
| | ພະລານຫີນກວ້າງ | ລວງຍາວຍະແຕກ |
| | ຫົວແຫ່ງຫ້າວ | ເລີຍກົ້ງລວງລົງ |
| | ກັບເກີດຂຶ້ນ | ເປັນຫົວມາກໃຫຍ່ |
| | ປາກໃຫຍ່ກວ້າງ | ເຫຼືອລ້ຳລົ້ນປະມານ |
| | ຈຶ່ງຂູ້ມານມານເອີ້ນ | ມຸກຂາພົດຊື່ |
| | ວ່າອ້າຍໂຕ່ງກ້ວາງ | ດົນເອົ້າສິບມາ |
| ພໍເມື່ອ | ສີສະບາເຈົ້າ | ເກີດເປັນຫົວນາກ |
| ແລ້ວຈຶ່ງ | ຄ່ານທານ້ຳ | ມະຫິງອງຫ້ວຍແອ່ນ |
| | ແມ່ນ້ຳນັ້ນຊື່ວ່າແມ່ນ້ຳຄານ | ສິບມາດຮ້ອມ |
| | ເພາະກາຍາເນື້ອ | ລົມແຂ້ງຕຶດຂາດ ປາງນັ້ນ |
| | ຕົກສູ່ພື້ນ | ຜາລານແກ້ນແຂງ |
| | ໂລຫິດຫ້າງ | ເຫມີອດິນແດງເດືອດ |
| | ເຕັ່ມດ້ານດາວ | ດົງກ້ວາງແຄຝູ່ |
| ພູນັ້ນ | ຈຶ່ງໄດ້ມີນາມເຕົ້າ | ວ່າພູເຂົານ້ຳເຕົ້ງ |
| ເພາະວ່າ | ເລືອດທ່ອນຫ້າວ | ແດງເຂັ້ມດັ່ງຝາງ |

ກາຍຂອງທ້າວ ຕົກລົງຜາແກ່ນ
ແລ້ວຈຶ່ງຟັ້ງ ທະຍານຂັ້ນຊົ່ວສູງ
ຕົກລົງຊູ້ ສອງທີຂອງເກົ່າ
ຜາຈຶ່ງ ຍະແຕກມ້າງ ກາຍທ້າວຫຼົ່ມລົງ
ພຣະກາຍເລີຍກັບ ເກີດເປັນຫົວນາກ
ຊື່ວ່າ ສັງຂາຣະນາກແທ້ ກາຍທ້າວເກີດເປັນ
ອັນທີ່ ຕົກຜາແກ່ນກ້າ ກາຍທ້າວຫຼົ່ມຫົວ
ເລີຍເລົ່າກັບ ເກີດເປັນຫົວນາກ
ທີ່ອັນນັ້ນ ກໍຍັງປາກົດຊື່
ຊື່ວ່າ ຫຼົມເລີຍແກ່ນທ້າວ ດຽວນັ້ນຕໍ່ມາ ເຈົ້າເອີຍ
ບັດນີ້ ຈັກໄດ້ກ່າວເຖິງທ້າວ ຄັດທະຈັນນ້ອຍໜໍ່
ຍັງຕໍ່ສູ້ ລົມກ້າບໍ່ຖອຍ
ມະຫາລົມເຈົ້າ ກະດິງຫວງແຮງມາກ
ກວັດແກ່ວງເປື້ອງ ບາທ້າວປິ່ນປິວ
ທ້າວກໍ ຍໍຍັງວ້າວ ພຣະແສງຂັນຟັນຜ່າ
ລົມຂາດບັ້ນ ທັນປີ້ນມູ່ນທະລາຍ
ຕົກລົງພັ້ນ ປັດທະພິພາຍລູ່ມ
ພັດໝູ່ໄມ້ ເປັນກ້ອນໝູ່ລົມ
ຄົນວ່າ ລົມຫົວກູດ ສິບມາດຽວນີ້
ເມື່ອນັ້ນ ວິສູກັມເຈົ້າ ເທວະບຸດຕົນປະເສີດ
ເຫັນໝູ່ລົມຜ່າຍແພ້ ກົວຢ້ານເດດບາ

ຈຶ່ງທະຍານຕີ້ນເຂົ້າ ເທີມບ້າຊຸມກອດ
ເທາະທອບຊູ້ມ ເມືອງຟ້າຂວາງສວັນ
ເອົາໄປໃຫ້ ອິນທາທ້ອດພຣະເນດ
ແລ້ວຈຶ່ງ ສົ່ງໂສດນ້ຳ ຈັນທະຕູ້ສ່ວຍສີ
ອັນວ່າ ຜິວຫູລີ້ກົ້ວ ຫມອງມື້ວເກືອກຂີ້ຝຸ່ນ
ນ້ຳທິບລາງ ປະສີງໃຫ້ອາບສີງ
ເອົາທັ້ງເຂົ້າ ໂພຕ້າທິພຫຼາກ
ຕົກແຕ່ງໃຫ້ ບາທາວຖ່າຍໂສມ
ອິ້ນຈຶ່ງ ໂອກາດໃຫ້ ເທວະບຸດຕັ່ດບອກ
ໃຫ້ທ່ານ ຕົກແຕ່ງຕັ້ງ ດາເມື້ອແຕ່ງຕົວ
ເຮົາຈັກ ເອົາຍັ້ງທາວ ກູມານບູຕຣາດ
ລົງສູ່ຫອງ ຈຳປາກວ້າງດັ່ງເດີມ
ຈັກສລອງສເລີມໃຫ້ ພົນເມືອງນອມສ່ວຍ
ອິດເດດກາ ລີລ້ຳສາດສີນ
ເມື່ອນັ້ນ ເທວະບຸດເຈົ້າ ຟັງພຣະອິ້ນຕັ່ດບອກ
ເຕີມທຸກຂັ້ນ ປະສີງໃຫ້ແກ້ບາ
ຝູງຫມູເທພາ ຊື່ນໃຈດອມທາວ
ເອົາກັນເຂົ້າ ພະລານຫູ້ວງເຕັ່ມຂວາງ
ດາວະດິງໂຍດກ້ວາງ ເຕັມແຫນນເທພດາ
ເມື່ອນັ້ນ ວິສູກັມເຈົ້າ ເທວະບຸດຕົນປະເສີດ
ນິມິດຜາສາດກ້ວາງ ຈັ້ນນອຍຂື່ໃສ

| | | |
|---|---|---|
| | ເຖິງຍາມແລ້ວ | ອິນທາສະເດັດອອກ |
| | ຝູງໝູ່ເທພທ້າວ | ແຫນທ້າວແຫ່ຕາມ |
| ແລ້ວຈຶ່ງ | ມາເຖິງຫ້ອງ | ວາສ້ານຊາງພ໌ |
| | ຢູດຢູ່ຖ້າ | ບາຫ້າວບ່ໜີ |
| ອິນຈຶ່ງ | ເອົາງາຊ້າງ | ສະເດັດລົງຕາມບາດ |
| | ເຂົ້າສູ່ດາວ | ແດນຊູນຂວາງນະຄອນ |
| | ແລ້ວຈຶ່ງໃຊ້ | ເທພາສະເດັດດ່ວນ |
| | ບອກຂ່າວໃຫ້ | ນະຄອນໃຕຝ່າຍເໜືອ |
| ໃຫ້ເອົາ | ມາໂຮມເຕົ້າ | ຈຳປານັກຄະເຣດ |
| | ເຈັດພ່ຳນັ້ນ | ມາພັ້ໃຫ້ດ່ວນເຖິງ |
| ກັບທັງ | ຕັກກະສິລາກ້ວາງ | ນະຄອນຫຼວງພຣະພ໌ ບາມັ້ນ |
| | ຈຶ່ງໄປບອກຂ່າວໃຫ້ | ບາຫ້າວດ່ວນພາ ນັ້ນຫອນ |
| ເຮົາຈັກ | ຫົດສົງໃຫ້ | ລັດທະຈັ້ນນ້ອຍໜໍ່ |
| | ຈັກກະວັດຕິຣາດໃຫ້ | ເປັນເຈົ້າເຂື່ອນແຂວງ |
| ນັບແຕ່ | ຊຸມພູກ້ວາງ | ສົມບູດຫຼວງເປັນເຂດ |
| | ຮອນເອັດປະເທດທ້າວ | ມານອມສ່ວຍສິ້ນ |
| ເມື່ອນັ້ນ | ເທພທ້າວ | ສະເດັດໄປໂດຍດ່ວນ |
| | ບອກສ່ຳເຊັ້ອ | ແນວທ້າວທົ່ວແດນ |
| | ຕາມຄຳເຈົ້າ | ອິນທາມີອາດ |
| | ຄ້ອນວ່າແລ້ວ | ກັບຟ້າວຕ່າວຄືນ |
| | ເຖິງນະຄອນຈຳປາ | ກາຍກອນຖອິນໄຫ້ວ |

| | | |
|---|---|---|
| ແລ້ວຈຶ່ງ | ພາກັນສ້າງ | ປະຈຳຫຼວງຫຼັງໃຫ່ຍ |
| | ຜາສາດກວ້າງ | ເຈັດຊັ້ນຊໍ່ແສງ |
| | ຜາມຫຼວງກວ້າງ | ພັນວາປູ່ບແທກ |
| | ຈັດແຈ່ງໄວ້ | ມີພ້ອມຊູ່ອັນ |
| ມີທັງ | ກາຣະພິກຕົ້ນ | ຣິມຜານ້ຳທັ່ງສີ່ |
| | ຊູ່ແອ່ງຕັ້ງ | ຕາມຂ້າງຫວ່າງຖນົນ |
| | ນໍຣະຄາກວາງ | ວຽນຜານຈົນຣອບ |
| | ສົບສີ່ງຊ້ອນ | ດວງໄມ້ຫື່ນຫອມ |
| | ແລດູແຖມຖົ້ນກ້ວຍ | ລຽນເຄືອເດັ່ຽຣະດາດ |
| | ປູ່ກກ້ວຍອອຍ | ສອງຂ້າງຫວ່າງທາງ |
| ມີທັງ | ກ້ວຍນ້ຳຫວ້າ | ຕີນເຕົ່າຫມູ່ສີ |
| | ກ້ວຍທະນີໃນ | ໄຂ່ຫອມຫວ່ານຊ້ອຍ |
| ມີທັງ | ກ້ວຍຕີບງ້າວ | ຫນ່ວຍໃຫ່ຍພາໂລ |
| | ມັນກໍຄຳແດງສຸກ | ແດ່ທາງຖນົນກວ້າງ |
| ອັນວ່າ | ທັງປວງຂ້ອຍ | ຈີໂນເອົ້າປູກ |
| | ລຽງລະດັບຫ່ວາງກ້ວຍ | ສວຍໂກເລາະຖນົນ |
| | ເປັນເພື່ອເທວະບຸດເຈົ້າ | ອິນພົມມີ້ມາກ |
| | ຖນົນໃຫ່ຍກວ້າງ | ຜານແລ້ວບໍ່ນານ |
| ຟັງຍິນ | ຕື່ນໆກ້ອງ | ສຽງເສບດົນຕີຣ ພູ້ນເຍີ |
| | ຝູງນະຄອນຄາວໄກ | ທົ່ວແດນມາຟ້າວ |
| | ເພື່ອຢາກມາເຫັນຫນ້າ | ບາບູນບຸຕຣາດ |